# ໂຮມເລື່ອງສັ້ນ

ອຸທິນ ບຸນຍາວົງ



# ຍິ້ມກ້ານ

ໂຮມເລື່ອງສັ້ນ

ຂອງ

ອຸທິນ ບຸນຍາວົງ



ສຳນັກພິມຈຳໜ່າຍ ສປປ ລາວ

1979

ອຸທິນ ບຸນຍາວົງ

# ສາລະບານ

ເລື່ອງ ຫນ້າ


| | | |
|---|---|---|
| 1. | ບົ່ນບັ້ນ | 1 |
| 2. | ເບື້ອງຫລັງ | 19 |
| 3. | ພໍ່ແຫ້ | 40 |
| 4. | ນ້ຳໃຈເອື້ອຍພຽງດີ | 55 |
| 5. | ນູນມັນແພງ | 91 |
| 6. | ຈ່ຳປາຫນ້າບ້ານ | 104 |
| 7. | ຊຸກບູ້ | 113 |

# ຍິ້ມນັ້ນ

* ຂ້ອຍເຫັນນາງຍິ້ມຈັ່ງຊັ້ນມາແຕ່ໃດໆ.

ໃຜໄດ້ຜ່ານໄປຕາມຖະໜົນສາມແສນໄທ ຍ່ານຄຸ້ມເຈົ້າອະນຸກໍຄົງໄດ້ເຫັນນາງຍິ້ມແບບນັ້ນ ຕະຫລອດຕັ້ງແຕ່ໃດມາ, ເປັນຮອຍຍິ້ມຢູ່ໃນຮູບໃບໃຫຍ່ຊຶ່ງຕິດເອົາໄວ້ໃນຕູ້ແກ້ວຂອງຮ້ານຖ່າຍຮູບ. ຍິ້ມຂອງນາງລະມຸນລະໄມ ເບືອກເປັນເໝືອນດອກໄມ້ທີ່ມີປົດນ້ຳຄ້າງຍາມລະດູບານໃໝ່, ບໍລິສຸດປອດໃສ ຊວນໃຫ້ສະບາຍໃຈເມື່ອໄດ້ເຫັນ. ຜົມດຳເກົ້າສູງຂຶ້ນໄປໃຫ້ຮັບກັບໃບໜ້າພໍດີ. ດວງຕາມີປະກາຍສົດໃສຍາມໃດກໍປະກົດວ່າຈະທັກທາຍກັບທຸກຄົນ ທີ່ຫລຽວເບິ່ງນາງ. ດັ່ງນັ້ນ ຈຶ່ງບໍ່ເປັນທີ່ສົງໄສເລີຍວ່າຜູ້ຄົນທີ່ຜ່ານໄປຕາມຖະໜົນເສັ້ນນີ້ ໂດຍສະເພາະຜູ້ບ່າວຜູ້ແຜວຕ້ອງໄດ້ງວາກເບິ່ງຈົນຫລຽວຫລັງ ເທື່ອໃດ ກໍ່ເທື່ອນັ້ນ. ຮູບຂອງນາງຈະຕ້ອງຕິດຕາຕິດໃຈເຂົາເຈົ້າໄປເປັນເວລາດົນໆບາງ

ຄົນກໍອາດເກີດອາລົມເພີ້ຝັນໄປໄກ.

ນອກຈາກເຈົ້າຂອງຮ້ານຖ່າຍຮູບແລ້ວ ຄົງບໍ່ມີໃຜຮູ້ວ່າ ນາງບຶ້ມປຸ່ຫັ້ນຕັ້ງແຕ່ເວລາໃດ. ກາຍໄປກາຍມາກໍ່ເຫັນປຸ່ ຈັ່ງຊັ້ນແລະນາງກໍບຶ້ມປຸ່ຈັ່ງຊັ້ນເລີຍໆ.

ຂ້ອຍກິດຢາກເຫັນຕົວຈິງຂອງນາງ ເຫັນ ຢ່າງ ໃກ້ໆ ແລະດົນໆ, ຂ້ອຍຈະແຕ້ມຮູບນາງແຕ້ມຮອຍບຶ້ມລະມຸນລະ ໄມນັ້ນຢ່າງສຸດອົກສຸດໃຈເພື່ອຫວັງໃຫ້ເປັນຜົນງານທີ່ເອກ ອ້າງຂອງວົງການສິລະປະລາວ. ຂ້ອຍຄຶດວ່ານາງ ຕ້ອງ ເປັນລູກເຈົ້າຫລານນາຍຫລືເປັນລູກຜູ້ຮັ່ງມັ່ງມີ, ຊີວິດຂອງ ນາງຕ້ອງມີແຕ່ຄວາມສະດວກສະບາຍ ໄປທາງໃດກໍມີແຕ່ ຄົນຫຸ້ມຫໍ່, ຜູ້ເປັນພໍ່ແມ່ຕ້ອງຮັກແພງນາງປານຫນ່ວຍຕາ ແລະ ຄົງເຮັດທຸກວິທີທາງເພື່ອບໍ່ໃຫ້ນາງໄດ້ຮັບຄວາມລຳ ບາກກາກກ່ຳ.

ແນ່ນແທ້ ນາງເປັນລູກເຈົ້າຫລານນາຍ. ສົມພັນຫມູ່ ຂອງຂ້ອຍບອກໃຫ້ຊາບວັ່ນຫນຶ່ງ ຂະນະທີ່ເຮົາ ທັງ ສອງ ຍ່າງໄປຕາມຖະຫນົນສາມແສນໄທ ແລະ ຜ່ານກາຍຫນ້າ ຮ້ານຖ່າຍຮູບດັ່ງກ່າວໄປ.

"ສາວບຶ້ ຊື່ ມາລາທິບ ເຄີຍເປັນເທພີໃນງານລະເຫລີມ

ສະຫລອງປີໃຫມ່ສາກົນ ໑໙໗໘ ທີ່ໂຮງແຮມລ້ານຊ້າງ " ສົມພັນວ່າ.

" ເຮັດໃດໂດຮູ້ ?" ຂ້ອຍຖາມ ແລະ ຮູ້ສຶກຕື່ນເຕັ້ນເລັກນ້ອຍ.

" ບ້ານປູ່ໃກ້ກັນ ພໍ່ຂອງລາວເປັນອະດີດລັດຖະມົນຕີ. ລາວເອົາຜົວອາເມລິກາ ແລະຫນີໄປກັບຜົວແລ້ວ ".

" ຊັ້ນຕີ... " ຂ້ອຍເວົ້າແບບນີ້ອອກມາເພາະຮູ້ສຶກຜິດຫວັງເລັກນ້ອຍ.

" ຜູ້ໃດກໍ່ຈົ່ມເສຽດາຍ. ລາວເອງກໍບໍ່ຢາກໄດ້ດອກແຕ່ຂືນພໍ່ແມ່ບໍ່ໄດ້ " ສົມພັນອະທິບາຍຕໍ່.

ຂ້ອຍຍ່າງໄປດ້ວຍບາດກ້າວບໍ່ຫນັກແຫນ້ນ ແລະ ຟັງການບອກເລົ່າຂອງສົມພັນດ້ວຍຄວາມປາກຮູ້ຢາກເຫັນ.

ສົມພັນເລົ່າສະພາບບາງຢ່າງກ່ຽວກັບການແຕ່ງດອງຂອງນາງກັບອາເມລິກາຜູ້ນັ້ນວ່າ ຈັດຂຶ້ນຢ່າງກະທັນຫັນເມື່ອກາງປີ ໑໙໗໕. ເວລານັ້ນຂະບວນປະທ້ວງຂອງນັກສຶກສາ–ປະຊາຊົນປຸ່ນະຄອນວຽງຈັນ ເກີດຂຶ້ນຢ່າງລຽນຕິດລຽນຕໍ່. ພໍ່ຂອງນາງຫລີງເຫັນໄພທີ່ຈະມາເຖິງຄອບຄົວ ແລະ ອີກຢ່າງຫນຶ່ງກໍ່ຄືງຊີແມ່ນ " ມ່າເຂົາໄວ " ທີ່ເມືອງ

ອາເມລິກາ ຈຶ່ງພ້າວຈັດການໃຫ້ລູກສາວເອົາ ກັບ ຜູ້ຊ່ຽວຊານອາເມລິກາທີ່ເຊົ່າເຮືອນຫລັງໜຶ່ງຂອງເພິ່ນ. ອາເມລິກາຜູ້ນີ້ໃກ້ຈະໝົດກຳນົດໜ້າທີ່ຢູ່ໃນເມືອງລາວແລ້ວ;

ຫລັງຈາກແຕ່ງດອງໄດ້ອະທິດປາຍ ການປະທ້ວງກໍລະເບີດຂຶ້ນຢູ່ໃນອົງການປູເສດ*. ພະນັກງານລາວຂອງອົງການດັ່ງກ່າວ ປະສົມກັບນັກສຶກສາໄດ້ຂັບໄລ່ໄສສົ່ງ ພວກອາເມລິກາໃຫ້ອອກຈາກປະເທດລາວ. ນາລາທິບຈຳຕ້ອງເປີດໜີໄປກັບຜົວ. ມຸ່ງໜ້າສູ່ສະຫະລັດອາເມລິກາ. ພໍໄປຮອດນາງກໍສົ່ງແຜ່ນຮູບເມືອງອາເມລິກາ ມາໃຫ້ພໍ່ແມ່ພ້ອມຂໍ້ຄວາມສັ້ນໆຢູ່ຫລັງຮູບບອກໃຫ້ຊາບວ່າໄປຮອດອາເມລິກາແລ້ວ ດ້ວຍຄວາມປອດໄພ ແລະ ວ່າຈະຂຽນຈົດໝາຍມາໃຫ້ຊາບນຳຫລັງ.

ແມ່ຂອງນາງເອົາຮູບແຜ່ນນັ້ນ ໄປອວດອ້າງ ໄທບ້ານທັງເວົ້າວ່າ: "ລູກຂ້ອຍໄປເຖິງບ່ອນສະໜຸກສຸກສຳບາຍແລ້ວ ປານຢູ່ເມືອງສະຫວັນພຸ້ນລະ, ບໍ່ອຶດຢູ່ອຶດກິນ, ຂຶ້ນຂັ້ນໄດກໍບໍ່ໄດ້ຍ່າງ ຂັ້ນໄດໄຟຟ້າເລື່ອນໄປເອງ. ລົງເຮືອນປັບກໍຂຶ້ນລົດໂລດ ໃພດວ່າມັນສຳບາຍ".

ສົມພັນເລົ່າຕໍ່ໄປວ່າ ກ່ອນຈະຕັ້ງລະບອບໃຫມ່ນັ້ນ

* ຢູເສດ (USAID) ອົງການຊ່ວຍເຫລືອຂອງອາເມລິກາ

ແມ່ຂອງນາລາທິບ ມັກເລົ່າເລື່ອງກ່ຽວກັບອາເມລິກາສູ່ໄທບ້ານໃກ້ເຮືອນຄຽງຟັງສະເຫມີ ເພາະເພິນເຄີຍຕິດຕາມຜົວໄປສະຫະລັດອາເມລິກາເທື່ອຫນຶ່ງ. ເວທີກໍ່ແມ່ນຮ້ານຂາຍເຂົ້າປຸ້ນຊຶ່ງຢູ່ມ່ເຮືອນເພິນນັ້ນເອງ. ເພິນເວົ້າວ່າ : " ຄົນອາເມລິກາກິນສະຫນຸກ ຢູ່ສະບາຍປານເທວະດາ ມີເງິນເດືອນຫລາຍ ນຸ່ງແຕ່ເຄື່ອງງາມໆ ມີລົດຂີ່ ມີເຮືອນງາມຢູ່ຕ່າງໆນາໆ...".

ຕອນກັບມາແຕ່ອາເມລິກາໃຫມ່ໆນັ້ນ, ເພິນກໍ່ສະຫລະເງິນກ້ອນໃຫຍ່ມອບໃຫ້ວັດ ແລ້ວກໍ່ເວົ້າສຽງດັງຖ້ວມສຽງຜູ້ອື່ນ ສິນພັນເວົ້າໄສໄບໂດຍເຮັດສຽງເມືອງຫລວງພະບາງອັນເປັນສຳນຽງຂອງເພິນວ່າ : "ບຸນວັດບ້ານເຮົາ ຖ້າບໍ່ມີຂ້ອຍແລ້ວແມ່ນບໍ່ສຳເລັດຈັກປີ. ປະຕູໂຂງວັດ ຄັນບໍ່ແມ່ນເງິນຂ້ອຍອອກກໍ່ແມ່ນບໍ່ເປັນຮູບເປັນຮ່າງຂຶ້ນມາ..."

ສິນພັນວ່າ ການທີ່ເພິນອອກເງິນເຮັດປະຕູໂຂງວັດແຕ່ຜູ້ດຽວນັ້ນ ກໍ່ແມ່ນຈຸດປະສົງໃຫ້ມີຊື່ຄອບຄົວຕິດໃສ່ເປັ້ເຈັ້ຢູ່ດ້ານຫນ້າວັດ. ໃຜກາຍໄປກາຍມາກໍ່ຫລຽວເຫັນ ປານວ່າຫມົດທັງວັດຖືກສ້າງຂຶ້ນໂດຍຄອບຄົວເພິນເອງ. ດັ່ງນັ້ນຈຶ່ງມີຫລາຍຄົນເຮັດສົບເປາະໃສ່ເວລາລັບຫລັງເພິນ.

" ດຽວນີ້ເພິນກໍຫັນປ່ຽນແນວຄິດແລ້ວຕິ "ຂ້ອຍເອີຍ ຂຶ້ນຫລັງຈາກຝັງມາດົນ.

" ເອີ... ໄດແລ້ວ ທັງພໍ່ຂຸດດິນ ຖາງຫຍ້າຫລືບໍ່ກໍ ຫົດນ້ຳຕົ້ນໄມ້. ທີພິເສດກໍຄືແມ່ເຊົາເວົ້າອວດອ້າງທະນົງຕົວ ເຊົາເວົ້າເລື່ອງບາງນາລາທິບ ".

" ແລ້ວໂຕກໍເລີຍບໍ່ຮູ້ເລື່ອງບາງຕື່ມອີກ ".

" ບໍ່ ບໍ່ຮູ້ຂ່າວອີກເລີຍ ".

" ບໍ່ມີໃຜລອງຖາມເພິນເບິ່ງແດ່ຫວະ ? ".

" ປ້າຜູ້ລາວຂາຍເຂົ້າປຸ້ນ ເຄີຍຖາມຂຶ້ນ ເທື່ອຫນຶ່ງ ຫວ່າງຫລາຍເດືອນມາແລ້ວ ເພິນເວົ້າອ້ອມໄປ ວົນມາ ແລ້ວກໍວ່າ: ໃນໂລກອັນນີ້ ປູ່ໃສ່ມັນຊິດັກທ່ບ້ານເຮົາ ".

* *

*

ເລື່ອງຂອງນາລາທິບຄວນຈະປຸດລົງບ່ອນນີ້ ຖ້າວ່າ ຕໍ່ມາຂ້ອຍບໍ່ໄດ້ໄປຢາມບຸນຊ່ວຍໃນໂອກາດ ທີ່ເມຍຂອງເຂົາ ໃຫ້ກຳເນີດແກ່ລູກໃຫມ່. ບັງເອີນແທ້ໆທີ່ຄຳປາດເມຍຂອງ ບຸນຊ່ວຍກໍແມ່ນວ່າເປັນຫມູ່ຄູ່ຂອງນາລາທິບ ແລະ ຄຳປາດກໍມີຮູບແຜ່ນຫນຶ່ງຂອງນາລາທິບນຳດ້ວຍ : ດັ່ງນີ້

ຂ້ອຍຈຶ່ງໄດ້ເລື່ອງຂອງນາງມາຕື່ມອີກ.

ຄຳປາດບອກວ່າ ເປັນຫນຸ່ມຮັກຫນຸ່ມແພງກັບນາລາທີ່ບ ສະໄຫມຢູ່ໂຮງຮຽນອຸດົມ, ນີ້ເລື່ອງຮ້າຍເລື່ອງດີຫຍັງກໍ ເລົ່າສູ່ກັນຟັງ ຈະວ່າກິນສຸກກິນດິບນຳກັນກໍໄດ້. ຂ້ອຍບອກ ວ່າ ເຄີຍເຫັນຮູບຂອງນາງທີ່ເອົາໄວ້ ຢູ່ຮ້ານຖ່າຍຮູບແຫ່ງ ຫນຶ່ງ ແລະ ຮູ້ເລື່ອງເລັກນ້ອຍກ່ຽວກັບນາງ.

" ໄດ້ຍິນວ່າລາວເອົາຜົວອາເມລິກາ ແລ້ວໄປຢູ່ອາເມ ລິກາພຸ້ນ. ຄືຊິບໍ່ມີບັນຫາຫຍຸ້ງຍາກຫນັກໃຈຄືອີບພະຍີບ ອື່ນໆດີບໍ່ "ຂ້ອຍກ່າວຂຶ້ນແບບເປັນຄຳຖາມ :

" ໃຫ່ ແຮງມີບັນຫາຫນັກໃຈ. ລາວບົ້ມບໍ່ອອກຄືຢ່າງ ໃນຮູບນັ້ນດອກ ".

" ຄືມາວ່າແນວນັ້ນ ?" ຂ້ອຍສົນໃຈຕື່ມຂຶ້ນອີກ.

" ກ່າວວ່າແນວນັ້ນລະບໍ່ ເລື່ອງບໍ່ເປັນໄປຕາມຄວາມນຶກ ຝັນ " ຄຳປາດປຸດຄາວຫນຶ່ງແລ້ວເວົ້າຕໍ່. "ລາວສົ່ງຂ່າວ ມາເລື້ອຍໆ ຄືຊິແມ່ນບໍ່ຊ່າງຊີຢູ່, ອຸກອັ່ງທັ່ງຫວງກໍເລີຍ ລະບາຍອອກມາທາງຈົດໝາຍ, ຄວາມ ຈິງ ກໍ ບໍ່ ແມ່ນ ຄວາມຜິດຂອງລາວດອກ, ສາເຫດມາຈາກພໍ່ແມ່. ເພິ່ນ ປາກໃຫ້ລູກສາວໄປມີ້ມທຸກມື້ມຍາກ ແຕ່ເພິ່ນບໍ່ຊາບຊຶ້ມ

ຄຳວ່າ: " ທຸກກາຍຢູ່ໄດ້ ທຸກໃຈຢູ່ຍາກ ". ຢູ່ອາເມລິກາ ລາວກໍບໍ່ທຸກກາຍດອກ ແຕ່ລາວຊ້ຳທຸກອົກທຸກໃຈ ພົບພໍ້ບັນຫາແຕ່ມື້ທຳອິດທີ່ລົງຢຽບແຜ່ນດິນອາເມລິກາ. ມື້ໄປຮອດນັ້ນ ຈວບກັບມື້ການຂົນຊາວອົບພະຍົບ ຫວຽດນາມຫລາຍພັນຄົນໄປລົງທີ່ລັດກາລີຟໍເນຍ. ທີ່ເດີ່ນຍົນມີປະຊາຊົນອາເມລິກາໄປປະທ້ວງຄັດຄ້ານການຮັບເອົາອົບພະຍົບເຫລົ່ານີ້. ນາລາທິບກໍເລີຍບັງເອີນຖືກປະທ້ວງ ຖືກໂຮ່ໃສ່ຢ່າງບໍ່ໄວ້ຫນ້າ.

ບັນຫາຫນຶ່ງທີ່ເຮັດໃຫ້ລາວນ້ຳຕາຕົກກໍຄື ຖືກສັງຄົມອາເມລິກາຖືຫຸ່ນວ່າ ເປັນອະດີດແມ່ຈ້າງບາງລ້ອມາກ່ອນ. ສາເຫດຂອງມັນກໍມີຢູ່ວ່າທະຫານ ແລະພະນັກງານອາເມລິກາທີ່ມາປະຕິບັດງານຢູ່ໃນອິນດູຈີນນັ້ນ ມັກເອົາແມ່ຈ້າງບາງລ້ວເປັນເມຍເຊົ່າ ຫລືບາງລາຍກໍເອົາເປັນເມຍແທ້. ນາລາທິບກໍຖືກຕິລວາດກວາດຫຍຽງວ່າ ເປັນປະເພດດັ່ງກ່າວນັ້ນ. ເມື່ອໄປພົບພໍ້ເລື່ອງທຳນອງນີ້ລາວສຸດທີ່ຈະຂົມຂື່ນໃນຈິດໃຈຈົນເຖິງຂັ້ນໄດ້ຂຽນຈົດຫມາຍມາຫາພໍ່ແມ່ ຂໍກັບຄືນເມືອງລາວ ເລື່ອງຜົວບໍ່ສຳຄັນວ່າດັ່ງນັ້ນ...

ເລື່ອງອາຫານການກິນແຮ່ງເປັນບັນຫາຫນັກໃຈ. ອາ

ຫານຊາວຕາເວັນຕົກນັ້ນບໍ່ຖືກປາກລາວເລີຍ ລາວຈຶ່ງຈົ່ມມາໃນຈົດໝາຍວ່າ ປາກເຂົ້າປຸ້ນ ປາກຕຳໝາກຮຸ່ງ ປາກໝາກມ່ວງ ກັບນ້ຳປາແດກ ປາກທຸກຢ່າງທີ່ເຄີຍກິນຢູ່ເມືອງລາວເຮົາ...".

" ເບິ່ງະປັນຕາອີຕົນລາວເນາະ ເຄີຍຢູ່ໃນຄວາມອົບອຸ່ນຂອງພໍ່ແມ່ພີ່ນ້ອງ ບາດແລ້ວຕົກໄປຢູ່ບ້ານເພິ່ນເມືອງເພິ່ນ ຜົວກໍແມ່ນຄົນລະເຊື້ອຊາດ ຄົນລະວັດທະນະທຳ, ເປັນຂ້ອຍກ່າວບໍ່ຊ່າງຊິຢູ່ຄືກັນ." ຂ້ອຍສະແດງຄວາມຄິດເຫັນຫລັງຈາກທີ່ ຄຳປາດປຸດໄປຊົ່ວໄລຍະໜຶ່ງ.

" ລາວພັກຢູ່ຫ້ອງເຊົ່າ ບໍ່ໄດ້ຢູ່ເຮືອນແບບວິນລາເລີຍ ວົນວຽນຢູ່ແຕ່ໃນຫ້ອງສີ່ແຈ ຊັ້ນທີ່ຊາວສອງບາງມື້ບໍ່ໄດ້ລົງຢຽບພື້ນດິນເລີຍວ່າຊັ້ນ."

ການມາຢ້ຽມຢາມຂອງຂ້ອຍ ໄດ້ພົບທັງເລື່ອງດີໃຈແລະໜັກໃຈ. ດີໃຈເພາະໄດ້ມາຮູ້ເຫັນເດັກນ້ອຍທີ່ເກີດໃໝ່ ອັນໝາຍເຖິງຊີວິດໜຶ່ງໄດ້ເພີ່ມມາອີກໃນໂລກ ນີ້, ໜັກໃຈເພາະຂ້ອຍມັກເປັນຫ່ວງເລື່ອງຂອງຄົນອື່ນ ຫ່ວງວ່ານາລາທີນຈະມີທຸກທໍລະມານໃນຊີວິດ ທັງທີ່ນາງເອງກໍບໍ່ຮູ້ຈັກຂ້ອຍມາກ່ອນ ແລະ ໃນຄວາມຮູ້ສຶກສຳນຶກຂອງ

ນາງນັ້ນແມ່ນວ່າຂ້ອຍບໍ່ມີຕົນບໍ່ມີໃດໃນໂລກນີ້ເລີຍ.

ກ່ອນອຳລາສອງຜົວເມຍນີ້ ຂ້ອຍຂໍປຶ້ມຮູບມາລາທິບ ເພື່ອເອົາໄປເປັນແບບແຕ້ມຮູບ.

*　　*

*

ຂອ້ຍຈັດແຈງແຕ້ມຮູບມາລາທິບ.

ແນມເບິ່ງນາງອີກໃກ້ໆ ຂ້ອຍກໍຍັງຮູ້ສຶກບໍ່ເບື່ອ ບັງຊື່ນ ຊົມກັບຮອຍຍິ້ມນັ້ນຢ່າງບໍ່ຈືດບໍ່ຈາງ. ນາງມີສະເນ່ດຶງດູດ ເຮັດໃຫ້ຂ້ອຍຄຶດຮອດແລະໄຝ່ຝັນຫາ. ແມ່ນແທ້ຖ້າໄດ້ຕົວ ຈິງຂອງນາງມານັ່ງຢູ່ໃກ້ໆຂ້ອຍກໍຄົງຈະມີຄວາມສຸກທີ່ສຸດ ໃນໂລກ. ຂ້ອຍຈັບຮູບນາງດ້ວຍຄວາມຖະນຸຖະໜອມ, ແພງບິ່ງກວ່າສິ່ງຂອງໃດໆທີ່ຂ້ອຍມີຢູ່ ແລະຮູ້ສຶກຫາຍໃຈ ບໍ່ຮອດທ້ອງເມື່ອຄຶດວ່າ ຕົວຈິງຂອງນາງພົບຄວາມທໍລະ ມານໃຈ.

ເພາະຄວາມເປັນຫ່ວງເປັນໄຍໃນຕົວນາງເຮັດໃຫ້ຂ້ອຍ ຄຶດພໍ້ຄຳເວົ້າຂອງຄຳປາດທີ່ກ່າວເຖິງບັນຫາໜັກໜ່ວງ ທີ່ມາລາທິບໄດ້ປະສົບພົບພໍ້. ຂ້ອຍນຶກເຫັນນາງພວມລົງ ສູ່ເດີ່ນຍົນຊື່ງອັ່ງແໜ້ນ ໄປດ້ວຍຊາວອົບພະຍົບຈາກອິນດູ

ຈົນທີ່ຖືກຂົນມາຫລາຍຖ້ຽວບິນແລ້ວ. ຟາກຮົ້ວອີກເບື້ອງໜຶ່ງອ້ອມອາຄານສະໜາມບິນ ມີປະຊາຊົນອາເມລິກາມາຊຸມນຸມປະທ້ວງ ສົ່ງສຽງຮ້ອງໂຮຟົດສະນັ່ນ, ແຕ່ລະຄົນມີໃບໜ້າເຄັ່ງຂຶມ. ທ່າທາງບົ່ງບອກຄວາມບ່ເປັນມິດ. ເຂົາເຈົ້າພາກັນຖືປ້າຍທີ່ຂຽນວ່າ "ໄປລົງນາຄົກ! ອົບພະຍົບ". "ພວກເຮົາບ່ມີວຽກງານໃຫ້ເຮັດຢູ່ທີ່ນີ້"" ຈົ່ງກັບໄປອິນດູຈີນ ວຽກງານເຮັດຍັງມີນັບບ່ຖ້ວນ " ແລະ ປ້າຍອື່ນໆ. ພວກປະທ້ວງ ບາງຄົນພະຍາຍາມບືນຜ່າວົງສະກັດຂອງຕຳຫລວດເພື່ອຈະໄດ້ຮ້ອງດ່າໃສ່ໄກ້ໆ. ເຫດການດຳເນີນໄປຢ່າງເຄັ່ງຮ້ອນ ມີການ ລະດົມກຳລັງຕຳຫລວດມາເພີ້ມອີກເພື່ອຮັກສາຄວາມສະຫງົບຮຽບຮ້ອຍ: ນາລາທີນກອດແຂນຜົວໄວ້ຢ່າງແໜ້ນແລ້ວ ກໍ່ຟ້າວຟັ່ງໄປຂຶ້ນລົດເພື່ອໃຫ້ຫວິດຈາກພວກປະທ້ວງ ນາງທັງສັ່ນທັງເຊັນນ້ຳຕາກໍ່ຊືມເບົ້າ ແລະ ບ່ເຊື່ອໝັ້ນຕ່ອານາຄົດກັບແຕ່ບາດກ້າວທຳອິດໃນດິນແດນແຫ່ງໃໝ່ນີ້.

ຂ້ອຍຄິດເຫັນຊາວອົບພະຍົບຄົນອື່ນໆ ຊຶ່ງແຕ່ລະຄົນໜີໄປດ້ວຍເຫດຜົນຂອງເຂົາເອງເຊັ່ນ: ບຸນອຸ້ມ ນະຈຳປາສັກ ໂດນໜີຈາກປະເທດໄປກໍ່ເພາະໄດ້ ຕັ້ງຕົນເອງເປັນຜູ້

ມີສິດເດັດຂາດແບບຊື່ເປັນຊື່ຕາຍຢູ່ພາກໃຕ້. ບັງມີ ໃຜຄົນລາວທີ່ບໍ່ຮູ້ໂທດກຳຂອງບຸກຄົນຜູ້ນີ້. ມັນກໍເປັນເລື່ອງທຳມະດາທີ່ບຸນອຸ້ມຕ້ອງໂດນໜີໄປ ເພາະແຜ່ນດິນລາວບໍ່ຕ້ອງການຄົນແນວນີ້.

ສົບໄຊ ນັກຄ້າເຮໂຣອິນ ກໍແຮ່ງເປັນຜູ້ທີ່ມວນຊົນໃນໂລກບໍ່ເພິ່ງປາດຖະໜາ. ເຂົາສວຍໃຊ້ໜ້າທີ່ທາງການທູດນຳເອົາຢາເສບຕິດໄປຂາຍເມື່ອຄາວເດີນທາງໄປຕ່າງປະເທດ. ຄັ້ງໜຶ່ງຕຳຫລວດ ຝະລັ່ງຄົ້ນ ເຮໂຣອິນ ໄດ້ຈາກຫີບຂອງເຂົາເວລາເດີນທາງໄປນະຄອນປາຣີ. ແຕ່ອາໄສສິດທິທາງການທູດຄຸ້ມກັນ ເຂົາຈຶ່ງບໍ່ຖືກຈັບ. ເຂົາຢູ່ກິນແບບສະໜຸກສຳບາຍ ບໍ່ຫ່ວງໄຍວ່າປະຊາຊົນຜູ້ທີ່ຕິດເຮໂຣອິນຈະເປັນແນວໃດ. ການທີ່ເຂົາໂດນໜີໄປກໍນັບວ່າໂຕມານຮ້າຍໄດ້ຫວິດຈາກເຮືອນເຮົາແລ້ວ.

ບາງຄົນກໍໜີໄປເພາະເບື່ອລະບອບໃຫມ່ ໃນແງ່ຮ້າຍ. ສີມຸ່ຍຊຶ່ງເປັນຄົນ ໃນຄອບຄົວ ຖານະປານກາງເວົ້າວ່າ: " ກອມມູນິດ ມາຮອດແລ້ວເຂົາບໍ່ສົ່ງເສີມອາຊີບນັກແຕ້ມດອກ. ເຂົາມີແຕ່ຊິເອົາໄປຂຸດດິນຝັງໄມ້. ເຮົາບໍ່ຢູ່ດອກ". ແລ້ວເຂົາກໍໂດນໜີໄປແຕ່ທ້າຍປີ ໑໙໗໕ ໂດຍບໍ່ຍອມຟັງ

ເຫດຜົນທີ່ຂ້ອຍຊີ້ແຈງ ແຖມເຂົາບັງເວົ້າແດກໃສ່ຂ້ອຍວ່າ " ໂຕມັນຊິຮູ້ຂີ້ໝາຫຍັງ ! " ດຽວນີ້ໄດ້ຂ່າວວ່າເຂົາໄປເປັນກຳມະກອນທາສີເຮືອນຢູ່ພາກໃຕ້ຂອງຝະລັ່ງ ແລະ ພວມຫ້ອນເງິນເພື່ອເປັນຄ່າເດີນທາງກັບຄືນເມືອງລາວ.

ອ້າຍສະແຫວງຫອບຄອບຄົວ ຊຶ່ງມີທັງໝົດເຈັດຄົນໂຕນໄປ. ລາວເຄີຍເວົ້າກັບຄົນໃກ້ຄຽງ ກ່ອນໜ້ານັ້ນວ່າ " ດຽວນີ້ເພິ່ນມາຈົດບັນຊີໝູໝາເປັດໄກ່ ຊິຈົດຊູອັນຊູແນວ. ກ້າວຕໍ່ໄປເພິ່ນກໍຊິມາຈົດບັນຊີກ້ອງແຂນແຫວນວົງ ໂອເງິນໂອຄຳມີຈຳນວນທໍ່ໃດ ແລ້ວຕໍ່ໄປກໍຈະຍຶດເອົາເປັນຂອງລັດ..."

ເຫລົ່ານີ້ລ້ວນແຕ່ແມ່ນຄວາມຄິດຜິດໆ ທີ່ມີຕໍ່ລະບອບໃໝ່ອັນສືບເນື່ອງມາຈາກການໂຄສະນາຊວນເຊື່ອ ຂອງຝ່າຍກົງກັນຂ້າມໃນຫລາຍໆ ປີຜ່ານມາ. ແຕ່ເທົ່າເຖິງປະຈຸບັນນີ້ກໍບໍ່ເຫັນຜູ້ໃດ ຖືກຍຶດເອົາສິ່ງຂອງດັ່ງກ່າວ ໄປເປັນຂອງລັດແກ່ປາງໃດ.

ສ່ວນມາລາທີ່ບນັ້ນນາງຕ້ອງໄປນຳຜົວ ໄປຕາມຄວາມຄິດຂອງພໍ່ແມ່ ທີ່ຢາກໃຫ້ລູກໄປມື້ນທຸກມື້ນຍາກ ໃຫ້ລູກໄປມີຄວາມສະໜຸກສຳບາຍ. ແຕ່ບໍ່ເປັນຈັ່ງບຸນ ນາງອາດ

ຮູ້ສຶກຜິດຫວັງຫລາຍກ່ວາຊາວອົບພະຍົບອື່ນໆ ອີກຊ້ຳ.

ຄິດມາເຖິງຕອນນີ້ ຂ້ອຍຮູ້ສຶກຄ່ຳຄ້ອຍໃນຈິດໃຈ, ແບນເບິ່ງຮູບນາລາທິບ ແຕ່ກໍ່ປະກົດໄດ້ຍິນສຽງຂອງ ຄຳ ປາດເລົ່າຕອນນຸ້ນຕອນນີ້ສູ່ຟັງ, ມັນດັ່ງເລິກຢູ່ໃນໂສດປະສາດຂອງຂ້ອຍຈົນບໍ່ສາມາດຈ້ຳປາຍສໍລົງໃນແຜ່ນຜ້າໄດ້.

"... ວັນໜຶ່ງນາລາທິບຍ່າງໄປຄົນດຽວ. ຕາມຖະໜົນມີລົດລາພາຫະນະແລ່ນຍືດໆໄປເປັນແຖວ ແລະ ເປັນສາຍເໜືອນດັ່ງຖືກບັງຄັບໃຫ້ເລື່ອນໄປດ້ວຍເຄື່ອງກົນໄກ. ສອງຂ້າງທາງມີແຕ່ອາຄານບ້ານເຮືອນຫລາຍຊັ້ນສູງຊັນ ຕິດຕໍ່ບໍ່ເນື່ອງກັນໄປສຸດຊົ່ວຕາ; ມັນສູງເກີນກ່ວາທີ່ຄົນຕາມຖະໜົນຈະແຫງນເບິ່ງດ້ວຍຄວາມພິດສະໄໜ. ບົນບາວກາດຕອນກາງເວັນເປັນສີຊືມໆຫລຽວໄປທາງໃດມີແຕ່ " ປ່າຊີມັງ " ເຫັນແລ້ວມັນຕຶບຕັນ ແລະ ໜັກຕຶ້ງໃນສະໝອງ. ຜູ້ຄົນກໍໄປມາເປັນສວ່ານສົນ. ຄາວໜຶ່ງມີຜູ້ຊາຍຄົນໜຶ່ງຍ່າງກົງມາຫານາລາທິບ ແລ້ວຖາມຫາກັບໄຟ ເພື່ອຂໍຕໍ່ປາດູດ. ລາວບອກວ່າບໍ່ມີແຕ່ຊາຍຄົນນັ້ນພະຍາຍາມກັນທ່າບໍ່ໃຫ້ລາວຜ່ານໄປ ທັນໃດນັ້ນເຂົາກໍອອກປາກຊວນລາວໄປດື່ມນ້ຳຊາທີ່ເຮືອນເຂົາ. ລາວປະຕິເສດສຽງແຂງແລ້ວ

ຍ່າງຫນີໄປແບບບໍ່ຫ່ວງ. ແນ່ນອນລະ ມັນເປັນການຊັກຊວນໄປໃນທາງໂລເລ. ບາງທີຊາຍຄົນນັ້ນອາດເຄີຍຊວນຍິງສາວຊາວອົບພະຍົບອື່ນໆ ແລະໄດ້ຜົນມາແລ້ວ ເພາະສາວອົບພະຍົບຈຳນວນຫນຶ່ງຫາກິນດ້ວຍການຂາຍຕົວ".

"ເວລາຍ່າງໄປນຳຜົວ ລາວກໍຄຶດວຸ່ນວາຍໃນໃຈ ບໍ່ມີຄວາມສະຫງົບຈັກເທື່ອ ທັງນີ້ກໍເພາະ ໃຜກໍແນມເບິງທີເຫັນລາວເປັນຄົນຜິວເຫລືອງ ຮ່າງນ້ອຍແຕ່ໄປເກາະແຂນຊາຍຜິວຂາວສູງໃຫຍ່ເບິງບໍ່ສົມກັນຈັກດີ້. ລາວບໍ່ກ້າສູ້ກັບສາຍຕາເຫລົ່ານັ້ນ ແຕ່ກໍເຊື່ອເອົາເອງວ່າເຂົາບໍ່ເບິງດ້ວຍຄວາມຊື່ນຊົມດອກ ຫາກແຕ່ດ້ວຍຄວາມຢຽດຫຍາມ ຖືຫຸ່ມວ່າເປັນຍິງລາຄາຖືກ ເປັນແມ່ຈ້າງນາງລ້ອທີໃຜໆກໍສາມາດເກາະແຂນເອົາໄປນຳໄດ້. ລາວຄຶດໄປແນວນັ້ນແລ້ວກໍບໍ່ປາກໄປທາງໃດກັບຜົວ, ຖ້າຫມົກຢູ່ແຕ່ໃນເຮືອນຫລາຍກໍໂສກເສົ້າຫງ່ວມເຫງົາ, ຄຶດຮອດບ້ານ, ດົນຈຶ່ງອອກໄປຄົນດຽວເທື່ອຫນຶ່ງ. ແຕ່ລະເທື່ອທີ່ຍ່າງໄປ ຖ້າມີຜູ້ແນມເບິງລາວກໍຮູ້ສຶກວ່າເຂົາເບິງໄປໃນແງ່ບໍ່ດີ ດັ່ງນີ້ຈຶ່ງກົ້ມຫນ້າໄປທັງຄຶດນ້ອຍອົກນ້ອຍໃຈ ໄປບໍ່ທັນຮອດຈຸດໝາຍປາຍທາງກໍຟ້າວກັບຄືນບ່ອນພັກ. ມັນບໍ່ຄືຄາວກ່ອນຕອນທີ່ຢູ່ບ້ານ

ເຮົາເມືອງເຮົາ ໄປທາງໃດຖ້າມີຜູ້ເບິ່ງລາວກໍ່ເຮັດທ່າທາງ ສະຫງ່າບາດຍ່າງສົງອນໆ ຍັງເປັນວາດຂອງຜູ້ທີ່ຮູ້ສຶກວ່າ ດີນງາມເດັ່ນ".

ໃນມະໂນພາບຂ້ອຍເຫັນນາງລາທິບປີນຊີງປູ່ແຄມປ່ອງ ປ້ຽມແກ້ວຂອງຫ້ອງຫນຶ່ງໃນຕຶກຊັ້ນທີ່ຊາວປາຍ. ນາງສົ່ງ ແສງຕາໄປທີ່ຂອບຟ້າບ່ອນມີຄວັນຂະມຸກຂະມົວຈາກໂຮງ ງານທີ່ຫລຽວເຫັນພໍ່ຈື່ມປື່ມ, ແຕ່ຄວາມຄິດຂອງນາງກາຍ ຂອບຟ້າໄປອີກຫລາຍພັນຫລາຍຫມື່ນໂຍດ, ຈົນມາຮອດ ວຽງຈັນບ້ານເກີດ ມາເຫັນພໍ່ແມ່ພີ່ນ້ອງ ມາເຫັນຄ່ຳປາດ ແລະຫມູ່ເພື່ອນຄົນອື່ນໆທີ່ມີຄວາມອົບອຸ່ນສະບາຍໃຈ ປາ ສະຈາກຄວາມກັງວົນໃດໆ. ນາງຄຶດປາກເປັນລົມ ຄຶດປາກ ເປັນນົກ ນາງຈະບິນອອກຈາກປ່ອງປ້ຽມແລ້ວລ່ອງລອຍ ໄປສູ່ຂອບຟ້າ, ສູ່ວຽງຈັນບ້ານເກີດທີ່ຍັງຄອງຄອຍການກັບ ເມືອຂອງນາງປູ່. ຍາມລະດູບານໃຫມ່ ຕົ໊ນດອກສ້ຽວຕາມ ຖະຫນົນລ້ານຊ້າງບານເປັນສີບົວ ສົດຊື່ນປູ່ທ່ານກາງສາຍ ລົມ, ຢ່າງເຂົ້າເດືອນຫົກດອກຝາງແດງ ຕາມຖະຫນົນ ຫລວງພະບາງກໍ່ບານເຮືອງເຮື່ອເປັນພົ້ວເປັນພວງ, ຍາມ ແລ້ງຫາດດອນຈັນນອນຍາວຢຽດປູ່ໃວ້ຟ້າສີຄາມທີ່ປາ ສະ

ຈາກກ້ອນເມກ ຫລຽວແຕ່ເຫນືອລົງໄດ້ຈະເຫັນຫາດຄົດ ໂຄ້ງໄປຕາມລຳນ້ຳຂອງ. ເຖິງບາມຜົນນ້ຳຂອງກໍໄຫລນອງ ຟອງຂອງມັນ ບອກບໍ່ເປັນຄື້ນແລ່ນເຂົ້າກະທົບຝັ່ງເຮັດໃຫ້ ເງົາໄມ້ຕາມແຄມຝັ່ງນ້ຳ ເຫນັງຕີງໄປມາເຫມືອນດັ່ງສິ່ງມີ ຊີວິດ. ຍາມແລງມາດວງອາທິດສາດແສງສີແດງລົງ ທີ່ ຫນ້ານ້ຳເຫລື້ອມເປັນຍິບຍັບ ກ່ອນທີ່ຈະລັບລົງໄປ ຫລັງ ສາຍພູຟາກດອນສຽງຊູ້. ແລ້ວວຽງຈັນກໍຢູ່ໃນຄວາມເປັນ ສົດຊື່ນຄອຍຖ້າອະລຸນວັນໃຫມ່ຕໍ່ໄປ. ມາລາທິບຈື່ຈຳພາບ ເຫລົ່ານີ້ໄດ້ດີ ແລະ ຈະບໍ່ມີວັນລືມລົງໄດ້ງ່າຍ.

ຂ້ອຍຕັ້ງໃຈຈະແຕ້ມຮູບ ມາລາທິບທີ່ຍິ້ມລະມຸນລະໄມ ແຕ່ໃນສາຍຕາຂອງຂ້ອຍ ນາງບໍ່ຍິ້ມເລີຍ ຫາກແຕ່ຢູ່ໃນອາ ການເລື່ອນລອຍຄືຄົນສະຕິບໍ່ຢູ່ກັບເນື້ອກັບຄີງ. ດວງຕາຄູ່ ນັ້ນບໍ່ມີແວວສົດຊື່ນ ບໍ່ສໍ່ສະແດງວ່າປາກທັກທາຍກັບຜູ້ໃດ ຄືດັ່ງແຕ່ກ່ອນ, ມີແຕ່ຄວາມເຫງົາພອຍເປັນຈ້ອຍ. ທົ່ວໃບ ຫນ້າຂອງນາງປະກົດວ່າ ໂຊບໄວ້ດ້ວຍຄວາມຫມົ່ນຫມອງ ຄືກັບວ່າບໍ່ເຄີຍຍິ້ມຫົວມາກ່ອນເລີຍໃນຊີວິດ. ມັນບໍ່ແມ່ນ ມາລາທິບທີ່ເຄີຍບານຊື່ນຢູ່ໃນເມືອງລາວ ຫາກແຕ່ແມ່ນ ມາລາທິບທີ່ພວມນຸບນອບເຫ່ວແຫ້ງຢູ່ໃນຂອບປ່ອງຢ້ຽມ

ຂອງອາຄານສູງໆໃຕ້ຟ້າເມືອງອາເມລິກາ.

ຂ້ອຍຮູ້ສຶກວ່າ ການທີ່ຈະແຕ້ມຮູບນາລາທິບບົນແຜ່ນ ບັ້ງເປັນສິ່ງຝືນໃຈ ຝືນອາລົມ ແລະ ຝືນສະພາບຄວາມ ເປັນຈິງຂອງນາງຢູ່ໃນຂະນະນີ້, ຍິ່ງແຕ້ມໄປກໍຄືງບໍ່ຈົບບໍ່ ງາມ ບໍ່ເຂົ້າເລິກໃນເນື້ອໃນ. ຂ້ອຍຈະບໍ່ຕົວະຕົນເອງໃຫ້ຂຸ່ນ ໝອງໃນຈິດໃຈເລີຍ.

ຂ້ອຍວົກລົງແຕ້ມຮູບນາລາທິບທີ່ຢູ່ໃນອາລົມຄຶດຮອດ ບ້ານ.

# ເບື້ອງ ຫລັງ

* ທຳອິດກໍມີຄົນໃກ້ຄຽງ ສອງສາມຄົນ ທີ່ສະຫລຽວໃຈ ເພາະບໍ່ເຫັນເຂົາຜ່ານກາຍໜ້າເຮືອນຫລາຍມື້. ຕໍ່ມາຜູ້ນັ້ນຜູ້ນີ້ກໍ່ສ້ຖາມກັນ, ມີລາງຄົນຖາມພໍ່ແມ່ຂອງເຂົາ ແຕ່ກໍບໍ່ໄດ້ຮັບຄຳຕອບແຈ່ມແຈ້ງແນວໃດ

" ບໍ່ຮູ້ມັນໄປໃສ ? "

" ໄປຕິດແສ້ຕິດສາວທາງໃດບຸລະ ! ".

ຄວາມອອກຈາກປາກໜຶ່ງໄປສູ່ອີກປາກໜຶ່ງ ກາຍເປັນຂ່າວບັນບອງໄປທົ່ວຄຸ້ມ, ຂ່າວທີ່ວ່າເຂົາສູນຫາຍໄປ. ຜູ້ທີ່ຕົກເປັນຂ່າວນີ້ ກໍແມ່ນ ທ້າວພົງຄຳ ຊາຍໜຸ່ມອາຍຸ ໑໘ ປີ ນັກຮຽນໂຮງຮຽນລີເຊ (ໂຮງຮຽນອຸດົມ). ເວລາຜ່ານໄປ ການຫາຍຕົວຂອງເຂົາຈາກເຮືອນ ທີ່ເຊົ່າຢູ່ຄຸ້ມອູບມຸງ ກໍເປັນທີ່ຮູ້ກັນໄປທົ່ວເມືອງວຽງຈັນໃນກາງປີ ໑໙໖໑.

ເມື່ອຊາບຂ່າວກ່ຽວກັບເຂົາ ຄົນສ່ວນຫລາຍນຶກເຫັນ

ພາບຊາຍໜຸ່ມຄົນ ໜຶ່ງຊຶ່ງຕິດຫລຽນ ກ້າຫານ ທີ່ໜ້າ ເອິກ ປະກົດເດັ່ນຢູ່ໃນໜັງສືພິມຮູບຂ່າວລາຍເດືອນ ຊຶ່ງ ພິມຈຳໜ່າຍ ໂດຍອົງການຂ່າວສານ ອາເມລິກາປະຈຳ ລາວ. ຮູບຊາຍໜຸ່ມນີ້ ທ່າທາງອຽງອາຍແດ່ເລັກນ້ອຍ. ບາງຄົນວ່າ ອາດເປັນເພາະ ການປະກົດຕົວ ຕໍ່ໜ້າກ້ອງ ຖ່າຍຮູບທ່າມກາງມວນຊົນ. ບາງຄົນກໍວ່າອາດມີແນວໃດ ແນວໜຶ່ງເຊື່ອງຊ້ອນໄວ້ໃນໃຈ ເຂົາຈຶ່ງເຮັດທ່າທາງແນວ ນັ້ນ.

ຂ້ຽນໃນໜັງສືພິມນີ້ຍົກຍ້ອງເຂົາເປັນ ເຍົາວະຊົນຕົວ ຢ່າງທີ່ກ້າຫານເດັດດ່ຽວ. ດ້ວຍສອງມືເປົ່າ ເຂົາຕໍ່ສູ້ກັບ " ແນວລາວ " ທີ່ບຸກລຸກເຂົ້າມາໃນບ້ານ ແລະ ສາມາດຈັບ ເປັນໄດ້. ມັນເປັນວິລະກຳຊາວໜຸ່ມນັກສຶກສາທົ່ວໄປຄວນ ເອົາເປັນແບບຢ່າງເພື່ອປົກປັກຮັກສາປະເທດຊາດໃຫ້ພົ້ນ ໄພອັນຕະລາຍຈາກພວກກອມມູນິດ.

ພິຈາລະນາຈາກຂ້ຽນດັ່ງກ່າວ ຄົນທົ່ວໄປກໍເວົ້າກັນ ວ່າ ທ້າວພົງຄຳ " ແນວລາວ " ຈັບໄປຂ້າຖິ້ມແລ້ວ. ເວລາ ຜ່ານໄປ ຊື່ພົງຄຳກໍສູນຫາຍໄປຈາກຄວາມຊົງຈຳຂອງປະ ຊາຊົນ ດັ່ງດຽວກັບຕົວຕົນຂອງເຂົາ. ມີພຽງບາງຄັ້ງບາງ

ຄາວເທົ່ານັ້ນ ໄດ້ມີຜູ້ໄປຄົ້ນພົບໜັງສືພິມສະບັບດັ່ງກ່າວ ໂດຍບັງເອີນຕາມກອງໜັງສືເກົ່າໆ ແລ້ວກໍຄິດເຖິງເຂົາຂຶ້ນມາອີກ. ແລະ ບໍ່ດົນກໍລືມເຂົາໄປ ໂດຍປ່ອຍໃຫ້ເຫດການໃຫມ່ຫລືບຸກຄົນໃຫມ່ເຂົ້າມາໃນຫ່ວງນຶກແທນ.

ເຮືອນທີ່ພົງຄຳ ເຄີຍຢູ່ຕອນສູນຫາຍໄປນັ້ນເປັນເຮືອນໄມ້ສອງຊັ້ນ ຕັ້ງຢູ່ແຄມນ້ຳຂອງ ມີຮົ້ວອ້ອມທັງສີ່ດ້ານ. ຖັດຈາກຄອບຄົວຂອງພົງຄຳ ກໍມີຄອບຄົວ ຂອງລຸງເວີນມາເຊົ່າຢູ່. ລຸງເວີນເປັນຄົນຂັບລົດໂດຍສານ "ຕັກຊີ" ວັນຫນຶ່ງລາວ ຂຶ້ນໄປເທິງເພດານເພື່ອທຳລາຍປວກທີ່ເຮັດຮັງເປັນຄອງເລາະລຽບແຈຝາຂຶ້ນໄປເທິງແປເຮືອນ. ລາວໜີ້ນເຂົ້າໄປທ່າມກາງໄບ ແມງມຸມ ແລະ ໄປພົ້ກອງໜັງສືເກົ່າ. ລາວຈັບປຶ້ມຂຶ້ນເບິ່ງກໍພົບວ່າປວກເຈາະເປັນບຶງ ລາວຈຶ່ງຂົນປຶ້ມທັງຫມົດລົງມາລຸ່ມ. ລາວຈັດການຂ້າປວກ ແລ້ວນັ່ງນປຶ້ມທີ່ຍັງດີປອງກັນໄວ້, ຫົວໃດມຸ່ນຫລາຍກໍຈູດຖິ້ມ. ປຶ້ມທີ່ເກັບມ້ຽນໄວ້ມີທັງ ປຶ້ມຂຽນ ປຶ້ມແບບຮຽນເປັນພາສາຝະລັ່ງ ປຶ້ມຮູບເປັນພາສາຕ່າງປະເທດຫລາຍຊະນິດສັບປົນຄົນເລກັນ. ໃນຈຳນວນ ນີ້ມີຫົວໜຶ່ງ ເປັນປຶ້ມບັນທຶກສີແຫລ້ໝາກຄ້ ຖືກປວກ ກັດຂາດ ແຫ່ວງ ຫລາຍ

ບ່ອນ. ລູງເວີນເບິ່ງເຫັນຊືພົງຄຳປູ່ໃນຫນ້າທຳອິດ ແຕ່ຊື່ນີ້ບໍ່ມີຄວາມໝາຍະແນວໃດສຳລັບລາວ, ລາວຈຶ່ງປີດຫນ້າຕໍ່ໄປ. ລາວອ່ານເຫັນຂໍ້ຄວາມລັດຖະປະຫານ, ທະຫານແຜແດງ, ຂະບວນແຫ່ປ້າຍ... ລາວອ່ານສຸດຫນ້າຫນຶ່ງດ້ວຍຄວາມຢາກຮູ້ຢາກເຫັນ. ກ່ອນຈະປີດຫນ້າຕໍ່ໄປ ລາວປີດຄືນຫລັງອ່ານເບິ່ງຊື່ເຈົ້າຂອງປຶ້ມອີກໃຫມ່ ແລ້ວຈຶ່ງກັບໄປອ່ານຕໍ່. ລາວພົບຄວາມຫຍຸ້ງຍາກສົມຄວນໃນການອ່ານເພາະຫນ້າເຈັ້ຽເປື້ອນເປິ ທັງເປັນຮູປວກເຮັດໃຫ້ຂໍ້ຄວາມຂາດຫາຍໄປຫລາຍຕອນ, ແຕ່ລາວກໍສົນໃຈອ່ານເພາະນ້ອງຊາຍຂອງລາວຄົນຫນຶ່ງ ເຄີຍເປັນທະຫານໂດດຈ້ອງສັງກັດກອງພັນທີສອງແຫ່ງກອງທັບລາຊະອານາຈັກ ທີໄດ້ເຮັດ ລັດຖະປະຫານໂຄ່ນລົ້ມ ລັດຖະບານຝ່າຍຂວາເມືອວັນທີ ໙ ສິງຫາ ໑໙໖໐. ນ້ອງຊາຍຂອງລາວເສຽຊີວິດແລ້ວຄາວທີ່ກຳລັງຝ່າຍຂວາບຸກໂຈມຕີວຽງຈັນ.

໑໐ ສິງຫາ ໑໙໖໐.

ຂ້ອຍອອກຈາກເຮືອນແຕ່ເຊົ້າອີກ, ຈຸດໝາຍປາຍທາງກໍແມ່ນຖະໜົນລ້ານຊ້າງຕໍ່ໜ້າໂຮງຮຽນລີເຊ ເພາະບ່ອນນີ້ມີຫມູ່ນັກຮຽນນຳກັນມາຊຸມນຸມ ພວກເຮົາຂຽນປ້າຍໃສ່ກຳ

ແພງ ສະໜັບສະໜູນການລັດຖະປະຫານ. ບາງຄົນສີປາກດີນີໄວຫານ ກໍ່ກ່າວວິພາກວິຈານໂຈມຕີຈັກກະພັດອາເມລິກາ ແລະ ພວກຝ່າຍຂວາ, ເຖິງຕອນສຳຄັນກໍມີສຽງຕົບມື ສຽງຮ້ອງໂຮດັງຟົດສະນັ່ນປານປາງບຸບ.

" ສໜັບສະໜູນ ຄະນະລັດຖະປະຫານ ! "

" ຈົ່ງເຈລະຈາກັບແນວລາວ ເພື່ອໂຮມປະເທດ ! "

" ອາເມລິກາໜີໄປ ! "

ເວລາໃດທີ່ລົດທະຫານແພແດງຜ່ານມາ ພວກເຮົາພາກັນຮ້ອງໂຮຊົມເຊີຍ, ບາງເທື່ອພວກເຮົາອັດລົດທະຫານແລ້ວຫຸ້ມໄປຈັບມື ສະແດງຄວາມຍິນດີຕໍ່ການໂຄ່ນລົ້ມລັດຖະບານຝ່າຍຂວາຈົນຮາບຄາບ. ເມື່ອມີໝູ່ຄູ່ ແລະ ປະຊາຊົນມາອັ່ງອໍຫລາຍສົມຄວນແລ້ວ ພວກເຮົາກໍພາກັນແຫ່ປ້າຍ ບ່າງເລາະໄປຕາມຖະໜົນ ປະຊາຊົນ ທີ່ເບິ່ງປູ່ຕາມແຄມຖະໜົນຕ່າງກໍທະຍອຍກັນເຂົ້າມາສົມທົບຂະບວນຂອງພວກເຮົາຈົນເປັນຂະບວນໃຫຍ່ຂຶ້ນເລື້ອຍໆ ແລະ ສຽງຮ້ອງສຽງໂຮກໍດັງແຮງຂຶ້ນຈົນສະນັ່ນເມືອງ... ( ບັນທຶກເປັນຮອຍປວກ ).

໑໑ ສິງຫາ ໑໙໖໐.

ຂ້ອຍກັບໝູ່ສືບກ່ວາຄົນພາກັນໄປເຮັດເຂົ້າຕົ້ມ ຢູ່ເຮືອນກົງເພັດ. ຕະຫລອດຕອນເຊົ້າ ຕົ້ມເຂົ້າຕົ້ມສຸກສອງໝໍ້ໃຫຍ່. ຕອນບ່າຍ ພວກເຮົາບໍາເຂົ້າຕົ້ມໄປແຈກຢາຍໃຫ້ທະຫານທີ່ຮັກສາການຢູ່ສະຖານທີ່ສໍາຄັນ ຕາມໃນເມືອງ. ປະກົດວ່າທະຫານ ທີ່ປະຈໍາຢູ່ ແຕ່ລະແຫ່ງ ໄດ້ຮັບຂອງຂວັນຈາກປະຊາຊົນເປັນຈໍານວນຫລວງຫລາຍ. ທະຫານທີ່ເຝົ້າຢູ່ສະຖານີ ວິທະຍຸໄດ້ຮັບເຂົ້າຕົ້ມເຕັມສາມສີບຸງ. ປະຊາຊົນຜູ້ໃດ ກໍ່ຍິ້ມແຍ້ມແຈ່ມໃສ ແລະ ຈັບມືກັບທະຫານດ້ວຍຄວາມຮັກແພງສະໜິດສະໜົມ.

ບັນທຶກໃບຕໍ່ງ ມາຂາດແຫວ່ງ ແລະ ເປື້ອນເປິຫລາຍ, ວັນທີກໍ່ບໍ່ຕິດຕໍ່ກັນ. ລູງເວັ້ນປີດຜ່ານໆ ໄປ...

໑໑ ທັນວາ ໑໙໖໐.

ບັນຍາກາດທົ່ວເມືອງວຽງຈັນພວມເຄັ່ງຕຶງ, ມີທະຫານຢູ່ທຸກຫົນທຸກແຫ່ງ. ເຂົາເຈົ້າເອົາແພແດງຄຽນຄໍ ບາງຄົນກໍ່ເອົາມັດແຂນເສື້ອໄວ້ ຫລືບໍ່ກໍ່ເອົາແພແດງຕ່ອນທໍ່ສອງນິ້ວມັດຕິດປາຍປືນ. ຕາມຖະໜົນມີລົດທະຫານຊໍ່ງຕິດຕັ້ງປືນໃສ່ ແລ່ນເລາະໄປມາ, ທະຫານຢູ່ເທິງລົດໜ້າຕາເຄັ່ງຂຶມ, ຂ້ອຍມັກປຸດເບິງເຂົາເຈົ້າ ແລະຮູ້ສຶກຂື້ນ

ໃຈທີ່ເຫັນເຂົາເຈົ້າວາງຊີງອີງອາດກ້າຫານ.

ປະຊາຊົນທົ່ວໄປພາກັນຂຸດຂຸມລີ້ໄພ, ຄອບຄົວຂ້ອຍຂຸດແລ້ວແຕ່ວານນີ້, ມື້ນີ້ສ້ອມແປງອີກເລັກໆ ນ້ອຍໆ. ປະຊາຊົນສ່ວນຫນຶ່ງອົບພະຍົບອອກໄປສູ່ນອກເມືອງ ເພື່ອຮັບປະກັນຄວາມປອດໄພ ທັງນີ້ເພາະທະຫານຝ່າຍຂວາຊຶ່ງຕິດແພຂາວໄດ້ຕັ້ງຖານທີ່ຫມັ້ນຢູ່ຄ້າຍຈີນາຍໂນ້ ແຕ່ຫຼາຍມື້ມາແລ້ວ.

໑໒ ທັນວາ ໑໙໖໐.

ມີການຫວ່ານໃບປິວຂອງກອງບັນຊາການ (ທະຫານແພແດງ) ຮຽກຮ້ອງໃຫ້ປະຊາຊົນລຸກຂຶ້ນຕໍ່ສູ້ກັບພວກລູກແຫລ້ງອາເມລິກາ. ຕາມຖະຫນົນຫົນທາງປະກົດມີທະຫານຫລາຍຂຶ້ນກ່ວາເກົ່າ. ລົດຕິດອາວຸດແລ່ນໄປແລ່ນມາເປັນສິບໆ.

ຕອນບ່າຍ ຂ້ອຍຂີ່ລົດຖີບ ໄປທີ່ທາງແບ່ງຈີນາຍໂນ້ ເພື່ອເບິ່ງເຫດການຢ່າງໃກ້ຊິດ. ເມື່ອໄປຮອດ ສາ ລາ ກິກຕາບກໍພົບວ່າທະຫານສອງຝ່າຍຈັ້ງກັນຢູ່ບ່ອນນີ້ ໂດຍມີເຂດເປົ່າຫວ່າງ ຢູ່ປະມານສາມຮ້ອຍແມັດ, ທະຫານແພແດງມີລົດຕັງສິບກ່ວາຄັນລຽນກັນຕາມຖະຫນົນ ຊຶ່ງຍັງມີ

ປະຊາຊົນສັນຈອນໄປມາຢູ່. ທະຫານແພແດງ ແລະ ແພຂາວຕັ້ງດ່ານກວດຄົນຜູ້ຫຽວໄປມາລະຫວ່າງສອງເຂດ.

ທີ່ທາງແບ່ງຈີ່ບາຍໄມ້ ຂ້ອຍແວ່ເຂົ້າຮ້ານກາເຟສັ່ງໂອລຽງມາກິນແລະແນມສາຍຕາໄປທີ່ຄ້າຍຈີ່ບາຍໄມ້ເຫັນປືນຈັກຕັ້ງຈຶກພຶກອ້ອມຄ້າຍ ຂ້ອຍຮູ້ສຶກບໍ່ສະບາຍໃຈ ແລະຄືກັບວ່າຕົນເອງຢູ່ໃນດິນແດນຕ່າງປະເທດ. ນັ່ງກິນໂອລຽງຢູ່ນິດໆ ຄາວຫນຶ່ງຂ້ອຍຕ້ອງຕື່ນລະເວີດເພາະມີຜູ້ມາທາງຫລັງແລ້ວຕົບບ່າ. ເມື່ອງວາກໄປກໍພົບຄຳພັກ ຮອງປະທານສະມາຄົມນັກສຶກສາ ຫນໍ່ກົ້ມລົງແລ້ວຖາມຄ່ອຍໆວ່າ "ໂຮງຮຽນເຂົ້າຢູ່ບໍ່ມື້ນີ້?" ຂ້ອຍບອກວ່າຍັງເຂົ້າຢູ່ແຕ່ນັກຮຽນຂາດຫລາຍ. ຫນໍ່ບອກວ່າບ້ານຢູ່ບໍ່ໄກ (ໃກ້ຈີ່ບາຍໄມ້ລົງໄປ), ນັບແຕ່ທະຫານສອງຝ່າຍຕັ້ງທ່າຂຶງໃສ່ກັນຢູ່ສາລາກິກຕານ ເລີຍບໍ່ໄດ້ໄປໂຮງຮຽນເປັນປົກກະຕິ, ມື້ໄປມື້ຂາດ. ຫນໍ່ບອກໃຫ້ຂ້ອຍລະວັງເພາະທະຫານແພຂາວບໍ່ໄວ້ໃຈຊາວຫນຸ່ມນັກສຶກສາ. ຂ້ອຍຖາມກ່ຽວກັບການໄປຝຶກອາວຸດກຽມຕໍ່ສູ້ກັບພວກແພຂາວຫນໍ່ບອກວ່າຈະຕິດຕໍ່ໃຫ້ແລະມື້ອື່ນຈະໄປໂຮງຮຽນແລະຈະບອກໃຫ້ຊາບ.

໑໓ ທັນວາ ໑໙໖໐.

ຂ້ອຍໄປໂຮງຮຽນ ພົບວ່າ ຫມູ່ຄູ່ນັກຮຽນຂາດຫລາຍກວ່າທຸກມື້. ເຂົາເວົ້າກັນເປັນຊຸບຊິບວ່າ ນັກຮຽນຈຳນວນຫນຶ່ງໄດ້ໄປສະຫມັກຈັບອາວຸດເພື່ອຕໍ່ສູ້ກັບພວກແພຂາວແລ້ວ. ມີຂ່າວແຜ່ໄປທົ່ວໂຮງຮຽນວ່າຄຳພັກຖືກຈັບໄປຂັງທີ່ຄ້າຍຈີນາຍໄມ້ແລ້ວແຕ່ຕອນກາງຄືນ. ຂ້ອຍຮູ້ສຶກ ຜິດຫວັງ ແລະ ກັບບ້ານ ຫລັງຈາກເຂົ້າຮຽນ ແຕ່ໂມງທຳອິດຊົ່ວໂມງດຽວ.

ຕອນບ່າຍເວລາຫນຶ່ງໂມງປາຍ ສຽງປືນໃຫຍ່ນັດທຳອິດໄດ້ດັງຂຶ້ນແລ້ວມິດໄປດົນເດີບ. ຕໍ່ມາກໍດັງຂຶ້ນອີກຫ້ານັດຕິດໆກັນ ຄົນໃນເຮືອນພວກເຮົາເບິ່ງຫນ້າກັນເປັນຄຳຖາມ. ແມ່ເວົ້າຂຶ້ນວ່າ:

"ເຂົາເກີດເສິກກັນແລ້ວໄດ໋." ທຸກຄົນຄອງຟັງຕໍ່ໄປ. ບໍ່ດົນສຽງປືນນ້ອຍປືນໃຫຍ່ກໍດັງຂຶ້ນຫລາຍແຫ່ງ ຈົນບໍ່ສາມາດນັບໄດ້. ພວກເຮົາແຕ່ລະຄົນແລ່ນເຕັ້ນເກັບສິ່ງຂອງເອົາແຕ່ເຄື່ອງຈຳເປັນ, ປະຕູປ່ອງຢ້ຽມຖືກອັດເປັນຕຶງຕັງ. ແລ້ວພວກເຮົາກໍແລ່ນລົງຂຸມ ຜູ້ໃດກໍຫາຍໃຈເຊົາໂຮ່ໆ!

ສຽງປືນມິດໄປອີກ ຂ້ອຍຂຶ້ນຈາກຂຸມ ແລະ ຍ່າງໄປທີ່ແຄມຮົ້ວດ້ານແຄມນ້ຳຂອງ ເຫັນທະຫານແພແດງ ເຫື່ອ

ລະສອງສາມຄົນແລ່ນລົງໄປທາງໃຕ້. ຂ້ອຍເບີງປູ່ແຄມຮົ້ວເປັນເວລາດົນ ແລະ ບໍ່ມີສຽງປືນດັງຂຶ້ນມາເລີຍ. ຂ້ອຍກັບຄືນລົງໄປຂຸມແລ້ວ ບອກພໍ່ວ່າຈະໄປຫາຫມູ່ຄູ່ເພື່ອຈະໄດ້ເຂົ້າຮ່ວມໃນຂະບວນຕໍ່ສູ້ຄຽງບ່າຄຽງໄຫລ່ກັບທະຫານແພແດງ. ແຕ່ພໍ່ຫ້າມໄວ້ໂດຍຊີ້ແຈງວ່າຂ້ອຍເປັນລູກຊາຍກົກຍາມຍາກແບບນີ້ ຈະໄດ້ເພິ່ງພາອາໄສ. **ພໍ່ແລະແມ່ອ້າງ**ເຫດຜົນຫລາຍຢ່າງ, ຈຸດຫນັກກໍແມ່ນຄວາມເປັນຫ່ວງຂອງພໍ່ແມ່ທີ່ມີຕໍ່ລູກຈົນຂ້ອຍໃຈອ່ອນແລ້ວກໍ (...)

໑໔ ທັນວາ ໑໙໖໐. .

(ບັນທຶກວັນນີ້ເສຍຫາຍຫລາຍ. ລຸງເວີນພະຍາບານອ່ານແລ້ວພໍສະຫລຸບໄດ້ວ່າ ລູກປືນໃຫຍ່ຕົກໃສ່ໃກ້ເຮືອນຫລາຍ ຈໍາເປັນຄອບຄົວນີ້ຕ້ອງອົບພະຍົບ ໄປຢູ່ດົງປ່າສັກຊຶ່ງເປັນເຂດຂອງອົງການທະຫານຝະລັ່ງ ແລະ ຖືກັນວ່າເປັນເຂດເປັນກາງ. ສ່ວນເຈົ້າຂອງບັນທຶກເຝົ້າເຮືອນກັບໝາຕົວຫນຶ່ງ).

໑໕ ທັນວາ ໑໙໖໐.

ທະຫານແພແດງທີ່ເຄີຍຍ່າງລົງໄປທາງໃຕ້ ມາມື້ນີ້ຍ່າງກັບຄືນ, ບາງຄົນທ່າທາງຟ້າວຟັ່ງ, ຄຸ້ມເຮົາຖືກລະ

ເປີດຕື່ມອີກ, ລູກປືນໃຫຍ່ຕົກລົງຍ່ານນັ້ນຍ່ານນີ້ ເຮືອນໃກ້ຄຽງຫລັງຫນຶ່ງຖືກລະເບີດຈົນແປຫລຸໂຈ່ງໂປ່ງ, ອີກຫລັງຫນຶ່ງຝາໂປດອອກເພາະລູກປືນຕົກລົງຂ້າມເຮືອນ ດິນຟົ້ງມາຮອດເຮືອນຂ້ອຍ.

ຫວິດຈາກສຽງປືນໃຫຍ່ດົບເຕີບ ມີທະຫານຄົນຫນຶ່ງແລ່ນຜ່າປະຕູ ຊຶ່ງອັດພໍແງບແງເຂົ້າມາໃນບ້ານທ່າທາງກະລົກກະລົນ ບໍ່ມີເຄື່ອງໝາຍວ່າເປັນຝ່າຍໃດ. ຂ້ອຍຮູ້ສຶກລັງເລໃຈ ຄຶດວ່າແມ່ນທະຫານເພແດງ ແຕ່ກໍບໍ່ແນ່ໃຈ. ເຂົາແລ່ນໄປທີ່ແຈຮົ້ວແລະຖືກໝາບັກກ່ານໄລ່ບໍາ. ສິ່ງທີ່ຂ້ອຍເຮັດໄດ້ໃນຂະນະນີ້ກໍແມ່ນແລ່ນໄປຫາ ເພື່ອຫ້າມບັກກ່ານບໍ່ໃຫ້ມັນກັດ ທາງປາກກໍໄລ່ເສາະໆ! ແຕ່ບັກກ່ານກໍບັງຫລູບໃສ່ຢ່າງເອົາຈິງ ເອົາຈັງ ທັງເຫົ່າສຽງຄັບບ້ານ. ເຂົາແລ່ນເລາະຮົ້ວໄປທາງດ້ານຊ້າຍມືແລະກົ້ມລົງຈັບເອົາທ່ອນໄມ້ແລ້ວຫັນມາຕັ້ງທ່າສູ້ກັບໝາ ພ້ອມດຽວກັນຂ້ອຍກໍແລ່ນໄປຮອດແລະດຶງປອກຄໍບັກກ່ານໄວ້. ແຕ່ແລ້ວທັນທີທັນໃດ ສຽງປືນກໍດັງຂຶ້ນລວາດຫນຶ່ງຕິດຕາມດ້ວຍສຽງອອກຄໍາສັ່ງວ່າ: "ປຸດ!" ຂ້ອຍງວາກໄປເບິງເຫັນທະຫານເພຂາວສອງຄົນລຸ່ເຂົ້າມາທ່າທາງຂຽວຂາດ, ຄົນຫນຶ່ງ

ເອົາປືນຈີ້ໄປຊື່ເຂົາຢ່າງຂະມັງຂະມໍ ອີກຄົນໜຶ່ງເຂົ້າເຖິງຕົວເຂົາແລະກວດຄົ້ນຫາອາວຸດ ຕໍ່ມາກໍ່ຈັດການມັດແຂນເຂົາໄຂ່ວໄປທາງຫລັງ. ຂ້ອຍບໍ່ຮູ້ຊິເຮັດແນວໃດເວົ້າຫຍັງບໍ່ອອກຮູ້ສຶກປ້ານທັງເຫັນໃຈເຂົາຜູ້ນັ້ນ. ບຶດໜຶ່ງທະຫານແພຂາວຄົນໜຶ່ງຖາມຂ້ອຍວ່າ "ເຈົ້າຢູ່ເຮືອນນີ້ບໍ?" ຂ້ອຍງຶກຫົວແລ້ວວ່າ "ແມ່ນແລ້ວ".

ເຂົາຜູ້ນັ້ນຖືກນຳຕົວອອກໄປ. ຂ້ອຍແນມນຳຫລັງເຂົາດ້ວຍຄວາມຮູ້ສຶກເປັນວາບໃນຫົວໃຈ. ນັບ (...)

ວັນທີ ໑ມີ ທັນວາ ແລະ ວັນຕໍ່ໆມາ ບັນທຶກເລົ່າເຖິງເຫດການ ທີ່ຄ່ອຍໆ ຫລຸດຄວາມຮ້າຍແຮງລົງ ແລ້ວເຂົ້າສູ່ຄວາມສະຫງົບ ປາສະຈາກສຽງປືນ. ລູງເວີນປີດຜ່ານໆໄປຫລາຍໜ້າ. ບັນທຶກບອກວັນເວລາໜຶ່ງເດືອນຕໍ່ມາ.

ມື້ນີ້ ມີສາລະວັດທະຫານສອງຄົນມາສ້ຖາມຂ້ອຍກ່ຽວກັບບຸກຄົນ ທີ່ໄດ້ບຸກລຸກເຂົ້າມາໃນບ້ານ ເມື່ອຕອນມີການສູ້ຮົບຕົບຕີກັນ. ຂ້ອຍເລົ່າເຫດການຕາມຄວາມເປັນຈິງໂດຍບໍ່ໄດ້ເພີ່ມເຕີມຫຍັງໝົດ. ເຂົາເຈົ້າຈົດເອົາຊື່ຂ້ອຍແລ້ວບອກໃຫ້ຊາບວ່າ ບຸກຄົນຜູ້ນັ້ນແມ່ນທະຫານ "ແນວລາວ" ທີ່ເຄື່ອນໄຫວຢູ່ເບື້ອງຫລັງຂະບວນນັກຮຽນນັກສຶກສາ ເວລາ

ຄະນະລັດຖະປະຫານກຳອຳນາດຢູ່ໃນວຽງຈັນ. ຂ້ອຍຕົກໃຈວາບ ແຕ່ກໍວິຕາງເຣັດ ທ່າທາງຕື່ນເຕັ້ນດີໃຈ. ເຂົາເຈົ້າບ້ອງບໍ່ສັນລະເສີນຂ້ອຍ ທີ່ໄດ້ປະກອບສ່ວນຈັບ " ແນວລາວ" ໄດ້ ແລະ ວ່າຂ້ອຍເປັນຄົນຮັກຊາດ (...)

.........

ຂ້ອຍໄດ້ຮັບຫລຽນໄຊກ້າຫານ ຈາກລັດຖະ ມົນ ຕີ ກະຊວງປ້ອງກັນປະເທດ. ຕອນເພິ່ນສຽບຫລຽນໃສ່ຫນ້າເອິກນັ້ນ ຂ້ອຍຮູ້ສຶກເປັນຮ້ອນໆໜາວໆ ຢ່າງບອກບໍ່ຖືກ. ຂ້ອຍປືນຊືງຢ່າງບໍ່ມີຊີວິດຈິດໃຈ, ຮູ້ສຶກວ່າຕົນເອງເປັນເຄື່ອງຂອງ ອັນຫນຶ່ງ ຫລືເປັນຕຸກກະຕາທີ່ເຂົາເອົາເຄື່ອງນຸ່ງງຊຸດທີ່ເຂົາພໍໃຈສຸບໃສ່ໃຫ້ ແລ້ວເອົາມາຕັ້ງໄວ້ ຕໍ່ຫນ້າມວນຊົນ. ສາຍຕານັບເປັນພັນເປັນຫມື່ນຄູ່ ແນມມາເບິ່ງຂ້ອຍ ຂ້ອຍເອງກໍເບິ່ງໄປຍັງມວນຊົນເຫລົ່ານັ້ນ ແຕ່ຂ້ອຍບໍ່ເຫັນຜູ້ໜຶ່ງຜູ້ໃດ - ກໍຄືງຊິຄືກັບສາຍຕາຂອງຕຸກກະຕານັ້ນລະ. ຂ້ອຍບໍ່ກ້າແນມເບິ່ງບຸກຄົນໃດບຸກຄົນຫນຶ່ງໂດຍສະເພາະ ທັງນີ້ຍ້ອນບໍ່ກ້າປະເຊີນກັບສາຍຕາຂອງບຸກຄົນນັ້ນໆ. ໄດ້ແຕ່ເບິ່ງໄປລວມໆ.

ແມ່ນແລ້ວ ຂ້ອຍເປັນຕຸກກະຕາ ແຕ່ເປັນຕຸກກະຕາທີ່

ພວມສຳນຶກວ່າ ຕົນເອງມີໂທດກຳ ມີຄວາມຢ້ານກົວໂດຍບໍ່ຮູ້ວ່າຢ້ານກົວອັນໃດ, ອາດຈະແມ່ນຢ້ານກົວຕົນເອງທີ່ໄດ້ມີຄວາມຜິດພາດ, ໄດ້ສ້າງຄວາມເສຍຫາຍອັນໜັກຊຶ່ງມັນອາດຈະບັງເອີນ ແຕ່ຂ້ອຍກໍໄດ້ຊື່ວ່າເປັນຜູ້ທຳລາຍນິດສະຫາຍ, ທຳລາຍ (...)

ຕອນກັບບ້ານ ຂ້ອຍປິດຫລຽນໄຊ ຍັດໃສ່ຖົງສົ້ງແລ້ວຈຶ່ງກ້າຍ່າງຜ່ານຄຸ້ມຕົນເອງ, ຂ້ອຍຮູ້ສຶກວ່າຍ່າງບໍ່ທ່ຽງບໍ່ຖືກທາງ ແລະ ຮູ້ສຶກອາຍຢ່າງບໍ່ເຄີຍອາຍມາກ່ອນໃນຊີວິດ.

ຄ່ຳມາ ຂ້ອຍເປີກສາຫາຮູ້ນຳພໍ່ກ່ຽວກັບບັນຫາທີ່ຂ້ອຍພວມປະສົບຢູ່. ຂ້ອຍວ່າເລື່ອງນັ້ນຊິໜັກໜ່ວງເມືອໜ້າ ແລະ ຄິດຢາກໂຕນໄປຮ່ວມຂະບວນນຳຊາວໜຸ່ມອື່ນໆ ທີ່ທຳການຕ້ານພວກຝ່າຍຂວາ. ພໍ່ນິດຢູ່ດົນເຕີບ ແລ້ວເວົ້າຂຶ້ນສຽງຄ່ອຍຂ້າງເບົາວ່າ: " ພໍ່ກໍບໍ່ຢາກຫ້າມດອກ ແຕ່ໃຫ້ຄິດຄັກໆ ຖ້າຮຽນຈົບບາໄຊ (ຈົບອຸດົມ) ແລ້ວຄ່ອຍໄປຊິບໍ່ດີກວ່າບໍ ເພາະເພິ່ນມັກເລືອກເອົາ ຊາວໜຸ່ມທີ່ມີລະດັບດີສົ່ງໄປຮຽນຕໍ່ໃນຕ່າງປະເທດແລ້ວກັບມາສິດສອນວິຊາຄວາມຮູ້ໃຫ້ຂະບວນເຕີບໃຫຍ່ຂະຫຍາຍໂຕ ..."

.........

ໜັງສືພິມຮູບຂ່າວອາເມລິກາ ລົງພິມເລື່ອງກ່ຽວກັບຂ້ອຍພ້ອມດ້ວຍຮູບຕິດຫລຽນກ້າຫານທີ່ໜ້າເອິກ. ຂ້ຽນໄດ້ສັນລະເສີນບ້ອງບໍ່ຂ້ອຍພິລຶກ ຈົນອ່ານແລ້ວຂົນໜາວແຕກເປືອບໆ. ເມື່ອໄປໂຮງຮຽນຂ້ອຍກໍ່ຖືກໝູ່ຄູ່ເວົ້າເຍີ້ຍສຽດສີຈົນບໍ່ມີແນວຊິເວົ້າຕອບເຂົາ ໝູ່ວ່າຄົນກ້າຫານຄືຈັ່ງຂ້ອຍນີ້ ມີແຕ່ຜີນະລົກທີ່ນັ້ນບ້ອງບໍ່ສັນລະເສີນ ມີຜູ້ລັກແຕ້ມຮູບຂ້ອຍໃສ່ກະດານໂດຍມີແຜ່ນມົນໆ ຂະໜາດໃຫຍ່ຕິດໃສ່ໜ້າເອິກ. ໃນວົງມົນນັ້ນຂຽນວ່າ: " ຝາຟຸ້ຍ ".

ເຂົາເລົ່າກັນຢູ່ໂຮງຮຽນວ່າ ບຸກຄົນທີ່ຖືກຈັບຢູ່ໃນ ບໍລິເວນບ້ານຂ້ອຍນັ້ນບໍ່ແມ່ນແນວລາວ ຫາກແຕ່ແມ່ນຊາວໜຸ່ມປະກອບອາວຸດ ທີ່ໄດ້ຍຽງບ່າຍຽງໄຫລ່ກັບທະຫານແພແດງຕໍ່ສູ້ກັບພວກແພຂາວ, ເຂົາໜີໄປບໍ່ທັນໝູ່ຈຶ່ງຖືກໄລ່ນໍາຈົນຕ້ອງແລ່ນເຂົ້າໄປໃນບ້ານປະຊາຊົນ.

ຂ້ອຍຄິດວ່າ (...)

ເພາະປຶ້ມບັນທຶກຫົວນີ້ຊຸດໂຊມຫລາຍ ລຸງເວີນເລືອ: ອ່ານແຕ່ໜ້າທີ່ພໍອ່ານໄດ້ສະດວກ ແລ້ວກໍເອົາລວມໄວ້ໃ ກອງປຶ້ມເກົ່າໆ. ຕໍ່ຈາກນັ້ນລາວກໍລືມປຶ້ງຕະຫລອດມາ

ວັນຫນຶ່ງໃນປີ ໑໙໗໖, ລຸງເວີນຂັບລົດຕັກຊີແລ່ນໄປຮອດຄຸ້ມຫົວເມືອງ (ຫລັກສອງ) ກໍມີຊາຍສອງຄົນປຸດລົດແລ້ວ ບອກໃຫ້ໄປສົ່ງຄຸ້ມທາດຂາວ. ຊາຍຄົນຫນຶ່ງນຸ່ງເຄື່ອງພົນລະເຮືອນ, ອີກຄົນຫນຶ່ງນຸ່ງເຄື່ອງແບບທະຫານແລະມີຜ້າຍຜູກແຂນມັດເຕັມທັງສອງເບື້ອງ. ຈາກການສົນທະນາຂອງບຸກຄົນທັງສອງ ລຸງເວີນກໍພໍເຂົ້າໃຈວ່າ ຜູ້ນຸ່ງເຄື່ອງພົນລະເຮືອນ ເຊີນຜູ້ນຸ່ງເຄື່ອງ ທະ ຫານ ໄປ ຢ້ຽມຢາມເຮືອນ. ບາງຄັ້ງການສົນທະນາກໍກ້ຽວຄືນເຖິງເລື່ອງເກົ່າເລື່ອງຫລັງ. ຜູ້ນຸ່ງເຄື່ອງທະຫານຖືກຖາມຫລາຍບັນຫາແຕ່ເຂົາກໍຕອບດ້ວຍຄວາມລະມັດລະວັງ.

ເຂົາເວົ້າຕອບຫນຶ່ງວ່າ:

" ເຮົາຫນີອອກໄປໃນທ້າຍເດືອນກໍລະກົດ ໑໙໖໑ ໄປນຳກັນສາມຄົນ, ອາໄສຄົນຫນຶ່ງຮູ້ຈັກທາງເລີຍຮອດຈຸດທີ່ໝາຍຢ່າງປອດໄພ ".

" ບໍ່ຊວນເອົາກັນໄປນຳແດ່ເວີຍ ! "

" ບໍ່ກ້າບອກໃຜຢ້ານເສຍລັບຕອນນັ້ນ. ແມ່ນແຕ່ແມ່ເຮົາກໍບໍ່ໄດ້ບອກເພາະຢ້ານເພິ່ນຫ້າມ, ຮູ້ແຕ່ພໍ່ຊົງເພິ່ນກໍເປັນຫ່ວງທີ່ສຸດ. ສາມຄົນພວກເຮົາປຶກສາກັນເທື່ອສຸດທ້າຍກໍ

ແມ່ນຢູ່ເຮືອນເຮົາເອງ ຊຶ່ງເວລານັ້ນເຊົ້າຢູ່ຄຸ້ມອຸບມຸງແຄມນ້ຳຂອງ: ເຮົາຫນີໄປໄດ້ສອງປີພໍ່ແມ່ກໍຍ້າຍໄປເຊົ້າຢູ່ບ່ອນອື່ນ. ບໍ່ດົນຕໍ່ມາເພີ່ນກໍກັບໄປຢູ່ຖິ່ນເດີມທີ່ວັງວຽງ"

ເມື່ອມີການກ່າວເຖິງເຮືອນເຊົ້າທີ່ຄຸ້ມອຸບມຸງ ລຸງເວີນເພີ່ມຄວາມສົນໃຈໃນຕົວທະຫານຄົນນີ້ຂຶ້ນອີກ. ລາວສ່ອງເບິ່ງແວ່ນສະທ້ອນ ເຫັນໃບຫນ້າຂອງທະຫານທີ່ນັ່ງຢູ່ຕັ່ງຫລັງທ່າທາງສະຫງົບສະຫງ່ຽມແຕ່ອິດອາດ. ຮູບຫນ້າສີຫລ່ຽມ ບອກຮ່ອງຮອຍຂອງຄວາມບຸກບືນ ທົນທານຕໍ່ຄວາມທຸກຍາກກັນດານ. ເຂົາມັກຍິ້ມອອກມາເມື່ອເວົ້າສຸດປະໂຫຽກ.

ຕອນຫນຶ່ງຜູ້ນຸ່ງເຄື່ອງພົນລະເຮືອນເວົ້າຂຶ້ນວ່າ:

" ພົງຄຳເຮົາບໍ່ຄິດວ່າໂຕຊີຍັງມີຊີວິດຢູ່. ເຮັດຈັ່ງໃດວ່າຫາຍສາບສູນໄປຊື່ໆ, ບາດພໍ້ວ້ກັບມາແລ້ວ ເປັນທະຫານປົດປ່ອຍ".

" ເຮົາກໍບໍ່ຄິດວ່າຊີລອດຊີວິດມາຮອດມື້ນີ້ໄດ້ເພາະສົງຄາມທີ່ອາເມລິກາກໍ່ຂຶ້ນນີ້ ມັນໂຫດຫ້ຽມເຫລືອທີ່ຈະພັນລະນາໄດ້. ເບິ່ງລູກບົມທີ່ຍົນມາຖິ້ມລົງແຕ່ລະມື້ ຄືແຜ່ນດິນຊີປີ້ນນີ້ແຫລະ. ສັດສາວາສິ່ງລວມທັງຕົ້ນໄມ້ກໍຄືວ່າຊີບໍ່

ເຫລືອບໍ່ຫລໍ ແຕ່ໃນທີ່ສຸດມັນກໍ່ຍັງມີເຫລືອ. ທຳມັນຕ້ອງຊະນະອະທຳ, ເຮົາລອດເຫລືອມາໃຫ້ເຫັນຜູ້ໃດກໍ່ດີອົກດີໃຈ ຈັດພາສີສູ່ຂວັນໃຫ້ ເຮົາຄຶດວ່າໂຕເອງຕາຍແລ້ວເກີດໃຫມ່" ຜູ້ທີ່ຖືກເອີ້ນວ່າພົງຄຳເວົ້າແລ້ວຫົວຢູ່ໃນຣູຄໍ.

" ນີ້ບໍ່ ໂຕກ່າວຊິໄດ້ພົບຫມູ່ເພື່ອນເກົ່າໆ ເຮົາເຊີນມາຮ່ວມພາເຂົ້ານຳຫລາຍຄົນເພື່ອຕ້ອນຮັບໂຕເປັນພິເສດ ໃນຖານະທີ່ຫາຍສາບສູນໄປ ແລ້ວເປັນຕົນ ເປັນໂຕກັບ ມາອີກ".

" ຂອບໃຈນຳຫລາຍໆແຫລ່ວ ທີ່ຫມູ່ພວກໃຫ້ ການຕ້ອນຮັບຢ່າງດີ. ເຮົາຫາຍສາບສູນໄປກໍ່ເພາະຖ້າຢູ່ຄົນເຂົ້າໃຈເຮົາຜິດ. ໂຕກໍ່ຄົງຊິໄດ້ອ່ານຕີ່ຫນັງສືພິມຣຸບຂ່າວຂອງອາເມລິກາມັນລົງກ່ຽວກັບເຮົາຕອນນັ້ນ".

" ເອີ... ເຄີຍອ່ານຢູ່".

" ມັນຍົກເຮົາຂຶ້ນເພື່ອໃຫ້ຄົນຫວືດດືນ ເພື່ອໂຄສະນາມັນວ່າເຮົາເປັນຊາຍຫນຸ່ມຕົວຢ່າງ ທີ່ຕ້ານກອມມູນິດ ກ້າຫານເດັດດ່ຽວຈົນສາມາດຈັບ "ແນວລາວ" ໄດ້. ແຕ່ຄວາມຈິງບໍ່ແມ່ນແນວລາວ. ພວກເຮົາຮູ້ພາຍຫລັງວ່າແມ່ນຊາວຫນຸ່ມໂຮງຮຽນກົດຫມາຍ. ສະຫາຍຄົນນັ້ນຖືກເຂົາເອົາໄປຂ້າ

ຢູ່ແກ້ງບາງຫລັງຈາກຖືກຈັບໄປຂັງໄວ້ສອງອາທິດ.

ເຮົາເອງເປັນປັ່ນປ່ວນ ບໍ່ຊ່າງຊິຢູ່ຊິກິນ ຕ້ອງຢູ່ຢ່າງຈອບໆມອບໆ ບໍ່ເປັນໂຕຂອງໂຕເອງ, ເສຽໃຈບ້ອນບໍ່ໄດ້ຕໍ່ສູ້ຮ່ວມກັບຫມູ່ຊາວຫນຸ່ມ ຕອນພວກຂວາ ໂຈມຕີວຽງຈັນ, ແລ້ວຊ້ຳຍັງມາຖືກຖິ້ມໃສ່ວ່າເປັນຕົວຕັ້ງຕົວຕີຈັບ "ແນວລາວ" ຕື່ມອີກ. ດັ່ງນັ້ນເຮົາຈຶ່ງຕັດສິນໃຈຫນີອອກໄປປະກອບພາລະກິດແທນສະຫາຍຜູ້ນັ້ນ ໄປແກ້ແຄ້ນໃຫ້ສະຫາຍໂດຍທີ່ເຮົາກໍບໍ່ຮູ້ຈັກຊື່ຊ້ຳ ແຕ່ກໍຖືເອົາວ່າເປັນສະຫາຍຂອງເຮົາ.

ຄິດຫາ "ຫລຽນກ້າຫານ" ອັນນັ້ນແລ້ວບາງເທື່ອເຮົາກໍຫົວຢູ່ຜູ້ດຽວ. ຈື່ໄດ້ດີເຮົາແກ່ວງມັນລົງນ້ຳຂອງແຕ່ປາງນັ້ນພຸ້ນລະ".

"ເອີ... ເຮົາກ່າເຫັນຮູບໃນຫນັງສືພິມນັ້ນລະ ເຫັນຕິດຫລຽນເປັ້ເຈັ້ຢູ່ເຮິງ" ຜູ້ນຸ່ງຊຸດພົນລະເຮືອນເວົ້າແລ້ວຫົວ.

ຕອນນີ້ ລຸງເວີນຈອດລົດເອົາຜູ້ໂດຍສານອີກຄົນຫນຶ່ງທີ່ກວັກມືຢູ່ແຄມທາງ. ຫລັງຈາກສຽງອັດປະຕູດັງກຶບລົດກໍແລ່ນຕໍ່ໄປ, ອີກບໍ່ດົນກໍຈອດໃຫ້ຜູ້ໂດຍສານສອງຄົນກ່ອນນັ້ນລົງ. ເຂົາເຈົ້າຍື່ນເງິນໃຫ້ແຕ່ລຸງເວີນປະຕິເສດ.

" ໄດ້ລະບໍ່ເອົານໍາດອກ "

" ວະ...ເປັນຫຍັງ ?" ຫນຶ່ງໃນສອງຄົນນັ້ນຖາມ.

" ບໍ່ເປັນຫຍັງບໍ່ເອົານໍາດອກຂໍສະແດງຄວາມດີໃຈນໍາ ທີ່ພວກສະຫາຍທັງສອງໄດ້ພົບພໍ້ກັນ ".

ທັງສອງກ່າວຂອບໃຈ ແລະ ເຊີນລຸງເວິນແວ່ຮ່ວມຮັບ ປະທານອາຫານນໍາ ແຕ່ລາວປະຕິເສດຕາມມາລະຍາດ ອີກຢ່າງຫນຶ່ງ ລາວຕ້ອງໄປສົ່ງຜູ້ໂດຍສານຄົນອື່ນຕາມ ຫນ້າທີ່. ທັງສອງຍ່າງຂ້າມທາງເບັດຫນ້າໃສ່ເຮືອນຫລັງ ຫນຶ່ງຊຶ່ງຢູ່ແຄມທາງ, ສັງເກດເຫັນມີຄົນມາໂຮມແດ່ແລ້ວ. ສ່ວນລຸງເວິນຂັບລົດມຸ່ງຫນ້າຕໍ່ໄປ, ຈິດໃຈຂອງລາວຍັງ ຈົດຈໍ່ຢູ່ນໍາຮູບພາບໃບຫນ້າ ແລະເລື່ອງລາວຂອງທະຫານ ຄົນນັ້ນຢູ່ບໍ່ເລີກບໍ່ແລ້ວ.

ຕອນແລງມາ ລຸງເວິນໄປຄົ້ນກອງປຶ້ມເກົາໆເບິງ ອີກ. ລາວຮູ້ສຶກວ່າປຶ້ມຫລາຍຫົວໄດ້ສູນເສັຽໄປລວມທັງປຶ້ມ ບັນ ທຶກຫົວນັ້ນ ອາດມີຄົນໃນເຮືອນເອົາໄປຄຸ້ມຫລືຈີກເອົາເຈັ້ ໄປຫໍ່ສິ່ງຂອງ ເພາະສະພາບ ຂອງປຶ້ມ ຊຸດໂຊມ ຫລາຍ. ລາວຈັບເອົາຫນັງສືພິມຮູບຂ່າວຫົວເກົ່າໆເປີດເບິ່ງ ແລະ ໄປປຸດຢູ່ຫນ້າທີ່ມີເລື່ອງລາວຂອງທ້າວພົງຄໍາ. ລາວເຫັ

ວ່າຊາຍຫນຸ່ມຜູ້ນີ້ ມີສ່ວນຄ້າຍຄືທະຫານຄົນນັ້ນຫລາຍ, ລັກສະນະທ່າທາງມີອັນຜິດກັນແດ່ ແຕ່ນັ້ນກໍເປັນທຳມະດາເພາະວັນເວລາໄດ້ຜ່ານໄປ, ບຸກຄົນຫນຶ່ງໃນສິບກ່ວາປີຫລັງກໍຕ້ອງຕ່າງຈາກບຸກຄົນດຽວກັນນີ້ໃນວັນ ແລະ ເວລານີ້. ລາວອ່ານເລື້ອງລາວຂອງທ້າວພົງຄຳແຕ່ຕົ້ນຈົນສຸດແລ້ວກໍຄິດເສຽດາຍປູ່ບໍ່ເລີກບໍ່ແລ້ວທີ່ຄົ້ນຫາປຶ້ມບັນທຶກຫົວນັ້ນບໍ່ເຫັນ. ລາວແນ່ໃຈວ່າທະຫານຄົນນັ້ນ ຜູ້ທີ່ຫມູ່ຂອງເຂົາເອີ້ນຊື່ວ່າ ພົງຄຳ ແມ່ນຄົນຄົນດຽວກັບເຈົ້າຂອງບັນທຶກຫົວນັ້ນ ແລະ ຄົນດຽວກັບທີ່ຫນັງສືພິມຮູບຂ່າວລົງເລື້ອງລາວຊຶ່ງລຸງເອີນພວມຖືຢູ່ໃນມືດຽວນີ້.

# ພໍ່ແຫ້

* ອາດຈະບໍ່ແມ່ນຄວາມຕັ້ງໃຈຂອງຜູ້ເປັນແມ່ ທີ່ຈະໃຫ້ລູກຢ້ານຄົນ, ໂດຍສະເພາະແມ່ນ ຄົນທີ່ເປັນທະຫານກອງທັບປົດປ່ອຍ. ແຕ່ນີ້ຫັ້ນ ກະວິນຮ້ອງໄຫ້ແອ່ວແມ່ປູ່ຕັ້ງດົນນານ ແມ່ອອຍຈັ່ງໃດກໍບໍ່ເຊົາ, ພໍດີຫລຽວໄປເຫັນທະຫານສາມຄົນ ຍ່າງຜ່ານໜ້າບ້ານ ແມ່ຈຶ່ງເວົ້າຂຶ້ນວ່າ:

"ຫັ້ນ! ທະຫານຊິມາຈັບຄົນຂີ້ໄຫ້, ນິດ! ຄັນບໍ່ມິດເພິ່ນຊິມາຈັບໃດ".

ແມ່ຂອງກະວິນເວົ້າສຽງດັງໆ ຈົ່ງໃຈໃຫ້ທະຫານພວກນັ້ນໄດ້ຍິນ ເພື່ອວ່າໃຫ້ເຂົາເຈົ້າສົ່ງສຽງ ນາບາບຄູ່ໃຫ້ລູກຊາຍເຊົາຮ້ອງໄຫ້ ແລະ ມັນກໍເລື້ອງທໍາມະດາ ເປັນນິໄສປ່າງໜຶ່ງຂອງຄົນສ່ວນຫລາຍ ທີ່ມັກຕອບສະໜອງເຈຕະນາດັ່ງກ່າວນັ້ນ ເຖິງວ່າໃນສ່ວນເລິກແລ້ວ ເປັນການບໍ່ເໝາະສົມ. ທະຫານຄົນໜຶ່ງໃນສາມຄົນນັ້ນ ຮ້ອງມາໃສ່ສຽງຂຶງຂັງວ່າ:

"ຢ່າໄຫ້ເດີ! ຢ່າໄຫ້! ນິດ ນິດ!".
ໄດ້ຍິນແນວນັ້ນ ກະວິນນິດທັນທີທັນໃດ.

ເຫັນວ່າການສົ່ງສຽງບອກເດັກນ້ອຍ ໄດ້ຜົນເດັດຂາດ ເຈົ້າຂອງສຽງຄົງຮູ້ສຶກ ບໍ່ສະບາຍໃຈ ຈຶ່ງເວົ້າຕໍ່ອີກ ແຕ່ເຮັດສຽງນຸ່ມນວນ ແບບອິ່ນອອຍວ່າ: "ເປັນຄົນຮູ້ເນີ ຢ່າແອ່ວແມ່ເນີ" ແລ້ວກໍຜ່ານການຫວິດໜ້າບ້ານໄປ.

ກະວິນເຊົາຮ້ອງໄຫ້ ແຕ່ກໍຍັງສະອຶກຽປູ່. ແມ່ເວົ້າຕື່ມອີກວ່າ:

"ເຊົາເດີ... ຄັນບໍ່ເຊົາເພິ່ນຊິກັບຄືນມາຈັບແຫ້ງ!".

ກະວິນອາຍຸສາມປີເຄິ່ງ, ຮ້ອງໄຫ້ແອ່ວແມ່ເທື່ອນີ້ ກໍເພາະປາກໄດ້ໝາກປຸມເປົ້າ. ກະວິນເຫັນເດັກນ້ອຍຄົນໜຶ່ງ ຈັບໝາກປຸມເປົ້າ ຍ່າງກາຍໜ້າບ້ານໄປ ດັ່ງນີ້ຈຶ່ງແອ່ວແມ່ ໃຫ້ໄປຊື້ມາໃຫ້. ແມ່ບອກວ່າ ຖ້າບຶດດຽວ ບໍ່ດົນຄົນຂາຍກໍຈະຜ່ານກາຍມາ ແລ້ວແມ່ຈະຊື້ໃຫ້. ແຕ່ຄອງແລ້ວຄອງອີກ ຄົນຂາຍໝາກປຸມເປົ້າກໍບໍ່ຜ່ານມາ ກະວິນຈຶ່ງໄຫ້ແອ່ວ.

ຄອບຄົວຂອງກະວິນ ມີສະມາຊິກບໍ່ຫລາຍຄົນ ຄືມີພໍ່ຕູ້, ບ້າສາວ ແລະ ແມ່ ລວມກັບກະວິນເປັນສີ່ຄົນ. ສ່ວນ

ພໍ່ຂອງກະວິນ ເປັນທະຫານໃນລະບອບເກົ່າ ຍົດຮ້ອຍເອກ ແລະ ໄດ້ໂຕນໜີອອກຈາກປະເທດໄປ ແຕ່ຕອນປົດປ່ອຍແລ້ວໃໝ່ໆ. ຕອນນັ້ນກະວິນອາຍຸເກົ້າເດືອນ. ເມື່ອໃຫຍ່ມາພໍປາກເວົ້າເປັນ ກະວິນກໍຮູ້ຈັກແຕ່ເອີ້ນແມ່, ຕູ້, ນ້າພອຍ. ສ່ວນຄຳວ່າພໍ່ນັ້ນ ຍັງບໍ່ເຄີຍໃຊ້ເອີ້ນເທື່ອ. ກະວິນມີອ້າຍຢູ່ຄົນໜຶ່ງ ແຕ່ປູ່ເອົາໄປຢູ່ນຳທີ່ທ່າແຂກ ເພື່ອແບ່ງເບົາພາລະຂອງແມ່ ທີ່ຕ້ອງຫາລ້ຽງກຸ້ມຄອບຄົວ ດ້ວຍຕົນເອງ. ເມື່ອພໍ່ໂຕນໜີໄປໃໝ່ໆ ແມ່ຂອງກະວິນຄ້າຂາຍເລັກໆນ້ອຍໆ ເພື່ອຫາລາຍໄດ້ມາລ້ຽງຄອບຄົວ ຊຳຊາຖ້າຜົວ ຊຶ່ງໄດ້ສັນຍາວ່າ ຈະສົ່ງເງິນມາໃຫ້ ແລ້ວຄ່ອຍຕິດຕາມໄປຫາທີຫລັງ. ແຕ່ຄອງແລ້ວກໍຈ້ອຍ ນາງບໍ່ເຄີຍໄດ້ຮັບເງິນຈາກຜົວ ຈົນເວລາຜ່ານໄປປີໜຶ່ງເຕັມໆ. ຍ່າງເຂົ້າປີທີສອງ ນາງໄດ້ຮັບຂ່າວວ່າ ຜົວຂອງນາງເອົາເມຍໃໝ່ແລ້ວ ຢູ່ສູນອົບພະຍົບໜອງຄາຍ ທີ່ປະເທດໄທ. ຂ່າວນີ້ບໍ່ເປັນເລື່ອງທີ່ຄາດບໍ່ເຖິງສຳລັບນາງເພາະເຄີຍມີຫລາຍຄູ່ຫລາຍລາຍມາແລ້ວ ທີ່ເອົາກັນເປັນຜົວ ເປັນເມຍ ຢູ່ສູນອົບພະຍົບ ໂດຍທີ່ຝ່າຍຍິງບາງຄົນນັ້ນມີຜົວ ຊຶ່ງພວມຮ່ຳ

ຮຽນປູ່ສູນສຳນະນາຄັດສ້າງ ເພື່ອຫັນປ່ຽນແນວຄິດໃໝ່ ແຕ່ຄອງຄອບຜົວບໍ່ໄດ້ ກໍໂຕນໜີໄປ ແລ້ວໄປໄຄ່ວຄ້ວາເອົາຜູ້ໃດກໍໄດ້ ທີ່ເປັນຊາຍ ພໍທີ່ຈະນຳພາຕົນໄປຍັງປະເທດ ອື່ນໆເຊັ່ນ ອາເມລິກາ ຝະຣັ່ງ ຫລື ໂອດສະຕາລີ. ຊາຍບາງຄົນ ກໍປະຄວາມຮັບຜິດຊອບຕໍ່ຄອບຄົວ ແລ້ວໂຕນໜີໄປແບບຕັດຫາງປ່ອຍ, ເບິ່ງແລ້ວກໍຄືວ່າ ໃນຈິດໃຈຂອງເຂົານັ້ນ ບໍ່ມີສິ່ງທຳປະຈຳໃຈ ພໍທີ່ຈະເອີ້ນວ່າ ເປັນມະນຸດໄດ້ເຄີຍມີແມ່ຍິງຄົນໜຶ່ງປູ່ຄຸ້ມດຽວກັບແມ່ກະວິນ ໄດ້ນຳໄປຫາຜົວ ທີ່ໂຕນໄປກ່ອນແລ້ວ, ແຕ່ບໍ່ຮອດເດືອນ ແມ່ຍິງຄົນນັ້ນກໍຕ້ອງກັບຕ່າວຄືນມາ ເພາະຜົວໄປຕິດສາວ ແລະ ພວມຈະໄປຢູ່ຕ່າງປະເທດນຳກັນ.

ເມື່ອໄດ້ຂ່າວກ່ຽວກັບຜົວເອົາເມຍໃຫມ່ ແມ່ຂອງກະວິນກໍເລີກລົ້ມຄວາມຕັ້ງໃຈທີ່ຈະນຳໄປຫາ, ປະສົມກັບການໄດ້ຮຽນຮູ້ແນວຄິດໃຫມ່ໆ ນາງເຫັນແຈ້ງປ່ອງທາງດຳເນີນຊີວິດອັນຖືກຕ້ອງປອດໃສ ແລະ ມີຄວາມເຊື່ອຫມັ້ນຕໍ່ອະນາຄົດຕື່ມອີກ. ຕໍ່ມານາງສະຫມັກເຂົ້າເປັນພະນັກງານຂອງບໍລິສັດລັດວິສາຫະກິດແຫ່ງໜຶ່ງ ດຳເນີນຊີວິດດ້ວຍຄວາມປົກກະຕິຫຸ່ນຫ່ຽງ ແລະພະຍາຍາມລືມຜົວຜູ້ກິດຄິດ

ທຳລະບົດຄົບນັ້ນ. ນາງຄຶດໄດ້ໃຫມ່ວ່າເປັນການດີເສຽອີກທີ່ຜົວໄດ້ປະຮ້າງຫ່າງໄປເພາະຕະຫລອດເວລາທີ່ຢູ່ຮ່ວມ ກັນເປັນເວລາເຈັດ-ແປດ ປີນັ້ນເຂົາມີແຕ່ນຳຄວາມເດືອດຮ້ອນມາສູ່ຄອບຄົວເປັນສ່ວນໃຫຍ່ ເຊັ່ນມັກຫລິ້ນແສ້ພາບສາວຫລິ້ນການພະນັນ. ບາງເທື່ອກໍເມົາມາອາລະວາດຕົບ ຕີເມຽ. ບາງຈື່ໄດ້ດີທີ່ເທື່ອຫນຶ່ງເຂົາຫລິ້ນໄພ້ເສັຽແລ້ວກໍລັກເອົາສາຍສ້ອຍຂອງນາງໄປຂາຍ, ເມື່ອນາງຮູ້ເລື່ອງກໍເກີດມີການຕໍ່ວ່າຖົກຖຽງກັນ ແລະ ມ້ວນທ້າຍດ້ວຍການຕົບຕີກັນຈົນເລືອດຕົກປາງອອກ. ເຂົາຫນີຈາກເຮືອນໄປຫນຶ່ງເດືອນແລ້ວກໍພົ້ວກັບມາ, ເປັນເລື່ອງທຳມະດາທີ່ເຂົາຫນີຈາກເຮືອນໄປເປັນເວລາເດືອນຫນຶ່ງຫລືສອງເດືອນ ເພາະເຄີຍໄປດີດລາວເອົາເມຽນ້ອຍ. ບາງເຄີຍຫອບລູກຫນີຈາກເຂົາໄປແຕ່ກໍຖືກເຂົານຳໄປຊູຊີຈົນໄດ້ ໃນທີ່ສຸດກໍກັບຄືນມາຫາກັນໃຫມ່. ຊີວິດໃນຄອບຄົວເປັນຫລຸບໆເຂີນໆບໍ່ສຸກຊື່ນຊຸ່ມເປັນບໍ່ຫມັ້ນຄົງຖາວອນ. ເມື່ອເຂົາມາຕັດຂາດໄປແນວນີ້ກໍຄືດັ່ງຄວາມຝັນຮ້າຍໄດ້ສູນສະຫລາຍໄປ. ນາງບໍ່ຍອມເອີຍປາກບອກກະວິນວ່າພໍ່ໄປໃສ. ຮູບແຜ່ນຂະຫນາດໃຫຍ່ທີ່ແຂວນຢູ່ຝາເຮືອນນັ້ນ ນາງກໍປົດເຊື່ອງໄວ້ແຕ່ຕອນຜົວໂຕນ

ຫນີໄປໃຫມ່ໆ ຍ້ອນເຫັນວ່າເປັນການບໍ່ເຫມາະສົມກັບສະພາບການເພາະຮູບນັ້ນ ພົວແຕ່ງຊຸດທະຫານລາວຊະອານາ ຈັກຕິດສາມດາວເປັ້ເຈັ້.

ເມື່ອແມ່ໄປການ ກະວິນກໍຢູ່ນຳພໍ່ຕູ້ຊຶ່ງມາຢູ່ເປັນຫລັກເອື່ອຍອີງໃຫ້ຄອບຄົວນັບແຕ່ພໍ່ໄດ້ໂດນຫນີໄປ, ບາງມື້ກໍຢູ່ນຳນ້າພອນ. ອີກບໍ່ດົນໂຮງການຂອງແມ່ກໍຈະມີບ່ອນຝາກເດັກ ແລ້ວກະວິນກໍຈະໄດ້ໄປຢູ່ຮ່ວມກັບເດັກນ້ອຍອື່ນໆແລະພາລະຫຍຸ້ງຍາກທາງບ້ານກໍຈະຫມົດໄປ. ກະວິນມີຫມູ່ຫລິ້ນນຳຢ່າງຫນ້ອຍສາມຄົນ, ອາຍຸໄລ່ເລ່ຽກັນ. ສ່ວນຫຼາຍພວກເຂົາມັກຫລິ້ນຢູ່ເດີ່ນບ້ານ ພາກັນຂີ່ມ້າກ້ານກ້ວຍ ທັງຮ້ອງທັງດີດດິ້ນປານຫາງຈີ້ຈ່ຽມຂາດ, ບາງເທື່ອກໍຫລິ້ນປາງບ້ວງ, ລົດນ້ອຍ, ປືນປະລາສະຕິກ. ກະວິນມັກປືນຫລາຍທີ່ສຸດ, ເຂົາຈັບມັນແນ່ໃສ່ຫມູ່ຊຶ່ງສົມມຸດວ່າເປັນປະຕິການແລ້ວ ກໍຍິງໂດຍເຮັດສຽງດັງໂປ້ງໆ! ຕໍ່ມາກໍບອກຫມູ່ຜູ້ຖືກຍິງວ່າ: " ຕາຍແນະ ! ຕາຍແນະ ! " ແລ້ວຜູ້ຖືກຍິງກໍເຮັດທີລົ້ມລົງ. ອັນນີ້ນຳຄວາມພໍໃຈຢ່າງຍິ່ງມາສູ່ກະວິນທີ່ໄດ້ຍິງປະຕິການຈົນລົ້ມຕາຍ. ພວກເຂົາໄດ້ ຍິນຄຳວ່າປະຕິການຈາກປາກຂອງຜູ້ໃຫຍ່ ຫລື ຄົນ ທົ່ວ ໄປ,

ແລະ ວ່າປະຕິການເປັນ " ຜູ້ຮ້າຍ ", ບາງຄັ້ງບາງຄາວ ພວກປະຕິການກໍຂ້າມມາແຕ່ຟາກນ້ຳຂອງເບື້ອງນັ້ນແລ້ວ ບຶງບ່ອນນັ້ນບ່ອນນີ້ຫວັງສ້າງຄວາມແຕກຕື່ນ ແລະ ເດືອດຮ້ອນແກ່ປະຊາຊົນ.

ມື້ຫນຶ່ງ ແມ່ກະວິນເຮັດອານາໄມເຮືອນ ເລີຍໄປພົບຮູບຜົວຢູ່ຫລືບຝາຂ້າງຕູ້. ນາງເອົາຜ້າເຊັດຝຸ່ນ ແລະ ໄຍແມງມຸມອອກ ກະວິນແນມເບິ່ງແລ້ວຖາມຂຶ້ນ:

" ແມ່, ແມ່ນໃຜ ? "

" ປະຕິການ " ແມ່ຕອບ.

ກະວິນເວົ້ານຳຫລັງແມ່ວ່າ: " ປະຕິຕານ, ປະຕິຕານ " ໂດຍອອກສຽງຕົວ ກ. ເປັນ ຕ. ເພາະຍັງເວົ້າບໍ່ຂອດ.

ແມ່ຫົວຮື່ໆຢູ່ໃນຮູຄໍ ແລ້ວບອກອີກວ່າ: " ຈື່ໄວ້ ! ນີ້ລະ ປະຕິການ ".

ເຄີຍມີຜູ້ຖາມກະວິນວ່າ ພໍ່ໄປໃສ ? ແຕ່ນ້າພອຍກໍໄດ້ຕອບແທນວ່າ: " ພໍ່ໄປຄ້ານ້ຳອ້ອຍ ເປັນຈ້ອຍບໍ່ຕ່າວມາ ". ເປັນການປຶມຄຳເວົ້າ ຂອງເຖົ້າເກົ່າບູຮານ ທີ່ມັກເວົ້າໃນກໍລະນີທີ່ຄົນຈາກບ້ານໄປແລ້ວ ບໍ່ຕ່າວຄືນມາຫາຄອບຄົວ.

ນ້າພອຍກໍຄືທຸກໆຄົນໃນເຮືອນ ບໍ່ເຄີຍບອກຄວາມຈິງ

ໃຫ້ກາວິນຊາບວ່າ ພໍ່ໄປໃສ. ກະວິນເອງກໍບໍ່ເຂົ້າໃຈວ່າ ພໍ່ນັ້ນມີຄວາມໝາຍແນວໃດ ເພາະນັບແຕ່ພໍຮູ້ຄວາມມາ ກໍເຫັນແຕ່ສະມາຊິກຄອບຄົວ ໃນປະຈຸບັນ ແລະ ບໍ່ມີຜູ້ອື່ນໃດທີ່ຕ້ອງເອີ້ນວ່າພໍ່.

ບ້ານຂອງກະວິນ ຢູ່ແຄມທາງຣ່ອມ, ເຖິງວ່າການຈໍລະຈອນບໍ່ອັ່ງອໍ ແຕ່ກໍມີລົດລາແລ່ນຢູ່ທຸກມື້. ເລື່ອງນີ້ເຮັດໃຫ້ແມ່, ພໍ່ຕູ້ ແລະ ບ້າພອນ ຮູ້ສຶກກັງວົນ ເປັນຫ່ວງ ເພາະກະວິນມັກໄປຫລິ້ນຢູ່ແຄມທາງເລື້ອຍໆ. ອາດຈະເກີດອັນຕະລາຍ ເວລາໃດເວລາໜຶ່ງກໍໄດ້. ດັ່ງນີ້ ເມື່ອເຫັນກະວິນອອກໄປນອກຮົ້ວ ຈຶ່ງມັກມີຜູ້ຮ້ອງໃສ່ວ່າ: "ຢ່າໄປຫລິ້ນແຄມທາງເດີ ທະຫານອ້າຍນ້ອງຊິຈັບໄດ" ໄດ້ຍິນແນວນັ້ນ ກະວິນກໍຫລຽວໜ້າ ຫລຽວຫລັງ ສ່ອງເບິ່ງສິ້ນທາງເບື້ອງນັ້ນ ເບື້ອງນີ້, ເມື່ອເຫັນທະຫານປົດປ່ອຍ ຊຶ່ງເຂົາຮູ້ຈັກໃນຊື່ວ່າ "ທະຫານອ້າຍນ້ອງ" ຍ່າງມາໃກ້, ກະວິນກໍຫລົບເຂົ້າມາໃນບ້ານ ແລ້ວປີ້ນບັງຫລັກຮົ້ວ ແລະ ແນມເບິ່ງດ້ວຍອາການສະຫງົບສະຫງ່ຽມ ທັງປ່ອນປ້ານ ທັງປາກເບິ່ງທົ່ງໆກັນ.

ເທື່ອງທາງເສັ້ນນີ້ ເທື່ອງໆກໍມີທະຫານປົດປ່ອຍ ຍ່າງ

ຜ່ານໄປມາ ເທື່ອລະສອງສາມຄົນ. ຕອນປົດປ່ອຍແລ້ວໃໝ່ໆນັ້ນ ບໍ່ວ່າຜູ້ໃດ ທັງເດັກນ້ອຍ ແລະ ຜູ້ໃຫຍ່ ມັກແນມເບິ່ງທະຫານປົດປ່ອຍ ຈົນສຸດສາຍຕາ. ຕໍ່ມາກໍເປັນເລື່ອງທຳມະດາ ບໍ່ມີຜູ້ໃດເຫັນເປັນເລື່ອງແປກຕ່າງ ທີ່ຈະຕ້ອງສັງເກດແນມເບິ່ງ. ແຕ່ສຳລັບກະວິນ ຜູ້ຊຶ່ງຫາກໍເລີ່ມຮູ້ຈັກປາກເວົ້າ ການເຫັນທະຫານປົດປ່ອຍ ບໍ່ແມ່ນເລື່ອງທຳມະດາ ແຕ່ເປັນເລື່ອງຕ້ອງລະມັດລະວັງ, ເຂົາຈະເຊົາຂີ້ດື້ເຊົາຮ້ອງສຽງດັງ ເຊົາດ່າໝູ່ດຽວກັນ ແລ້ວທຳທ່າຈົ່ງຈຽມ. ເຂົາເປັນເຊັ່ນນີ້ ນັບແຕ່ມື້ທີ່ໃຫ້ແອ່ວແມ່ ປາກໄດ້ໝາກປືນເປົ້າເປັນຕົ້ນມາ ມື້ທີ່ມີທະຫານປົດປ່ອຍ ຜ່ານກາຍໜ້າບ້ານ ແລ້ວຮ້ອງມາໃສ່ວ່າ : " ຢ່າໄຫ້ເດີ, ຢ່າໄຫ້ ! ມິດມິດ ! ".

ແນວໃດກໍຕາມ ເຖິງຈະຢ້ານທະຫານປົດປ່ອຍ ແຕ່ເມື່ອຫລິ້ນນຳໝູ່ ກະວິນກໍມັກຈັບປືນໄມ້ແນໃສ່ໝູ່ ຊຶ່ງສົມມຸດເອົາວ່າ ເປັນປະຕິການ. ໝູ່ທີ່ຫລິ້ນນຳປະຈຳ ກໍມີແອຈ່ອຍ ອາຍຸສາມປີ, ຈ້ອກ ອາຍຸສາມປີເຄິ່ງ ທໍ່ກັບກະວິນ ແລະ ດິດ ອາຍຸສີ່ປີ. ຜູ້ທີ່ຖືກສົມມຸດເປັນປະຕິການເລື້ອຍໆ ກໍແມ່ນແອຈ່ອຍ ຖັດມາກໍແມ່ນດິດ. ສ່ວນກະວິນນັ້ນບໍ່ຍອມ

ເປັນຝ່າຍປະຕິກາບຈັກເທື່ອ.

"ໂປ້ງ! ໂປ້ງ! ຕາຍແມະ ຕາຍແມະ!" ກະວິນທໍາທ່າຍິງ ແລ້ວບອກໃຫ້ແອຈ່ອຍລົ້ມລົງ. ບາງເທື່ອແອຈ່ອຍກໍຂັດຂ້ອງ ບໍ່ຍອມລົ້ມລົງງ່າຍໆ ກະວິນກໍຍິງຊໍ້າອີກ.

"ໂປ້ງ! ຕາຍແມະປະຕິກາບ, ຕາຍແມະຮ້ວາຍ!". ແລ້ວແອຈ່ອຍກໍລົ້ມລົງກັບພື້ນ ນອນຫລັບຕາ. ການຕາຍຂອງປະຕິກາບ ໂດຍການສົມມຸດເອົາຂອງໝູ່ນັ້ນ ນໍາຄວາມປະເອີບໃຈຢ່າງໃຫຍ່ ມາສູ່ກະວິນ. ເຂົາຈະເຮັດທ່າທາງຂຶງຂັງ ເວົ້າດັດສຽງໃຫ້ເປັນຄືສຽງຜູ້ໃຫຍ່ ຢ່າງທີ່ເຄີຍເຫັນຢູ່ໃນຊີເນ ໂດຍກ່າວວ່າ "ມຶງຕ້ອງຕາຍ ມຶງຕ້ອງຕາຍ...".

ເວລາຜ່ານໄປຫລາຍເດືອນ. ກະວິນມີໝູ່ຫລິ້ນຈຸເດີມແຕ່ຫລຸດຈໍານວນລົງໜຶ່ງ ເພາະທ້າວດິດໄດ້ໄປເຂົ້າໂຮງຮຽນອະນຸບານ ຊຶ່ງຢູ່ຕິດໂຮງການຂອງພໍ່ເຂົາ. ພໍ່ຕຸ້ໄດ້ເຮັດປືນໄມ້ອັນໃໝ່ ໃຫ້ກະວິນໜຶ່ງບອກ, ແມ່ໄດ້ບານໜຶ່ງໜ່ວຍມາຕ້ອນ. ເດັກນ້ອຍສາມຄົນ ມັກຫລິ້ນບານຢູ່ເດີ່ນບ້ານ ສຽງດັງຟົດສະໜັ່ນ ເຖິງຈະເຕະບໍ່ເປັນຄັກ ແຕ່ກໍໃຊ້ທັງມື ທັງຕີນ ຫົວສະອຶກສະແອັກ.

ວັນໜຶ່ງ ມີທະຫານປົດປ່ອຍຄົນໜຶ່ງ ມາຢ້ຽມຢາມ

ຄອບຄົວຂອງກະວິນ. ທະຫານຄົນນີ້ ເປັນເພື່ອນເກົ່າຂອງ ພໍ່ ແລະ ໄດ້ໜີຈາກບ້ານ ໄປຮ່ວມຖັນແຖວປະຕິວັດ ເມື່ອ ຫລາຍປີມາແລ້ວ, ປະຈຸບັນປະຈຳການຢູ່ ເຂດຊຽງຂວາງ ແລະ ນາວຽງຈັນເທື່ອນີ້ ກໍ່ແມ່ນວຽກງານທາງການ ເລີຍຖື ໂອກາດ ມາຢ້ຽມຢາມຖາມຂ່າວຄອບຄົວເພື່ອນເກົ່າ. ແມ່ ກະວິນ ເອີ້ນແຂກທີ່ມາປານວ່າ ພໍ່ສ່ຽວຄຳດີກ ແລະ ໃຫ້ ການຕ້ອນຮັບຢ່າງອົບອຸ່ນ ທັງເປັນກັນເອງ. ແມ່ກະວິນໄດ້ ເລົ່າເລື່ອງຜົວຂອງນາງ ທີ່ໄດ້ປະຄອບຄົວໄປ ເມື່ອສອງປີ ກ່ວານາແລ້ວ. ພໍ່ສ່ຽວຄຳດີກໄດ້ເວົ້າປຸກລະດົມຈິດໃຈ ໃຫ້ ແມ່ກະວິນທຸ່ນທ່ຽງ ເຊື່ອໝັ້ນຕໍ່ຄວາມກ້າວໜ້າ ຈະເລີນ ຂອງລະບອບໃໝ່ ແລະ ວ່າຜູ້ທີ່ຫລົງຜິດນັ້ນ ບໍ່ດົນກໍ່ຈະ ກັບແຫນງເອງ. ຕອນພໍ່ສ່ຽວໄກ້ຈະອຳລາກັບ ກະວິນຊຶ່ງ ມາແຕ່ໄປຫລິ້ນນຳໝູ່ ໄດ້ຂຶ້ນເທິງເຮືອນມາ, ເມື່ອຫລຽວ ເຫັນທະຫານປົດປ່ອຍນັ່ງຢູ່ນຳແມ່, ກະວິນມີອາການ ລັ່ງ ເລບໍ່ກ້າເຂົ້າໄປໃກ້. ເຫັນເປັນແນວນັ້ນ ແມ່ເລີຍເອີ້ນໃສ່ວ່າ: " ມະລູກມາ ມາຈັບມືກັບພໍ່ດີກ. ບໍ່ຕ້ອງຢ້ານ, ທະຫານ ປົດປ່ອຍ ກໍ່ຄືພໍ່ນັ້ນລະ "

ເມື່ອແມ່ກະວິນໃຊ້ຄຳເວົ້າວ່າ: "ພໍ່ດີກ" ເວລາກ່າວ

ບອກລູກຊາຍ ແຂກຈຶ່ງເວົ້າກັບກະວິນວ່າ: "ມາຫາພໍ່ມາ, ຈັບມືກັນເນາະ ບໍ່ຕ້ອງຢ້ານ, ພໍ່ບໍ່ແມ່ໄທອິ່ນໄດເນີ".

ກະວິນບໍ່ປາກ ແຕ່ເບິ່ງແຂກຜູ້ມາປາມ ຢ່າງຕາບໍ່ພັບແມ່ເລີຍຈັບມືຊູເຂົ້າໄປຫາ. ພໍ່ດິກຈັບມືເດັກ ແລ້ວກອດແນບເອົ້າໃສ່ແກ້ມ.

"ເຂັ້ມແຂງເນີ ບໍ່ຕ້ອງຢ້ານ ທະຫານປົດປ່ອຍຮັກເດັກນ້ອຍ, ທະຫານປົດປ່ອຍຈັບແຕ່ປະຕິການ" ພໍ່ດິກບອກກະວິນ.

ຕໍ່ມາກະວິນສັກຕາໃສ່ປືນສັ້ນທີ່ຂັດປູ່ແອວ

"ປາກໄດ້ນີ້". ກະວິນເວົ້າທັງຊີໃສ່ປືນຂອງພໍ່ດິກ.

"ຖ້າໃຫ້ລູກໃຫຍ່ກ່ອນເນີ ໃຫຍ່ແລ້ວເປັນທະຫານປົດປ່ອຍແລ້ວກໍໄດ້ປືນ. ລູກຊິເອົາປືນໄປເຮັດຫຍັງຣື".

"ບິງປະຕິການ" ກະວິນຕອບ.

"ເກັ່ງຫລາຍ ກະວິນຕ້ອງບິງປະຕິການ. ປະຕິການເປັນຜູ້ຮ້າຍ ປະຕິການເຮັດໃລຈເລງ".

" ໃຫຍ່ມາແລ້ວ ເປັນທະຫານປົດປ່ອຍນຳພໍ່ດິກເນີ, ບັດນີ້ບໍ່ຕ້ອງຢ້ານທະຫານປົດປ່ອຍ" ແມ່ບອກກະວິນ.

ກ່ອນອຳລາໄປ, ພໍ່ກອດກະວິນແນບໃສ່ແກ້ມອີກດ້ວຍ

ຄວາມຮັກແພງຄືລູກຄົງໆ. ເດັກຮູ້ສຶກອົບອຸ່ນ ມີຄວາມກ້າຫານ ແລະເຊື່ອໝັ້ນໃນຕົວເອງຫລາຍຂຶ້ນ.

ຫລັງຈາກພໍ່ດົກໄປແລ້ວແມ່ກະວິນຄຶດເຫັນເລື່ອງເກົ່າເລື່ອງຫລັງ ຈຶ່ງໄປຈົກເອົາຮູບພົວມາເບິ່ງອີກ ເທື່ອໜຶ່ງ, ລູກຊາຍກໍເບິ່ງປຸ່ນໍາດ້ວຍ. ນາງຕີດາງຖາມລູກວ່າ :

" ແມ່ນໃຜ ? ".

" ປະຕິວານຊຸ້ນຕ່ວາ ! " ກະວິນຕອບ.

ນາງເຮັດໜ້າເສີຍໆ ບໍ່ດົນກໍເອົາຮູບໄປຊຸກ ໄວ້ ບ່ອນເດີມທີ່ມີ ໃບແພງມຸມ ແລະຂີ້ຝຸ່ນນົວໜອງ. ນາງກັບອອກມາແລ້ວກອດລູກ ເອົາບັ່ງລົງທີ່ຕັກທາງປາກກໍເວົ້າກັບລູກວ່າ.

" ກະວິນຮັກພໍ່ດົກບໍ່ ? ".

" ຮັກ " ກະວິນຕອບ.

" ເປັນຫຍັງຈຶ່ງຮັກພໍ່ດົກ ? ".

" ພໍ່ດົກມີປືນ, ໃຫຍ່ແລ້ວພໍ່ດົກຊິເອົາປືນໃຫ້ກະວິນ ".

" ກະວິນຢ້ານທະຫານປົດປ່ອຍບໍ່ ? ".

" ບໍ່ຢ້ານ, ພໍ່ດົກກໍເປັນທະຫານປົດປ່ອຍ ".

" ເກ່ງ... ບໍ່ຢ້ານລະເນີ, ທະຫານປົດປ່ອຍບໍ່ເຮັດຫຍັງ

ດອກ".

ການທີ່ມີຄົນບຸ່ງເຄື່ອງ ແບບທະຫານປົດປ່ອຍຂັດປື້ນສັ້ນ ແລະ ເວົ້າຄຳວ່າ "ພໍ່" ກັບເຂົານັ້ນເປັນເລື່ອງທີ່ເອກອ້າງປ່າງບຶ່ງຂອງກະວິນ. ຖັດຈາກນັ້ນມາເວລາມີຂໍ້ຂັດໃຈກັບໝູ່ກະວິນມັກເວົ້າສະເໝີວ່າ: "ພໍ່ດີກູມີປືນໄດ, ພໍ່ດີກູເປັນທະຫານປົດປ່ອຍໃດ".

ຄົນບ້ານໃກ້ເຮືອນຄຽງ ເມື່ອໄດ້ຍິນກະວິນເວົ້າວ່າພໍ່ເປັນທະຫານປົດປ່ອຍກໍມີບາງຄົນພາໂລສ້ຖາມວ່າ: "ພໍ່ກະວິນຢູ່ໃສ?".

"ຢູ່ພຸ້ນ ໄກໆພຸ້ນ" ກະວິນຊີ້ນີ້ໄປໂດຍທີ່ບໍ່ແນມເບິ່ງບ່ອນຊີ້.

"ພໍ່ກະວິນເປັນຫຍັງ?".

"ເປັນຕະຫານປົດປ່ອຍ ມີປືນໃດ" ກະວິນຕອບທັງແຫງນເບິ່ງໜ້າຜູ້ຖາມ. ແລ້ວຜູ້ຖາມຊຶ່ງຮູ້ຈັກປະຫວັດພໍ່ຂອງກະວິນດີກໍຫົວບຸ້ນໆ.

ປະຈຸບັນນີ້ ເວລາໃດເຫັນທະຫານປົດປ່ອຍບ່າງ ມາຕາມທາງ ກະວິນຈະແລ່ນໄປທີ່ປະຕູຮົ້ວແຄມທາງຢືນເບິ່ງປ່າງບໍ່ສະທົກສະທ້ານ. ເມື່ອທະຫານຜ່ານມາຮອດໃກ້ະ

ກະວິນກໍເວົ້າຂຶ້ນດ້ວຍຄວາມໄຮ້ດຽງສາທັງຕາລັກໃສ່ປືນທີ່ແຂວນຢູ່ແອວທະຫານວ່າ: "ພໍ່ຂ້ອຍກ່າມີປືນໂດ ພໍ່ຂ້ອຍເປັນຕະຫານປົດປ່ອຍຄືກັນ ຊິນເຊີຍ! ຊິນເຊີຍ!" ເວົ້າແລ້ວກໍຕົບມືແປ່ະໆ. ທະຫານບາງຄົນກໍເອົ້າບໍາກະວິນທັງລູບຫົວ ແລະ ຖາມເລັກໆນ້ອຍໆ ບາງຄົນກໍພຽງແຕ່ຍິ້ມຕ້ອນຮັບຄວາມໄຮ້ດຽງສານັ້ນ ແລ້ວກໍຜ່ານກາຍໄປ ປ່ອຍໃຫ້ເດັກນ້ອຍແນມນໍາຫລັງຈົນສຸດສາຍຕາ.

ກະວິນຮູ້ຄັກແທ້ແນ່ໃຈວ່າທະຫານປົດປ່ອຍບໍ່ຈັບເດັກນ້ອຍເລີຍ.

# ນ້ຳໃຈເອື້ອຍພຽງດີ

* ແສງແດດ, ປາດເຫື່ອ, ສຽງຈົກສຽງຊ້ວານກະທົບກ້ອນຫີນ ສະລັບດ້ວຍເຜັດຝິນເປັນບາງຄັ້ງບາງຄາວ ສິ່ງເຫລົ່ານີ້ ປະສົມປະສານກັນ ປູ່ບໍລິເວນຝາຍນ້ຳຫຸມ ຊຶ່ງຢູ່ອ້ອມແອ້ມນະຄອນວຽງຈັນ ທາງດ້ານຕາເວັນຕົກ.

ແມ່ນຕົ້ນເດືອນພຶດສະພາ ໑໙໗໕. ພວກເຮົາຈຳນວນ ໒໐໐ ຄົນ ໄດ້ພາກັນມາສົມທົບກັບ ອົງການຈັດຕັ້ງອື່ນໆ ເພື່ອຂຸດຮ່ອງເໝືອງກຽມໄວ້ລະບາຍນ້ຳຈາກຝາຍ ຊຶ່ງພວມສ້າງກັນຢູ່ຢ່າງເອົາຈິງເອົາຈັງທັງເວັນທັງຄືນ. ພວກເຮົາແມ່ນຊຸດທີສອງ. ກ່ອນໜ້ານີ້ສາມວັນ ຊຸດທີໜຶ່ງຂອງກະຊວງເຮົາ ໄດ້ກັບຄືນເມືອ ຫລັງຈາກລົດບັນທຸກສີ່ຄັນໄດ້ຂົນພວກເຮົາມາຮອດ ໃນເວລາ ໕ ໂມງເຊົ້າ. ພວກເຮົາລົງລົດໝົດທຸກຄົນ ແລ້ວຊຸດທີໜຶ່ງກໍ່ຂຶ້ນແທນ ແລະ ໂບກມືອຳລາໄປ ຫລັງຈາກໄດ້ມາປະຈຳຄົນ ໑໑ ມື້ຕາມກຳນົດ.

ແສງແດດຕອນບ່າຍ ປະກົດວ່າປາກທົດສອບ ຄວາມ

ເຂັ້ມແຂງຂອງພວກເຮົາທຸກຄົນ, ມັນຮ້ອນເອົ້າກະດັກກະດໍ້, ພໍ່ແຕ່ຟ່າດບາດຈິກ ບາດຊ້ວານລົງສາມສີ່ບາດ ເຫື່ອກໍ່ໄຫລຕາມໜ້າຜາກ ຕາມຄໍ, ຕໍ່ໄປອີກໜ້ອຍໜຶ່ງກໍ່ປຽກຊຶມໄປທົ່ວກາງຫລັງ. ພວກເຮົາໃນຊຸດກຳມະກອນ ສົ້ງເສື້ອເກົ່າໆ ຜ້າຂາວມ້າຄຽນແອວ ຫລື ຄຽນຫົວ ສ່ວນຫລາຍສຸບໝວກໃບໃຫຍ່ ທີ່ສານດ້ວຍຕອກໄມ້ພາງ, ສ່ວນແມ່ຍິງບາງຄົນກໍ່ນຸ່ງສົ້ງ ໄດ້ບຸກບືນປີນສູ້ກັບທຳມະຊາດ ຢ່າງທົນທານໜຽວແໜ້ນ. ສອງຄົນຂຸດກົນ ໂດຍໃຊ້ເຫລັກເຂົາຄວາຍ ຊຶ່ງສັບລົງກະທົບກັບກ້ອນຫີນ ອອກແສງນາບໆ. ບາດທີ່ໜຶ່ງ ຕິດຕາມດ້ວຍບາດທີ່ສອງແລະ ທີ່ສາມ ແລ້ວທັງດິນ ທັງຫີນກໍ່ພັງລົງ. ສອງຄົນຊ້ວານໃສ່ກະແຕະ ຊຶ່ງມີສາມອັນ ແລ້ວທົກຄົນກໍຫາມໄປຖອກ ສອງຄົນຕໍ່ແຕະໜຶ່ງ.

ເອື້ອຍພຽງດີ ແລະ ນາງໄພສອນ ເປັນແມ່ຍິງສອງຄົນໃນຈຳນວນສິບຄົນພວກເຮົາ ທີ່ປະກອບເປັນໜ່ວຍໜຶ່ງ. ການຂຸດຮ່ອງເໝືອງ ຈັດຕັ້ງເປັນ ໓ ໜ່ວຍ ແລະ ແບ່ງດິນເປັນຕອນ ຕອນລະ ໑໐ ແມັດ ໃຫ້ແຕ່ລະໜ່ວຍຮັບຜິດຊອບ. ແມ່ຍິງສອງຄົນນີ້ ເປັນກຳລັງຊຸກຍູ້ ໃຫ້ການຂຸດ

ເໝືອງ ຂອງໜ່ວຍພວກເຮົາ ດຳເນີນໄປຢ່າງຫ້າວຫັນບຸກ ໜ້າບືນຕົວ. ບາງໄພສອນຍັງເປັນສາວ ສີເນື້ອຂາວແດງ ຍິ້ມງ່າຍ, ຍາມແດດຮ້ອນໆ ແກ້ມຂອງນາງເປັນສີແດງອົງ ຕົ່ງ ອາບດ້ວຍປາດເຫື່ອ, ໝູ່ຜູ້ຊາຍພວກເຮົາເຫັນແລ້ວ ກໍ ມັກຢອກນາງວ່າ: " ງາມຈິງນ້ອຍ " ແລ້ວນາງກໍເວົ້າຕອບ ວ່າ: " ງາມໝົດທຸກຄົນຫັ້ນລະ ໃຜກໍ່ຈິງນ້ອຍ " ພວກ ເຮົາພາກັນຫົວ ຊ່ອຍໃຫ້ອາລົມຜ່ອນເບົາລົງ, ແລ້ວນາທີ ຕໍ່ມາ ການສຸມກຳລັງໃສ່ໜ້າວຽກ ກໍເປັນໄປຢ່າງເອົາຈິງ ເອົາຈັງ, ບາງເທື່ອເປັນໄລຍະຫລາຍສິບນາທີ ບໍ່ມີໃຜປາກ ເວົ້າ ໄດ້ຍິນແຕ່ສຽງຂຸດດິນປູ່ຕຸບຕຸບ, ເອື້ອຍພຽງດີອາຍຸ ສາມສິບຫົກປີແລ້ວ ນັບວ່າເປັນຜູ້ອາວຸໂສກວ່າໝູ່ໃນໜ່ວຍ ຂອງພວກເຮົາ. ເອື້ອຍສະໝັກມານ້ຳໜຸ່ມ ຫລັງຈາກທີ່ ກົມກອງໄດ້ລະດົມ ການຕ້ານໄພແຫ້ງແລ້ງ.

" ເອື້ອຍເວົ້າວ່າ: ເອື້ອຍມີລູກ ໒ ຄົນ, ຜູ້ຫລ້າມີອາຍຸ ໗ ປີ, ລູກສາວກົກ ອາຍຸ ໑໕ ປີ, ເບິ່ງນ້ອງກຸ້ມແລ້ວ ບໍ່ມີບັນຫາ ຂັດຂ້ອງຫຍັງຫລາຍຢູ່ບ້ານ, ເອື້ອຍເລີຍສະໝັກມາ ".

ເອື້ອຍມັກເວົ້າລົມກັບພວກເຮົາ ຢ່າງເປັນກັນເອງ, ສ້າງ ໄດ້ຄວາມສະໜິດສະໜົມນັບແຕ່ມື້ທຳອິດທີ່ລົງຂຸດເໝືອງ.

ເອື້ອຍເວົ້ານິວຫິວມ່ວນ ແລະ ເຮັດວຽກປານວ່າຜູ້ຊາຍ. ທຳມະດາແລ້ວ ເອື້ອຍຄວນແຕ່ຫາມແຕະ ແຕ່ປະກົດວ່າເອື້ອຍຈັບຊ້ວານ ຢ່າງຂະຫຍັນຂັນແຂງ ຊ້ວານເອົາ ຊ້ວານເອົາ ຈົນເຫື່ອຍ້ອຍເຫື່ອຍັ່ງ. ບໍ່ພຽງແຕ່ທໍ່ນັ້ນ ເອື້ອຍຍັງຄວາໃສ່ເຫລັກເຂົາຄວາຍ ຈົນພວກເຮົາໄດ້ຮ້ອງໃສ່:

" ຢ່າເອື້ອຍ " ມັນຫນັກ ປະໃຫ້ພວກນ້ອງຜູ້ຊາຍສາ!".

" ຜູ້ຍິງຜູ້ຊາຍກໍເຮັດໄດ້ຄືກັນຕ່ວາ ! " ເອື້ອຍເວົ້າແລ້ວກໍເອົາເຫລັກເຂົາຄວາຍ ສັບ ລົງ ຖືກ ຫີນ ຈົນ ອອກ ແສງມາບໆ.

ນາງໄພສອນກໍບໍ່ແມ່ນຂອງຄ່ອຍ ຫາມດິນໄປຖອກບໍ່ມີຍາມຢຸດ ຈົນຜູ້ຊາຍທີ່ເປັນຄູ່ຫາມນຳນາງ ຕ້ອງໄດ້ ອອກປາກຂໍເຊົາເມື່ອຍ.

" ຊົ່ວໂມງນີ້ ຊິໃຫ້ໄດ້ ໓໐ ກະແຕະ " ນາງເວົ້າແລ້ວກໍເອົາຫລັງມືປ້າຍເມັດເຫື່ອອອກຈາກແກ້ມແດງໆນັ້ນ.

ຜູ້ຊາຍແປດຄົນພວກເຮົາຍັງເປັນໂສດຢູ່ຫ້າຄົນ ພາກັນເບິ່ງຫນ້າຊຶ່ງກັນ ແລະ ກັນແລ້ວຍິ້ມຝືດໆ ຊຶ່ງມີຄວາມໝາຍວ່າ ເມື່ອໃດກໍໄດ້ອາຍແມ່ຍິງສອງຄົນນີ້ດັກໆ.

ຂ້ອຍຍ່າງໄປໃກ້ເອື້ອຍພຽງດີ ແລ້ວຂໍເອົາ ເຫລັກ ເຂົາ

ຄວາຍຄືນເພື່ອຂຸດຕໍ່.

" ເອື້ອຍຄືຊິເມື່ອຍຫລາຍແລ້ວ ເອົາໃຫ້ນ້ອງ ສາ " ຂ້ອຍວ່າ ແລະ ເອື້ອຍກໍມອບໃຫ້ຄືນແລ້ວໄປນັ່ງຢູ່ກ້ອງຮົ່ມ ຝົດໄມ້ ຊຶ່ງພວກເຮົາຕັດມາສຽບດິນໄວ້ເປັນເຄື່ອງບັງແດດ. ເອື້ອຍເອົາແພເຊັດເຫື່ອອອກຈາກຫນ້າແລ້ວຖອກນ້ຳໃນ ບິດົງມາດື່ມສາຍຕາຂອງລາວແນມໄປທີ່ຂະບວນຂຸດເໝືອງທີ່ພວມດຳເນີນຢູ່ເປັນພືບໆ.

" ມື້ນີ້ຫນ່ວຍພວກເຮົາບໍ່ໃຫ້ຫລຸດ ໑໐.໕໐ ແມັດກ້ອນ ເນີ ! ຫນ່ວຍຢູ່ຂ້າງພວກເຮົາວານນີ້ເຂົາໄດ້ລື່ນພວກເຮົາຫນ້ອຍຫນຶ່ງ " ເອື້ອຍພຽງດີເວົ້າຂຶ້ນ.

" ຮັບຮອງ ວານນີ້ສະເລ່ຍແລ້ວເຮົາຂຸດໄດ້ຜູ້ຫນຶ່ງ ໑.໐໖ ແມັດກ້ອນ. ມື້ນີ້ໃຫ້ມັນໄດ້ຜູ້ລະ ໑.໕໐ ແມັດກ້ອນ " ຂ້ອຍຢືນຢັນ.

" ວານນີ້ຊ້ວານເຮົາບໍ່ດີ ດ້າມມັນຫລ່ອນ, ມື້ນີ້ແປງດີແລ້ວຮັບຮອງໃຫ້ ລື່ນຫນ່ວຍຢູ່ຂ້າງໆພວກເຮົາ " ສະຫາຍອີກຜູ້ຫນຶ່ງກ່າວຮັບປະກັນ.

ນາງໄພສອນ ກັບສະຫາຍບຸນທອງຫາມແຕະກັບມາແລ້ວເວົ້າຂຶ້ນເກືອບພ້ອມໆກັນວ່າ : " ຮອດຖ້ຽວທີ ໓໐

ແລ້ວ ".

ບຶດໜຶ່ງຕໍ່ມາ ກໍມີການປ່າວປະກາດໃຫ້ທຸກຄົນພັກຜ່ອນ ໑໐ **ນາທີເພາະຄົບໜຶ່ງຊົ່ວໂມງ**ແລ້ວ. ຕາມກົດລະບຽບແມ່ນຊົ່ວໂມງໜຶ່ງພັກຜ່ອນເທື່ອໜຶ່ງ.

ແນວໃດກໍຕາມ ນາງໄພສອນແລະສະຫາຍບຸນທອງກໍບັງຫານແຕະໄປຖອກອີກຖ້ຽວໜຶ່ງ ແລ້ວ ຈຶ່ງ ພັກ ຜ່ອນ. ສ່ວນສະຫາຍສຸກັນນັ້ນຍັງຂຸດດິນຕຸບໆ ຢູ່ຕໍ່ໄປ ຈົນໝູ່ໄດ້ຮ້ອງໃສວ່າ :

" ປຸດກ່ອນເວີ້ຍ ! ທອມແຮງໄວ້ໃນຊົ່ວໂມງຕໍ່ໄປ ".

ພວກເຮົາມັກເປັນເຊັ່ນນີ້ສະເໝີ, ເວລາມີປະກາດໃຫ້ພັກຜ່ອນກໍມັກມີຜູ້ໃດຜູ້ໜຶ່ງເຮັດນັ້ນເຮັດນີ້ຢູ່ຕໍ່ໄປ ບໍ່ປຸດພາບຖຽວກັບໂລດ, ຖືກັບວ່າການພັກຜ່ອນບໍ່ແມ່ນສິ່ງສຳຄັນຫລືຈຳເປັນ.

ເອື້ອຍພຽງດີຍື່ນບິດົງນ້ຳໃຫ້ຂ້ອຍທັງເວົ້າວ່າ :

" ບໍ່ແມ່ນນ້ຳລ້າງໜີ ! ມັນແມ່ນນ້ຳໃຈຂອງເອື້ອຍເພື່ອໃຫ້ຫາຍເມື່ອຍໆ ".

" ຂອບໃຈ " ຂ້ອຍເວົ້າແລ້ວດື່ມນ້ຳຈົນອີ່ມແລ້ວສົ່ງບິດົງຄືນ. ຈາກນັ້ນເອື້ອຍກໍຍື່ນບິດົງນ້ຳໃຫ້ຜູ້ອື່ນດື່ມຕໍ່ໆໄປ.

" ກິນຫມົດແລ້ວເອື້ອຍຈະໄປຮ່າຍຕື່ມອີກ ".

" ນ້ອງໄປຮ່າຍກະໄດ້ດອກ " ສະຫາຍຜູ້ຫນຶ່ງວ່າ.

" ບໍ່ຕ້ອງ! ນ້ອງພັກຜ່ອນສາ, ໃຫ້ແມ່ຍິງຄືເອື້ອຍນີ້ໄປເອົາມັນຈັ່ງແມ່ນ ພວກນ້ອງຂຸດດິນເມື່ອຍຫລາຍແລ້ວ ".

" ເອື້ອຍກໍຂຸດຄືກັນ! ເອື້ອຍກໍເມື່ອຍຄືກັນ " ສະຫາຍຜູ້ຫນຶ່ງຂັດຂື້ນມາອີກ.

" ເອື້ອຍຂຸດພຽງແຕ່ຫນ້ອຍດຽວ, ເອື້ອຍຂຸດລອງເບິງຊື່ໆດອກ, ບໍ່ໄດ້ເຮັດແທ້ເຮັດວ່າຄືພວກນ້ອງ ".

ເວົ້າແລ້ວ ເອື້ອຍພຽງດີກໍຈັບເອົາບິດົງໄປຮ່າຍນ້ຳ ຢູ່ບ່ອນພັກ.

ນາງໄພສອນເຊັດເຫື່ອແຫ້ງແລ້ວກໍເວົ້າຂື້ນວ່າ: " ເວົ້າກັບເອື້ອຍພຽງດີມັນຕ້ອງໄດ້ຍາດເຮັດ, ຄັນບໍ່ຊັ້ນ ລາວ ກໍຍາດໄປເຮັດຫມົດ "

" ຍາດເຮັດວຽກນີ້ກໍບໍ່ຄ່ອຍປາກຍາດປານ ໃດ ດອກ " ຂ້ອຍວ່າ.

" ພວກເຮົາຄວນຝຶກຫັດນິດໄສຍາດເຮັດວຽກ, ຖ້ານິດໄສນີ້ມີປະຈຳຕົວຜູ້ໃດແລ້ວຮັບຮອງວ່າຕ້ອງກຸ້ມຕົນເອງຕະຫລອດໄປ " ສະຫາຍບຸນທອງສະເຫນີຫມູ່.

" ຍາດຄວາມຮັກເດ, ຊິເປັນໄປໄດ້ຫລືບໍ່ ? " ອີກສະຫາຍຫນຶ່ງເວົ້າຂຶ້ນທັງແນມເບິ່ງຫນ້ານາງໄພສອນ.

" ຄວາມຮັກນີ້ຍາດບໍ່ໄດ້ ເປັນເລື່ອງຂອງຫົວໃຈຜູ້ທີ່ຈະມອບໃຫ້ເຮົາ, ຊິໄປຍາດເອົາບໍ່ໄດ້, ຂືນໄປຍາດກໍ່ໄດ້ແຕ່ຄວາມຫນ່າຍຄວາມຊັງ " ສະຫາຍບຸນທອງໃຫ້ເຫດຜົນ.

" ແຕ່ມີວິທີຍາດຄວາມຮັກໄດ້ຢູ່ ຄືຈົ່ມຄາຖາດຸຫມັ່ນ, ດຸຫມັ່ນແລ້ວກໍ່ລົງມືເຮັດໃຫ້ເຫັນພ້ອມ " ນາງໄພສອນແນະນຳ.

ພວກເຮົາພາກັນຫົວ. ສຽງຫົວດັງເຈືອຈານ ໄປ ກັບແສງແດດຮ້ອນຂອງເດືອນ ພຶດສະພາ ທີ່ອາບລົງເຜົາດິນແດງໆຕາມຂອບເຫມືອງອັນຍາວຢຽດ.

ນົດສຽງຫົວນາງໄພສອນກໍເວົ້າຕໍ່: ເອື້ອຍພຽງດີມີຄະຕິປະຈຳວ່າ " ເປັນແມ່ຍິງກໍຕ້ອງເປັນບ່ອນອີງໃຫ້ແກ່ປະເທດຊາດ" ນອກນັ້ນກໍ່ມີຄຳຂວັນທີ່ລາວຂຽນໄວ້ໃນປື້ມນ້ອຍວ່າ: " ເປັນຍິງແທ້, ເປັນແມ່ຄົນ, ເປັນເຈົ້າຕົນເອງ ".

ພວກເຮົາມາຮູ້ຈັກເອື້ອຍພຽງດີຢູ່ນ້ຳຫຸມນີ້. ແມ່ນຢູ່ວ່າເຮົາຢູ່ກະຊວງດຽວກັນ ແຕ່ຢູ່ຄົນລະກົມກອງ, ສະຖານທີ່ເຮັດວຽກການກໍ່ບໍ່ຢູ່ຫລັງດຽວກັນ. ໃນ ໑໐ ຄົນພວກເຮົານີ້

ແມ່ນມາຈາກສາມກົມ ແລະຕ່າງກໍບໍ່ເຄີຍລື້ງກັນມາກ່ອນ. ເຮັດວຽກຮ່ວມກັນໄດ້ສາມມື້ແລ້ວ ພວກເຮົາຈຶ່ງຄຸ້ນເຄີຍກັນ ແຕ່ກໍຍັງຈື່ຊື່ກັນບໍ່ທັນໄດ້ຄັກ, ຍັງຫລົງກັນຢູ່ ແມ່ນວ່າຈະແນະນຳຊື່ໃຫ້ກັນຮູ້ແຕ່ມື້ທຳອິດແລ້ວ. ເອື້ອຍພຽງດີ ແລະ ນາງໄພສອນຊື່ສອງຄົນນີ້ ໃຜໆກໍຈື່ໄດ້ໂລດ ແຕ່ມື້ທຳອິດ, ອາດເປັນເພາະເຂົາເຈົ້າເປັນແມ່ຍິງພຽງສອງຄົນໃນໜ່ວຍຂອງພວກເຮົາ. ອີກຢ່າງໜຶ່ງກໍເພາະເອື້ອຍພຽງດີ ມັກເວົ້າມັກລົມກັບພວກເຮົາ ແລະ ນາງໄພສອນ ເປັນສາວພວມເປັນຕາເບິ່ງຕາແຍງ.

" ຮ້ອງເອື້ອຍສັ້ນໆວ່າພຽງ-ເອື້ອຍພຽງກໍໄດ້ ຖ້າລືມຊື່ກໍໃຫ້ຄິດຫາເມືອງພຽງແຂວງໄຊຍະບູລີແລ້ວທຸກຄົນກໍຈະຄິດຊື່ເອື້ອຍອອກໂລດ, ໃຜມີຊື່ດີກັບເອື້ອຍບໍ່ ?" ເອື້ອຍພຽງດີເວົ້າກັບພວກເຮົາຕອນແນະນຳຊື່ຕົນເອງ ໃນມື້ທຳອິດ. ລາວເວົ້າຕໍ່ໄປອີກວ່າ:

" ຊື່ຂອງເອື້ອຍມັນທຳມະດາໆ. ບໍ່ມ່ວນບໍ່ຂີ້ຮ້າຍ ໃຜກໍຄືຊິບໍ່ໃສ່ຊື່ນີ້ດອກ".

ພວກເຮົາໄດ້ແຕ່ຍິ້ມ. ພໍ່ສະຫາຍບຸນທອງ ຊຶ່ງຢູ່ກົມດຽວກັນກັບຂ້ອຍແນະນຳຕົນເອງ ເອື້ອຍພຽງດີກໍເວົ້າຂຶ້ນ

ວ່າ: "ຊື່ດຽວກັບນ້ອງຊາຍຂອງເອື້ອຍ, ເປັນສ່ຽວກັນສາ ນໍ!"

" ເອົາໂລດແຫລ້ວ!" ສະຫາຍບຸນທອງວ່າ.

ການເວົ້າຈາແບບກັນເອງນີ້ ເຮັດໃຫ້ພວກເຮົາລື້ງ ແກ່ວນກັບເອື້ອຍພຽງດີນັບແຕ່ມື້ທຳອິດ.

ການພັກຜ່ອນພໍແຕ່ເຫື່ອແຫ້ງຈາກໃບຫນ້າ ແລ້ວກໍມີ ການປ່າວປະກາດໃຫ້ທຸກຄົນສືບຕໍ່ເຮັດວຽກ, ພ້ອມກັບດຽວ ນີ້ເອື້ອຍພຽງດີ ທີ່ໄປເອົານ້ຳກໍມາຮອດ. ລາວວາງບິດົງໄວ້ ກ້ອງຮົ່ມແລ້ວກໍຈັບຄັນກະແຕະທັນທີທັນໃດໂລດ.

" ໃຜຊິຫາມເປັນຄູ່ກັບເອື້ອຍ?" ລາວຮ້ອງຖາມ. ສະ ຫາຍຫນຶ່ງແລ່ນເຂົ້າຈັບຄັນຫາມຍົກຂຶ້ນ ແລ້ວຍ່າງເຂົ້າ ແກັບເຂົ້າກຽງກັນດີ ຫາມດິນອອກໄປຖອກເປັນເທື່ອທຳອິດ ຂອງຊີວໃນງານີ້.

ສຽງເຫລັກເຂົາຄວາຍກະທົບດິນດັງຕຶກໆ, ສຽງຈົກ ດັງຈຸບໆ, ສຽງຊ້ວນດັງສິ່ວະໆ, ສຽງເຫລົ່ານີ້ປະສົມປະສານ ກັນດັງກ້ອງໄປທົ່ວບໍລິເວນຝາຍນ້ຳຫມຸນ. ໃນຂະນະດຽວກັນ ປາດເຫື່ອຂອງຜູ້ມາອອກແຮງງານ ກໍໄຫລຍ້ອຍຕາມຫນ້າ ຜາກ, ໄຫລລົງອາບສອງຝ່າຍແກ້ມ ປຽກຊຸ່ມໄປຕາມຕົ້ນຄໍ

ແລະກາງຫລັງ. ປາດເຫື່ອທີ່ໄຫລໃນມື້ນີ້ນັ້ນແມ່ນສາຍນ້ຳໃນມື້ໜ້າທີ່ໄຫລເຂົ້າສູ່ທົ່ງນາອັນອຸດົມສົມບູນໄປດ້ວຍຕົ້ນເຂົ້າ, ແນວປາແລະສັດນ້ຳນາງໆຊະນິດ, ນັ້ນເປັນຄວາມສຸກຢ່າງໜຶ່ງຂອງພວກເຮົາທີ່ໄດ້ເຫັນນ້ຳໃສໄຫລເປັນ, ເຫັນຕົ້ນເຂົ້າຂຽວງາມ, ແມ່ນວ່າສິ່ງເຫລົ່ານີ້ຫາກໍ່ປະກົດຕົວຢູ່ໃນມະໂນພາບກໍ່ຕາມ.

ເວລາສຸມໃສ່ວຽກເຂົ້າພໍ່ໆນັ້ນ ເກືອບຈະບໍ່ມີສຽງປາກສຽງເວົ້າຫລຸດອອກຈາກຮີບສົບຂອງພວກເຮົາເລີຍ. ແຕ່ລະຄົນເຮັດໄປຕາມໜ້າທີ່, ຜູ້ຂຸດຕັ້ງໜ້າຂຸດ, ຜູ້ຊ້ວານຕັ້ງໜ້າຊ້ວານ ຜູ້ຫາມກໍ່ຕັ້ງໜ້າຫາມຢ່າງລຽນຕິດລຽນຕໍ່. ບໍ່ມີເລື່ອງຫຍັງທີ່ຈະເວົ້າລົມກັນ, ນອກຈາກເມື່ອຍເຂົ້າພໍ່ໆ ແລ້ວຜູ້ຂຸດຫລືຜູ້ຊ້ວານອອກປາກສະເໜີໃຫ້ໝູ່ມາປ່ຽນ.

ເອື້ອຍພຽງດີ ແລະ ນາງໄພສອນເຮັດວຽກໄດ້ຢ່າງຫົນຫານຜິດກັບຄວາມຄາດໝາຍຂອງຜູ້ຊາຍພວກເຮົາທີ່ຄິດວ່າແມ່ຍິງສອງຄົນນີ້ ຈະເຮັດພໍ່ແປະໆ ບາງໆແລ້ວກໍ່ຫາທາງນັ້ງຊື້ນຮົ່ມຂ້າເວລາໃຫ້ຮອດໂມງເລີກ.

ເອື້ອຍພຽງດີສຸບໝວກແຈັບ ຜ້າເຊັດໜ້າຄ້ອງຄໍເພື່ອ

ໃຊ້ເຊັດເຫື່ອ, ໃບຫນ້າແດງ ກຶກຫູກໍແດງບ້ອນແດດເຜົາ
ເບິ່ງຄືວ່າຊິບໍ່ເວົ້າດີນຳຜູ້ໃດແຕ່ເມື່ອລາວໄດ້ອອກປາກແລ້ວ
ໃຜກໍລຸດຄວາມເຄັ່ງຂຶມລົງ.

"ແດດກ້າໃຜຊ່າວ່າມັນຊິກ້າຕະຫລອດນີ້, ຈັກຫນ້ອຍ
ມັນກໍອ່ອນລົງໄປເອງມັນດອກ! ເອົາຫລັງສູ້ກໍບັງໄດ້" ລາວ
ເວົ້າຂຶ້ນຫລັງຈາກພວກເຮົານິດໄປເປັນເວລາເຫິງນານ.

"ແດດກັບຝົນໃຜຊິເອົາອັນໃດ, ເວີ້ຍ?" ສຽງຫນຶ່ງເວົ້າ
ຂຶ້ນ.

"ເອົາແດດເວີ້ຍ!".

"ເອົາຝົນເວີ້ຍ!".

"ເອົາແດດເວີ້ຍ!"

"ເອົາຝົນເວີ້ຍ!"

"ເອົາຝົນເວີ້ຍ!".

ນີ້ແມ່ນສຽງຂອງພວກເຮົາ ຊຶ່ງມີຜູ້ນັກບໍ່ຄືກັນ. ໃຜກໍ
ເວົ້າປ່າງບໍ່ເງີຍຫນ້າເບິ່ງໃຜ, ກົ້ມຫນ້າໃສ່ແຕ່ດິນເພາະຢ້ານ
ເຄືອວຽກ, ພະຍາບານຂຸດກົບໃຫ້ໄດ້ຫລາຍທີ່ໃດຍິ່ງດີທີ່
ນັ້ນ.

ເວລາຜ່ານໄປຈົນຮອດຫົກໂຮງແລງ, ສຽງປ່າວປະກາດ

ໃຫ້ເລີກວຽກກໍດັງມາແຕ່ຫົວແຖວ. ແຕ່ລະຫນ່ວຍນ້ຽນອຸປະກອນ, ຕໍ່ມາໆກໍຍ່າງບ່າຫລັງກັນເປັນສາຍຍືດໆເຂົ້າ ສູ່ບ່ອນພັກ. ນີ້ຫນຶ່ງຂອງການຂຸດຮ່ອງເຫມືອງກໍໄດ້ສ້ຽງສຸດລົງ.

ຕອນຄ່ຳຫລັງຈາກອາບນ້ຳຊຳລະຮ່າງກາຍແລ້ວ ທັງໝົດພວກເຮົາ ກໍພາກັນກິນເຂົ້າ ໃນເວລາ ໗ ໂມງ. ໂຕະຫລື ຮ້ານກິນເຂົ້າ ປຸກເປັນສອງແຖວຍາວຮຽງກັນ ສູງພຽງແອວ ປູດ້ວຍໂຕະໄມ້ເຮ້ງ. ພວກເຮົາພາກັນຢືນກິນ ແລະລົມກັນໄປນຳ. ຄວາມມີຊີວິດຊີວາຈະເຫັນໄດ້ໃນເວລານີ້ ເພາະທຸກຄົນໄດ້ອາບນ້ຳມີແຮງ, ໄດ້ກິນເຂົ້າສົມຄວາມປາກ ຫລັງຈາກໄດ້ອອກເຫື່ອເທແຮງ ຢູ່ກາງແສງແດດ. ຮອຍຍິ້ມຈະປະກົດທີ່ໃນຫນ້າຂອງທຸກໆຄົນ.

ເອື້ອຍພຽງດີມີແຈ່ວບອງມາເພີ້ມເຕີມໃສ່ພາເຂົ້າຂອງຫນ່ວຍພວກເຮົາ, ສະຫາຍສູກັນ ກໍມີແຈ່ວປາແດກມາສູ່. ສິບຄົນພວກເຮົາກິນໄປນຳ ລົມກັນໄປນຳ, ຄວາມລົມກໍ່ແມ່ນກ່ຽວກັບວຽກງານທີ່ຜ່ານມາເປັນສ່ວນໃຫຍ່. ເລື່ອງຫນຶ່ງທີ່ເຮົາເປັນຫ່ວງກ່ວາສິ່ງອື່ນ ກໍຢ້ານບໍລິມາດຕາດິນທີ່ຂຸດ ຈະຫນ້ອຍກ່ວາຫນ່ວຍອື່ນໆ. ຈິດໃຈພວກເຮົາຈົດຈໍ່ນຳແຕ່ບັນ

ຫານີ້, ຫາກວ່ານີ້ບໍ່ໄດ້ຫລາຍໝູ່ ພວກເຮົາກໍ່ເປັນເອກະພາບກັນຈະໃຫ້ລືບໝູ່ໃນມື້ຕໍ່ໄປ ຕັ້ງລະດັບຄາດໝາຍໄວ້ແບບນີ້ເປັນປະຈຳ.

ຄາບເຂົ້າແລງຜ່ານພົ້ນໄປດ້ວຍຄວາມອີ່ມໜຳສຳລານ ແລະ ມີລະບຽບ, ຈານໃຜຈານລາວເກັບໄປລ້າງ, ຮັກສາອະນາໄມບ່ອນກິນເຂົ້າຊ່ອຍກັນ.

ຫົວລົມ ທີ່ປະກົດຕົວຄຳ ຄືນນີ້ມປູ່ຂອບຟ້າທິດເໜືອກ່ອນກິນເຂົ້າແລງນັ້ນ ບັດນີ້ໄດ້ປົກຄຸມບໍລິເວນທີ່ພັກຂອງພວກເຮົາ. ສຽງລົມພັດຕົ້ນໄມ້ ໃບຫຍ້າດັງອື້ໆ, ແພຢາງທີ່ມຸງຫລັງຄາບ່ອນພັກປິວສະບັດ, ສຽງໄມ້ລັ່ນ ແລະ ສີກັນໂກະກະອອດແອດ, ເຄື່ອງນຸ່ງແພຖືຫລຸດຈາກຣາວ ປິວໄປທົ່ວທິບ; ຄວາມສັບສົນອົນລະໝ່ານເປັນໄປຢ່າງສົນລະວົນສຸດຂີດ, ບັນດາກຳມະກອນສົນລະວົນ ເກັບເຄື່ອງທີ່ປິວ, ນັ່ງມັດທີບຫໍ່ ແລະ ເອົາສິ່ງຂອງໜັກໆມາເຕັງໄວ້, ສ່ວນໜຶ່ງກໍ່ພາກັນຈ່ອງສົ້ນແພຢາງໄວ້ ບໍ່ໃຫ້ມັນປິດປິວ. ລົມພັດໜັກມາຕື່ມອີກ, ສຽງມັນດັງວີ້ບວາບ ແລ້ວກໍວາບບາດບາວໆ... ແພຢາງມຸງຕຸບທີ່ພັກຂອງແມ່ຍິງຖືກລົມພັດປິດອອກ ສຽງຈີກຈາກດັງໄປທົ່ວ, ມີຄວາມສັບສົນຢູ່ໃນ

ຄວາມດຳມືດເພາະໄຟມອດ ຝົນເລີ້ມລົງເມັດ, ຟ້າມາບເຫລື້ອມຫລຽວເຫັນ ກຳມະກອນຜູ້ຊາຍຈຳນວນໜຶ່ງ ຢູ່ແຄມຊາຍຄາຕູບແມ່ຍິງ, ບາງຄົນຈ່ອງໄມ້ໄວ້. ບາງຄົນຈ່ອງສົ້ນແພປາງສ່ວນທີ່ຍັງບໍ່ທັນເລີກນັ້ນໄວ້, ມີສຽງເວົ້າວ່າ:

" ຊ່ອຍກັນ ! ຊ່ອຍກັນ ! ຈ່ອງໄມ້ເສົາໄວ້ຢ່າໃຫ້ມັນລົ້ມ, ລະວັງແນ່ເນີ ! ຢ້ານໄມ້ຕົກໃສ່ຫົວ, ໃຫ້ພວກແມ່ຍິງອອກໜີກ່ອນ... ".

ຂ້ອຍແລ່ນໄປ ມືຄວາໃສ່ແພປາງຈ່ອງໄວ້ຊ່ອຍໝູ່ ແມ່ຍິງພາກັນອອກມາຢືນຢູ່ນອກຕູບ ຈຳນວນໜຶ່ງກໍຂົນເຄື່ອງອອກໄປໄວ້ບ່ອນປອດໄພ ບາງຄົນກໍຊ່ອຍພວກຜູ້ຊາຍຈັບຈ່ອງເສົາຕູບໄວ້ບໍ່ໃຫ້ຕູບເຊ. ເຫດການດຳເນີນ ໄປດ້ວຍຄວາມສັບສົນ, ອາໄສແຕ່ແສງຟ້າມາບເຫລື້ອມເພື່ອເຄື່ອນຕົວຈາກບ່ອນໜຶ່ງໄປຫາບ່ອນໜຶ່ງ.

ເວລາໄດ້ຜ່ານໄປ. ຝົນຊຶ່ງທຳທ່າ ຈະຕົກແຮງ ນັ້ນກໍຄ່ອຍລົງຄ່ອຍໆມະຫັບມະຫາຍໄປ ຍັງແຕ່ລົມພັດດັງອື້ງຕໍ່ມາກໍຄ່ອຍລົງແລ້ວກາຍມາເປັນສາຍລົມທຳມະດາ ທ້ອງຟ້າມືດໄປທົ່ວ ຫົວລົມມຸ່ງໜ້າໄປທາງທິດໃຕ້.

ເຫັນວ່າລົມບໍ່ຮ້າຍແຮງແລ້ວ ພວກເຮົາກໍພາກັນມຸງ

ແພປາງຄືນໃໝ່. ແປຕູບທີ່ຖືກລົມຮື້ແພປາງອອກນັ້ນກໍມີທັງຕູບກິນເຂົ້າ ແລະ ຕູບຂອງແມ່ບົງ, ຂ້ອຍກັບໝູ່ຫ້າຫົກຄົນຂຶ້ນເທິງ ຫລັງຕູບຂອງແມ່ບົງ ອີກຈຳນວນໜຶ່ງຢູ່ລຸ່ມກໍຈັດການ ຍື່ນແພປາງໃຫ້ແລ້ວ ພວກເຮົາກໍດຶງຂຶ້ນເທື່ອເລັກເທື່ອນ້ອຍ. ແພປາງມັກເກາະໄມ້ ບ່ອນນັ້ນບ່ອນນີ້ເລື້ອຍໆ, ກວ່າຊິເອົາຂຶ້ນໄດ້ຮຽບຮ້ອຍກໍຫຍຸ້ງຍາກສົມຄວນ. ເມື່ອມຸງແລ້ວໆກໍເອົາໄມ້ມາຂະນາບອີກ ພວກຢູ່ລຸ່ມເອົາໄມ້ຍື່ນໃຫ້ພ້ອມດ້ວຍໄມ້ຕອກມັດ. ພວກຢູ່ເທິງຂະນາບແລ້ວເອົາໄມ້ຕອກມັດໃຫ້ແໜ້ນໜາ. ຢູ່ໃກ້ໆຂ້ອຍນັ້ນມີຜູ້ໜຶ່ງຄືໜວກແງັບເຮັດວຽກຢູ່ຢ່າງບໍ່ປາກບໍ່ເວົ້າ. ຂ້ອຍຫຍັບເຂົ້າໄປໃກ້ຕື່ມອີກເພື່ອບອກໃຫ້ເຂົາຍື່ນໄມ້ໃຫ້ ເຂົາຜູ້ນັ້ນຈັບໄມ້ຍື່ນມາພ້ອມດຽວກັບນັ້ນຟ້າກໍມາບເຫລື້ອມ. ຂ້ອຍຕື່ນບຸບແລ້ວອຸທານຂຶ້ນວ່າ: " ຟ້າເອີຍ ! ນ້ຳໜູນຈິ່ງເປັນພິຍານ...
" ຄົນຜູ້ທີ່ຍື່ນໄມ້ໃຫ້ຂ້ອຍນັ້ນແມ່ນເອື້ອຍພຽງດີ. ລາວນຸ່ງສົ້ງນັ່ງຂະນາບແປຕູບ ຈັດການເອົາໄມ້ແບບແພປາງແລ້ວເອົາຕອກມັດຢ່າງເອົາໃຈໃສ່ເຮັດບໍ່ປາກບໍ່ເວົ້ານຳໃຜ.

" ລະວັງຕົກໄດເອື້ອຍ !" ຂ້ອຍບອກ.

" ຮັບຮອງບ່າ " ລາວວ່າ.

" ເຄື່ອງເອື້ອຍບໍ່ເສັຽບໍ? ".

" ມ້ຽນດີແລ້ວ ບໍ່ເປັນຫຍັງດອກ! ".

ພວກເຮົາຫຍັບຫ່າງກັນອອກໄປເພາະວ່າຖ້າຢູ່ໃກ້ ກັນດົນຫລາຍຢ້ານໄມ້ຫັກ. ຂ້ອຍຄຶດອັດສະຈັນເອື້ອຍພຽງດີຢູ່ບໍ່ເລີກບໍ່ແລ້ວ, ຄຶດຫາຄຳຂວັນຂອງລາວທີ່ນາງໄພສອນວ່າເຫັນຢູ່ໃນປື້ມນ້ອຍ " ເປັນຍິງແທ້, ເປັນແມ່ຄົນ, ເປັນເຈົ້າຕົນເອງ " ລາວປະຕິບັດຕາມຄຳຂວັນນີ້ມາດົນສ່ຳໃດແລ້ວນໍ ຂ້ອຍຄຶດ.

ການມຸງຕູບຜາມຄືນໃຫມ່ດຳເນີນໄປຊົ່ວໂມງປາຍກໍ່ສຳເລັດ ທຸກຄົນຂົນເຄື່ອງຂົນຂອງມາເກັບມ້ຽນຕາມເດີມແລ້ວກໍ່ພາກັນເຂົ້ານອນ ເພື່ອຈະໄດ້ມີແຮງປະເຊີນກັບການຂຸດເໝືອງໃນມື້ຕໍ່ໆໄປ.

ຂ້ອນແຈ້ງຄືນນັ້ນ ຝົນຕົກລົງມາປານຖອກນ້ຳ, ເມັດຝົນໄດ້ຜະໃສ່ພວກເຮົາຈົນຕ້ອງໄດ້ຖອຍໜອນມານອນ ບຽດກັນຢູ່ກາງເຕິງ. ທຸກຄົນພາກັນນອນຂົດຢູ່ໃນຜ້າຫົ່ມ ສຽງຝົນຕົກພໍດີກ່ອມໃຫ້ນອນຫລັບດີແລະບໍ່ມີການປະກາດປຸກໃຫ້ຕື່ນນອນຕອນສີ່ໂມງເຄິ່ງຄືທຸກເຊົ້າທີ່ຜ່ານມາ. ທາງຄະນະຊີ້ນຳຄົງຄຶດວ່າ ເຖິງຈະປຸກໃຫ້ລຸກແຕ່ເຊົ້າ ກໍ່ເຮັດ

ວຽກບໍ່ໄດ້ ເພາະນ້ຳຫົ້ງຕາມຮ່ອງເໝືອງ ທັງດິນກໍມື່ນ ແລະເປັນຕົມ ພວກເຮົານອນຕະຫລອດຊອດແຈ້ງ. ຝົນໄດ້ເຊື້ອນແລ້ວແຕ່ທ້ອງຟ້າກໍຍັງມືດຄຶ້ມຢູ່. ຕໍ່ມາຄະນະຊີ້ນຳປະກາດທາງ "ບັ້ງອາໂລ" ວ່າຕອນເຊົ້ານີ້ ນີ້ບໍ່ມີການອອກແຮງງານຈົນກ່ວາຈະມີຄຳສັ່ງໃຫມ່. ພວກເຮົາບາງຄົນກໍ່ນອນຕໍ່ ແຕ່ສ່ວນຫລາຍລຸກໄປລ້າງໜ້າລ້າງຕາ ເພາະນອນຕໍ່ໄປກໍບໍ່ຫລັບ.

ວັນໃຫມ່ເປັນວັນທີ່ຄຶ້ມຟ້າມືດຝົນ ອາກາດເຢັນ ບາງຄັ້ງມີລົມພັດມາ, ປາດນ້ຳຫລົ່ນລົງຈາກໃບໄມ້ ສຽງດັງຊວາດໆ. ພວກເຮົານັ່ງລົມກັນ, ບາງຄົນກໍອ່ານໜັງສື, ບາງຄົນກໍເລົ່າເລື່ອງ, ບາງຄົນລຸກຂຶ້ນແປງແພປາງທີ່ໄປດລົງມາເປັນອຸ້ມລຸ້ມເນື່ອງຈາກນ້ຳຝົນຫົ້ງ, ພໍແຕ່ເອົາມືຍູ້ແພປາງບາດໜຶ່ງ ນ້ຳກໍແລ່ນລົງຄ້ອນຕົກລົງຊາຍຄາດັງຈວາກ ບາງຄົນພອມຍ່າງອອກເຮືອນ ຫລືບາງຄົນຍ່າງໃກ້ຊາຍຄາກໍຖືກນ້ຳຕົກໃສ່ຫລົງຮ້ອງໂອ້ກອາກ! ແລ້ວສຽງຫົວຂັວນຈາກຫມູ່ກໍດັງຂຶ້ນ. ພວກເຮົານັ່ງຫລິ້ນນອນຫລິ້ນເມື່ອບໍ່ມີຫຍັງເຮັດກໍເກີດມຸດໝິດໃຈ ແລະ ປາກໃຫ້ແດດອອກມາໄວໆເພື່ອຈະໄດ້ສືບຕໍ່ເຮັດວຽກຕາມປົກກະຕິ.

ເມື່ອຕາເວັນພົ້ນປາຍໄມ້ ພວກເອື້ອຍລ້ຽງກໍປະກາດໃຫ້ກຽມຖ້ວຍກຽມຊາມໄປເອົາເຂົ້າປຽກປັ້ນເຊົ້າ. ໃນຕູບພັກມີການເຄື່ອນໄຫວ, ຜູ້ນອນຢູ່ກໍລຸກນັ່ງ, ຜູ້ນັ່ງຢູ່ກໍລຸກຢືນຂຶ້ນຈັບຖ້ວຍຈັບບ່ວງແລ້ວຍ່າງໄປເອົາເຂົ້າປຽກ. ບາງຄົນກໍກິນຢູ່ຫ້ອງອາຫານເລີຍ, ບາງຄົນກໍເອົາມາກິນຢູ່ຕູບພັກ, ຜູ້ໃດມີນ້ຳປານ້ຳແຈ່ວເຄື່ອງດອງ ກໍເອົາອອກມາສູ່ຫມູ່ກິນນຳ. ພວກເອື້ອຍລ້ຽງເປັນຫນ່ວຍດຽວທີ່ມີວຽກເຮັດບໍ່ຂາດມື້,ເຖິງແດດຈະອອກຝົນຈະຕົກກໍຕ້ອງໄດ້ຄົວກິນໃຫ້ຫນ່ວຍອອກແຮງງານ ປຸດເຊົາບໍ່ໄດ້ ຄືຫນ່ວຍອື່ນໆ, ເຖິງວຽກຈະບໍ່ຫນັກຄືຫນ່ວຍຂຸດດິນ ແຕ່ວຽກຂອງຫນ່ວຍເອື້ອຍລ້ຽງກໍຕ້ອງເຮັດຕະຫລອດມື້ ມີເວລາພັກຜ່ອນຫນ້ອຍທີ່ສຸດ.

ເກືອບສິບເອັດໂມງຈຶ່ງເຫັນຕາເວັນ, ແສງແດດຕ້ອງກັບຢາດນ້ຳຝົນຕາມຕົ້ນໄມ້ໃບ ຫຍ້າ ຕາມ ຫນ້າ ດິນ ເປັນແສງເຫລື້ອມຍິບຍັບ. ພວກເຮົາຍ່າງອອກຈາກບ່ອນພັກໄປຢຽດຫລັງຢຽດແອວ, ຄວາມມີຊີວິດຊີວາໄດ້ປະກົດໃຫ້ເຫັນອີກຢູ່ຕາມເດີ່ນຊຸມນຸມ. ຄະນະຊີ້ນຳຊຶ່ງໄປສຳຫລວດບ່ອນເຮັດວຽກກັບມາແລ້ວ ປະກາດວ່າບ່າຍສອງໂມງໃຫ້ລົງມືຂຸດເຫມືອງໄດ້ ແທນທີ່ຈະແມ່ນສາມໂມງຕາມປົກ

ກະຕິ ທັງນີ້ກໍເພາະຕອນເຊົ້າເຮົາເສັຽເວລາຫລາຍແລ້ວ.

ພວກເຮົາກິນເຂົ້າງາຍແລ້ວ ຖ້າເວລາຮອດບ່າຍສອງໂມງກໍພາກັນແບກຈົກແບກຊ້ວານ ຍ່າງມຸ່ງໜ້າໄປສູ່ບ່ອນຂຸດເໝືອງ. ໜ້າດິນແຫ້ງແລ້ວເປັນສ່ວນຫລາຍ ແຕ່ບ່ອນຫລຸບກໍຍັງມີນ້ຳຫັ້ງຢູ່ເປັນບາງບ່ອນ ການຂຸດເໝືອງເລີ່ມຂຶ້ນອີກຢ່າງຟົດຟື້ນ, ມີການຈົ່ມເສັຽດາຍທີ່ເວລາຜ່ານໄປຕັ້ງກ່ວາເຄິ່ງມື້ໂດຍບໍ່ໄດ້ເຮັດວຽກ ຈົ່ມວ່າບໍລິມາດດິນ ທີ່ຂຸດຈະຕ້ອງຫລຸດ ລະດັບຄາດໝາຍ ທີ່ໄດ້ກະໄວ້ ແຕ່ລະມື້. ເອື້ອຍພຽງດີສະເໜີຂຶ້ນວ່າ ມື້ນີ້ໜ່ວຍພວກເຮົາຄວນເຮັດວຽກຮອດ ໗ ໂມງແລງແທນທີ່ຈະແມ່ນ ໕ ໂມງຕາມປົກກະຕິແຕ່ກໍມີສຽງຄັດຄ້ານ ເພາະຈະເປັນການລະເມີດ ການຈັດຕັ້ງ, ຂັ້ນເທິງວາງລະບຽບໄວ້ແນວໃດ ກໍຄວນປະຕິບັດຕາມ. ການອອກແຮງງານເປັນໄປດ້ວຍດີ, ມີຄວາມສາມັກຄີຮັກແພງ ບໍ່ມີການໜັ້ງກັນຫລື ເຮັດຂີ້ແບະໃນໜ່ວຍພວກເຮົາ. ເຖິງເວລາເລີກພວກເຮົາ ແຕ່ລະຄົນເກັບກຳເຄື່ອງໄມ້ເຄື່ອງມືປະຈຳຕົວແລ້ວຍ່າງບ່າຫລັງກັບຄືນສູ່ບ່ອນພັກ.

ສາມມື້ ຕິດຕໍ່ກັນ ການຂຸດເໝືອງເປັນໄປຕາມປົກກະຕິ, ບາງເທື່ອມີຝົນຕົກລົງມາແຕ່ກໍບໍ່ແຮງ ເຖິງຂັ້ນຕ້ອງ

ເຊົາເຮັດວຽກ, ຕົກມາພໍ່ຊຸ່ມເປັນໃຫ້ພວກເຮົາຫາຍຮ້ອນ. ໜ່ວຍພວກເຮົາຂຸດເໜືອງໄດ້ເລິກສອງແມັດ ອີກ ໓໐ ຊັງ ຕີແມັດກໍ່ຮອດລະດັບທີ່ກຳນົດໄວ້. ບໍລິມາດດິນທີ່ຂຸດ ສະເລ່ຍແຕ່ລະຄົນໄດ້ເຖິງ ໑.໒໐ ແມັດກ້ອນຕໍ່ມື້. ຕໍ່ໄປອາດຈະຫລຸດລົງເພາະຄວາມເລິກເຮັດໃຫ້ຂົນດິນຂຶ້ນຊ້າ.

ເອື້ອຍພຽງດີ ອ່ອນແຮງລົງແນ່ເຊັ່ນດຽວກັບຜູ້ອື່ນທົ່ວໄປແຕ່ກໍ່ມີຄວາມເວົ້າປຸກໃຈອ້າຍນ້ອງ ໃຫ້ເບີກບານຫ້າວຫັນຢູ່. ໜ່ວຍພວກເຮົາບໍ່ມີໃຜເຈັບໄຂ້ໄດ້ປ່ວຍ ແຕ່ຄວາມອ່ອນເປັ້ຍເພຍແຮງກໍ່ປະກົດໃຫ້ເຫັນເປັນທຳມະດາ.

" ບຸກບືນບໍ່ຖອຍ ໃຜຊິເປັນນ້ອງເຂີຍຂອງເອື້ອຍ, ມີນ້ອງສາວຢູ່ບ້ານຕັ້ງສອງຄົນພຸ້ນໄດ! " ເອື້ອຍພຽງດີວ່າ.

" ເຮັດໃດຊິຄູ່ກັນ ເປັນບ່າວຢູ່ນີ້ຕັ້ງຫລາຍຄົນ " ຂ້ອຍສົນຂຶ້ນ.

" ເອີ! ຫລາຍບ່າວກໍ່ຄ່ອຍໆແກ້ໄຂໄປ, ນອກຈາກນ້ອງສາວແລ້ວກໍ່ຍັງມີພີ່ນ້ອງຍັງເປັນແສ້ເປັນສາວ ຢູ່ຕັ້ງຫລາຍຄົນ ".

ພວກອ້າຍບ່າວພາກັນຫົວຍິ້ມ ເຖິງຈະບໍ່ສ້າງຄວາມຫວັງໄວ້ແຕ່ຄຳເວົ້າຂອງລາວກໍ່ເຮັດໃຫ້ຫົວໃຈຊຸ່ມຊື່ນໄປໄດ້.

ແລະ ການຂຸດເໜືອງກໍດຳເນີນໄປຢ່າງບໍ່ທໍ້ຖອຍ. ມັນທັງເມື່ອຍທັງມ່ວນ ທັງຮ້ອນສັບສົນປົນກັນໄປ.

ຕອນແລງມາ, ເວລາເລີ່ມເຂົ້າສູ່ພາເຂົ້າ ສັງເກດເບິ່ງເອື້ອຍພຽງດີມີໃບໜ້າບໍ່ສົດຊື່ນ, ບໍ່ຊ່າງເວົ້າຊ່າງລົມຄືທຸກມື້ທີ່ຜ່ານມາ ລາວຈົກເອົາເຂົ້າມາປັ້ນ ແລະ ກ່ອນຈະຈ້ຳລົງຖ້ວຍອາຫານລາວກໍເວົ້າຂຶ້ນວ່າ :

" ຂ່າວບໍ່ດີ, ມີຈົດໝາຍມາວ່າລູກເຈັບ ໃຫ້ກັບບ້ານດ່ວນວ່າຊັ້ນ ".

ລາວເວົ້າສຽງເຕື້ອຍໆ ແຕ່ທັນໃດນັ້ນຄົງນຶກອອກໄດ້ວ່າບໍ່ເໝາະສົມທີ່ ຈະບອກຂ່າວບໍ່ດີເວລາໝູ່ຄູ່ພວມຊິກິນເຂົ້າ ລາວຈຶ່ງເວົ້າເຣັດສຽງເປັນທຳມະດາຂຶ້ນວ່າ: " ຄົງບໍ່ມີຫຍັງໜັກດອກ ເພາະລູກຜູ້ນີ້ເຄີຍເຈັບປູ່ເລື້ອຍໆ, ເປັນໄອແລ້ວກໍໄຂ້ໄຕຮ້ອນປານໄຟ ບໍ່ດົນກໍເຊົາດອກ ".

ລາວເວົ້າວ່າ ທາງຈັດຕັ້ງຕົກລົງໃຫ້ກັບເມືອເບິ່ງລູກ ແລະ ຈະເມືອພ້ອມລົດໄປຕະຫລາດໃນມື້ອື່ນເຊົ້າ ພວກເຮົາຈົ່ມເສຽດາຍທີ່ລາວຈະຈາກໄປໂດຍບໍ່ໄດ້ຊົມຜົນສຳເລັດບັ້ນສຸດທ້າຍທີ່ລາວ ໄດ້ອອກເຫື່ອເທແຮງ ຮ່ວມກັບຂຸດກົ່ນມາ. ພາເຂົ້າພວກເຮົາສີເຫງົາໆ ບໍ່ຄືທຸກມື້ທີ່ຜ່ານມາ.

ເອື້ອຍພຽງດີກ່າວຂໍໂທດ ທີ່ເຮັດໃຫ້ບັນຍາກາດ ປ່ຽນໄປ. ພວກເຮົາສະແດງຄວາມເຫັນໃຈ ແລະ ວ່າຄວາມເຈັບໄຂ້ ຍ່ອມເກີດຂຶ້ນໄດ້ສະເໝີ. ອັນນີ້ມັນເກີດຂຶ້ນ ກັບລູກຂອງ ເອື້ອຍ, ກ່ອນຈະເປັນບ່ອນອີງໃຫ້ແກ່ທາງອື່ນ ເອື້ອຍກໍຕ້ອງ ເປັນບ່ອນອີງໃຫ້ແກ່ຄອບຄົວຢ່າງຫລີກບໍ່ໄດ້.

ມື້ຕໍ່ມາ ພວກເຮົາກໍເຮັດວຽກ ໂດຍບໍ່ມີເອື້ອຍພຽງດີ, ລາວຂຶ້ນລົດໄປພ້ອມກັບພວກໄປຕະຫລາດແຕ່ຍາມໃດບໍ່ ຮູ້ ເພາະພວກເຮົາກໍອອກສູ່ບ່ອນຂຸດເໝືອງແຕ່ ໕ ໂມງເຊົ້າ ຍັງມືດຊຸ້ມລ້າວຢູ່. ໝູ່ເຮົາໃຜໆກໍຈົ່ມຫາລາວ, ຫລຽວເຫັນ ກະແຕະ ທີ່ລາວເຄີຍຫາມເປັນປະຈຳກໍໄດ້ແຕ່ໄອ້ອ່າວຫາ ແລະ ຄິດຢາກໃຫ້ລາວກັບຄືນມາອີກໄວໆ. ລາວຈາກໄປ ພວກເຮົາຮູ້ສຶກວ່າ ມີສ່ວນໃດສ່ວນໜຶ່ງໃນຮ່າງກາຍຫລຸດ ຫາຍໄປແລະເປັນກະວັ້ງກະເວຕະຫລອດມື້ ຄືກັບວ່າສະມາ ຊິກໃນຄອບຄົວໄດ້ສູນຫາຍໄປ ເຫລືອໄວ້ແຕ່ຄວາມອາໄລອາ ວອນແລະເປັນຫ່ວງຫາ.

ຕົກມາມື້ທີ່ສອງ ພວກເຮົາຕື່ນນອນຕາມເວລາ ແລະ ອອກສູ່ບ່ອນເຮັດວຽກກ່ອນ ໕ ໂມງເລັກນ້ອຍ, ເກືອບທຸກມື້ ທີ່ຂ້ອຍມາຮອດບ່ອນຂຸດດິນມັກຈະເຫັນ ເອື້ອຍພຽງດີມາ

ຮອດກ່ອນສະເຫມີໆ ແຕ່ມື້ນີ້ກໍດີ ມື້ວານນີ້ບໍ່ເຫັນແມ່ນແຕ່ເງົາຂອງລາວ. ພວກເຮົາດຳເນີນວຽກງານຕາມປົກກະຕິ, ບຸກບືນບໍ່ຖອຍ, ບໍ່ມີເອື້ອຍພຽງດີພວກເຮົາກໍຍັງມີ ນາງໄພສອນ ນ້ອງສາວຜູ້ຍິ້ມງ່າຍ. ໄພສອນກໍບໍ່ແມ່ນຈະນ້ອຍໜ້າເອື້ອຍພຽງດີ ໃນການເປັນກຳລັງຊຸກຍູ້ຈິດໃຈ ຜູ້ ຊາຍ ທັງຫລາຍໃນຫນ່ວຍຂອງພວກເຮົາ ໃຫ້ມ່ວນຊື່ນຕໍ່ການອອກແຮງງານ. ນາງຍັງເປັນໂສດເປັນສາວ, ຜູ້ບ່າວຜູ້ໃດເບິງຂ້າມນາງໄປກໍແມ່ນວ່າບໍ່ມີຕາເຖິງ ຫລືຕາງຕິເຮັດຊື້ງ.

" ຜູ້ບ່າວຢູ່ໃນຫນ່ວຍພວກເຮົານີ້ ມີຜູ້ໃດພໍຕ້ອງ ຕາຕ້ອງໃຈແນ່ບໍ, ໄພສອນ ?" ສະຫາຍບຸນທອງເອີຍຂຶ້ນແກມຕະຫລົກ.

" ກໍມີແຫ້ລະບໍ! ພວມເລືອກຢູ່ໃນໃຈນີ້ແຫລະ, ຍັງບໍ່ທັນຕົກລົງເທື່ອຕາບໃດເຫມືອງນ້ຳຫນຸນບໍ່ແລ້ວ, ຈົ່ມຄາຖາດຸຫມັ້ນໆໄວ້ເນີ". ນາງຕອບແບບມີລ່ຽມລາຍຈົນພວກເຮົາໄດ້ຫົວຂຶ້ນ.

ເວົ້າແລ້ວວ່ານາງໄພສອນກໍບໍ່ນ້ອຍຫນ້າ.

" ດຽວນີ້ຕ້ອງຕາຫມົດທຸກຄົນ ຖ້າເບິ່ງຕອນສຳຫລວດນັ້ນສຸດທ້າຍ ບາດນັ້ນລະຊິມີຜູ້ຕ້ອງຕາພິເສດ" ນາງເວົ້າ

ດີ່.

" ເອີ ! ເຮົາກໍ່ຊິດຸຫມັ່ນພິເສດ " ບ່າວລາຍຫນຶ່ງຂຶ້ນສຽງ.

ແລ້ວພວກເຮົາກໍ່ມ່ວນໄປກັບການຂຸດດິນ, ບາງເທື່ອກໍ່ລືມເອື້ອຍພຽງດີໄປ. ມື້ນີ້ຟ້າແດດຫລາຍ ພໍຮອດ ໙ ໂມງກໍ່ຮ້ອນເອົ້າ, ພວກເຮົາເຫື່ອຍ້ອຍເຫື່ອຍ້ງຕາມເຄີຍ, ຂຸດດິນໄປເວົ້າລົມກັນໄປເປັນບາງຄັ້ງບາງຄາວ. ກ່ອນ ໑໐ ໂມງ, ລົດທີ່ໄປຕະຫລາດກໍ່ກັບຕ່າວຄືນມາ ກ່ອນຈະກາຍບ່ອນຂຸດເຫມືອງ ລົດໄດ້ຢຸດ ແລະ ມີແມ່ຍິງຜູ້ຫນຶ່ງລົງ, ຍິງຜູ້ນັ້ນຍ່າງມຸ່ງຫນ້າມາທາງຫນ່ວຍພວກເຮົາ. ບຶດຫນຶ່ງສະຫາຍໃນຫນ່ວຍພວກເຮົາຮ້ອງຂຶ້ນ:

" ເອື້ອຍພຽງດີກັບມາແລ້ວ ! ຫັ້ນຍ່າງມາຫັ້ນ ! "

ສາຍຕາພວກເຮົາເບິ່ງໄປໃນຈຸດດຽວ. ແມ່ຍິງຜູ້ນັ້ນຍ່າງໃກ້ເຂົ້າມາເລື້ອຍໆ ແລ້ວທຸກຄົນກໍ່ເຫັນແຈ້ງເອກະພາບກັນວ່າ ນັ້ນແມ່ນເອື້ອຍພຽງດີອີ່ຫລີ. ລາວກວັກມືໃສ່ພວກເຮົາອີກມືຫນຶ່ງຈັບຫົ້ວສິ່ງຂອງບາງຢ່າງ, ເມື່ອມາຮອດໃກ້ໆຈຶ່ງຮູ້ວ່າແມ່ນຫມາກກ້ວຍ. ເອື້ອຍຍິ້ມຫົວມາ ແລະ ຖືກຕ້ອນຮັບຢ່າງກະຕືລືລົ້ນຈາກພວກເຮົາ. ມີການທັກທາຍ

ກັບບໍ່ຈັກສຽງໃຜຕໍ່ສຽງໃຜຈົນຜູ້ມາຮອດໃຫມ່ບໍ່ຊ່າງຊິຕອບ. ໃນທີ່ສຸດເອື້ອຍກໍ່ເວົ້າຂຶ້ນວ່າ: " ລູກຊາຍຫລ້າ ເປັນໄຂ້ດີ ແລ້ວແຕ່ວານນີ້ ບໍ່ມີຫຍັງຫນ້າວິຕົກ ເອື້ອຍກໍ່ເລີຍກັບມາ, ຄຶດຮອດບ້າຫຸນເອົາແທ້ເອົາວ່າ " ເວົ້າແລ້ວເອື້ອຍ ກໍ່ປາຍ ກ້ວຍໃຫ້ພວກເຮົາທຸກຄົນ.

" ບໍ່ຄຶດຈັກຫນ້ອຍວ່າເອື້ອຍຊິກັບມາອີກ ເພາະຍັງ ແຕ່ສອງມື້ທີ່ນັ້ນ ມື້ທີສາມກໍ່ຈະໄດ້ພາກັນເມືອຫມົດແລ້ວ" ນາງໄພສອນເວົ້າຂຶ້ນ.

" ໂທ! ຈິດໃຈຂອງເອື້ອຍຍັງປູ່ບ້າຫຸນພີ້, ຄຶດຮອດ ຄຶດເຫັນຫນ້າ ພວກເຈົ້າທຸກຄົນ, ບໍ່ໃຫ້ມາບໍ່ໄດ້ແຫລ້ວ" ລາວວ່າ.

" ສະພາບງຽບເຫງົາທີ່ສຸດຕອນເອື້ອຍບໍ່ຢູ່ " ສະຫາຍຫນຶ່ງເວົ້າຂຶ້ນ.

" ກ້ອນຫີນກໍ່ງຽບເຫງົາ " ອີກສະຫາຍຫນຶ່ງເວົ້າຕະຫລົກ.

" ແທ້ຫວະ? ເອື້ອຍມາແລ້ວ ກ້ອນຫີນມັນຊິເບີກບານບໍ່ ?".

" ກໍ່ລອງເບິ່ງ, ເອົາເຫລັກເຂົາຄວາຍສັບ ຮັບຮອງວ່າ

ມັນຕ້ອງອອກແສງມາບໆ ດ້ວຍຄວາມມ່ວນຊື່ນ " ສະຫາຍສຸກັນເວົ້າປອກ.

ແລ້ວພວກເຮົາ ກໍພ້ອມກັນຫົວທັງໆທີ່ເຫື່ອຍບັ້ງບ້ອຍຕາມແກ້ມຕາມຄາງປູ່. ບຶດໜຶ່ງຕໍ່ມາກໍເຖິງ ເວລາເລີກເພາະ ໑໐ ໂມງແລ້ວ.

ຄາບເຂົ້າສວາຍມື້ນີ້ ຄັກເປັນພິເສດກ່ວາທຸກມື້ ເພາະເອື້ອຍພຽງດີມີອາຫານແຊບໆ ມາແຕ່ບ້ານ. ລາວເອົາແຈ່ວບອງມາຕື່ມ ມີຂົ້ວໜໍ່ໄມ້, ສົ້ມກຸ້ງ ແລະ ປີ້ນປາຢ້າງ. ນອກຈາກເອົາມາກິນ ໃນພາເຂົ້າ ຂອງໜ່ວຍພວກເຮົາແລ້ວ, ລາວຍັງແບ່ງຂົ້ວໜໍ່ໄມ້ໃຫ້ໜ່ວຍຢູ່ໃກ້ຫັ້ນກິນນຳ, ເຫັນເຂົາເຈົ້າສະແດງຄວາມດີໃຈ ແລະ ຂອບໃຈຢ່າງຍິ່ງ. ພວກເຮົາກິນເຂົ້າ ດ້ວຍຄວາມແຊບນົວ ໃຜໆກໍຍິ້ມແຍ້ມແຈ່ມໃສ ແລະ ກິນເອົາກິນເອົາປານວ່າຫິວມາໄດ້ຫລາຍມື້ຫລາຍວັນແລ້ວ.

" ກິນໃຫ້ອີ່ມໆ ເນີພວກນ້ອງ. ເອື້ອຍເມືອບ້ານມື້ໜຶ່ງກໍສ່ວຍໂອກາດກິນບັກຫລາຍໆ, ກິນເພື່ອໃຫ້ມີແຮງບຸກນ້ຳຫຸມ " ເອື້ອຍເວົ້າ.

" ປ້ານແລ້ວກ່ອນກຳນົດປູ່ເອື້ອຍມາບຸກຊ່ອຍແນວນີ້"

" ຂ້ອຍບ້ອງ.

" ປາກໃຫ້ເປັນແນວນັ້ນລະ ຕອນບ່າຍມື້ນີ້ ບຸກໂລດແຫລ້ວ " ເອື້ອຍວ່າ.

ພວກເຮົາເລົາເລື່ອງຕອນລາວບໍ່ປຸໃຫ້ລາວຟັງ ແລະວ່ານາງໄພສອນກໍຈະມີແນວພິເສດ ຈາກໃຈມອບໃຫ້ໃຜຜູ້ຫນຶ່ງໃນບັ້ນສຳຫລວດສຸດທ້າຍວ່າດັ່ງນັ້ນ. ພວກເຮົາເວົ້າປອກໃບກັບປ່າງສະຫນິດສະຫນົມຈົນຮອດເລີກພາເຂົ້າ.

ຕອນບ່າຍເວລາ ໓ ໂມງ ພວກເຮົາອອກສູ່ບ່ອນຂຸດເໝືອງທ່າມກາງແສງແດດກ້າ. ຫລຽວແຕ່ໄກຈະເຫັນອາຍແດດເປັນຍິບຍັບ. ຫລາຍຄົນຈົ່ມວ່າຮ້ອນ ປານຫົວຊິແຕກ. ເອື້ອຍພຽງດີກຽມນ້ຳໃສ່ບິດົງມາ ( ກະໂລ່ງນ້ຳມັນເກົາ ). ນາງໄພສອນກໍມີບິດົງນ້ອຍໃສ່ນ້ຳເຕັມ, ກະກັບວ່າຈະພໍກິນສຳລັບຕອນບ່າຍມື້ນີ້. ສະຫາຍສຸກັບໄປຕັດເອົາພິດໄມ້ມາຕົ້ມເພື່ອສຽບປັກໄວ້ເຮັດຮົ່ມຍຽວພໍແກ້ຄວາມຮ້ອນສ່ວນໃດສ່ວນຫນຶ່ງ. ຂ້ອຍເອົາຜ້າຂາວມ້າ ປົກຫົວແລ້ວສຸບໝວກໃສ່ຕື່ມອີກເພື່ອປ້ອງກັນແສງແດດເຜົາ. ພວກເຮົາລົງມືເຮັດວຽກດ້ວຍຈິດໃຈຫຸ່ນຫ່ຽງ. ຮ່າງກາຍທີ່ສູ້ທົນຕໍ່ວຽກຫນັກຫນາ ມາໄດ້ຫລາຍມື້ແລ້ວ ນັ້ນບັດນີ້ກໍ່ລົງ ເຄີຍ

ແລ້ວ ແລະ ບໍ່ເມື່ອຍງ່າຍ, ບໍ່ປວດຫລັງປວດແອວຄືຕອນມາທຳອິດ. ການຂຸດທາງເລິກນັ້ນ ໄດ້ຕາມລະດັບທີ່ກຳນົດແລ້ວບັດນີ້ ມີແຕ່ຂຸດເຈັ້ຍໃຫ້ເປັນຂອບເໜືອງ, ສອງຄົນຂຸດສອງຄົນຊ້ວານ, ສອງຄົນຫາມແຕະຂຶ້ນ ໄປໄວ້ຂອບເໜືອງ ແລະ ສີ່ຄົນຫາມແຕ່ຂອບເໜືອງເອົາດິນໄປຖອກນາເຖິງຕອນນີ້ການຂຸດດິນກໍຕ້ອງໄດ້ລະມັດລະວັງ ຖ້າຂຸດລົງເລິກໂພດ ກໍຈະເຮັດໃຫ້ທ້ອງເໜືອງ ໂກນຜິດລະດັບ, ເຮົາຕ້ອງໄດ້ແນມເບິ່ງທ້ອງເໜືອງ ຂອງໜ່ວຍອື່ນແລ້ວຄິດໄລ່ໃສ່ກັນ ແລະ ແປງໄປນຳ. ເອື້ອຍພຽງດີມັກໄປຢືນຢູ່ໄລຍະຫ່າງໆ ແລ້ວຄິດໄລ່ດ້ວຍສາຍຕາ ໂດຍສົມທຽບໃສ່ພາກສ່ວນອື່ນແລ້ວກໍມາແນະນຳ ພວກເຮົາວ່າບ່ອນໃດມັນຫລຸບມັນໂນນ, ຄວນຂຸດລົງອີກປະມານຈັກຊັງຕີແມັດ. ພວກເຮົາຂຸດແລ້ວກໍຖາກໃຫ້ຮາບພຽງ, ຕ້ອງໃຊ້ຄວາມພຽນພະຍາຍາມ ແລະ ໃຊ້ເວລາຫລາຍກ່ວາການຂຸດລົງທາງເລິກ.

ການຖາກໃຫ້ຖືກລະດັບ ແລະ ຮາບພຽງດີນີ້ ພວກເຮົາມອບໃຫ້ສະຫາຍທອງສຸກຮັບຜິດຊອບເພາະລາວເປັນຄົນໃຈທຸ່ນທ່ຽງ, ລາວບໍ່ປາກ ກົ້ມໜ້າໃສ່ແຕ່ດິນ ທ່າທາງ

ເຄັ່ງຂຶມ. ດົນໆລາວກໍເອົາຫລັງມືເຊັດເຫື່ອອອກຈາກຫນ້າຕາເທື່ອຫນຶ່ງ. ເຮັດວຽກທ່າມກາງ ແສງແດດກ້າແບບນີ້ ພວກເຮົາມັກໄອ້ອ່າວຫາສາຍຝົນ, ແຕ່ຖ້າວ່າຝົກຕົກລົງມາດົນມື້ ຢ່າງພະລາດ ພວກເຮົາກໍໄອ້ອ່າວຫາແດດ, ພວກເຮົາຮູ້ດີວ່າທຳມະຊາດ ບໍ່ມັກເຂົ້າຂ້າງຄົນອ່ອນແອ. ດັ່ງນັ້ນພວກເຮົາຈຶ່ງຢືນສູ້ກັບທຳມະຊາດ ບໍ່ວ່າມັນຈະຮ້ອນຫລືຫນາວ, ແດດຫລືຝົນ.

ຫມົດຕອນບ່າຍ ການເຈັ້ຍຂອບເຫມືອງກໍແລ້ວໄປສ່ວນໃດສ່ວນຫນຶ່ງ, ພວກເຮົາໂລ່ງໃຈເພາະໃກ້ຈະສຳເລັດເຂົ້າໄປເລື້ອຍໆ.

ນັ້ນຕໍ່ມາພວກເຮົາບຸກ ແຕ່ເຊົ້າຕາມເຄີຍ, ຜູ້ໃດກໍຂະຫຍັນຂັນແຂງເພາະຈະໃຫ້ສຳເລັດລົງໃນມື້ນີ້, ເຖິງຍາມພັກຜ່ອນກໍບໍ່ມີຜູ້ໃດຢຸດ ມີແຕ່ເວລາກິນນ້ຳເທົ່ານັ້ນຢຸດແນ່ຫນ້ອຍຫນຶ່ງ ແລ້ວກໍຕື່ນໂຕລົງມືເຮັດຕໍ່ໄປ.ຕອນບ່າຍພວກເຮົາລົງມືເຮັດກ່ອນເວລາເຄິ່ງຊົ່ວໂມງ. ຂອບເຫມືອງເບື້ອງຫນຶ່ງສຳເລັດໄປແຕ່ຕອນເຊົ້າພຸ້ນ ແລະ ອີກເບື້ອງຫນຶ່ງກໍສຳເລັດໄປເກືອບເຄິ່ງແລ້ວ. ເວລາ ໓ ໂມງປາຍ ນາຍຊ່າງສຳຫລວດລະດັບໄດ້ຜ່ານມາ ພວກເຮົາຮຽກຮ້ອງຂໍຄຳແນະ

ນຳ ແລະ ຂໍໃຫ້ເພິນເບິງສ່ວນທີ່ເຮັດສຳເລັດໄປແລ້ວວ່າໄດ້ຕາມລະດັບທີ່ກຳນົດແລ້ວຫລືບໍ່ ? ນາຍຊ່າງເອົາກ້ອງສ່ອງໄປຕັ້ງໄວ້ໄກສົມຄວນແລ້ວສ່ອງເບິງ ຕໍ່ມາກໍມາບອກວ່າໄດ້ຕາມລະດັບແລ້ວ ສ່ວນພື້ນນັ້ນຕ້ອງຂຸດລົງອີກປະມານ ໕ ຊັງຕີແມັດກໍພໍ. ພວກເຮົາເວົ້າກັນວ່າທີ່ພື້ນບໍ່ທັນເລິກພໍນັ້ນອາດເນື່ອງຈາກດິນທີ່ເຮົາຂຸດນັ້ນເກືອບລົງໄປຖົມ, ຖ້າວ່າຊ້ວານເອົາດິນ ທີ່ຕົກລົງໄປນັ້ນອອກ ກໍເປັນອັນວ່າໄດ້ມາດຕະຖານແລ້ວ. ພວກເຮົາສຸມໃສ່ການຂຸດການຖາກຂອບເຫມືອງຈົນເຖິງ ໕ ໂມງຈຶ່ງສຳເລັດ, ເວລາເຫລືອນັ້ນກໍແມ່ນຂົນດິນອອກຈາກພື້ນແລ້ວແປງໃຫ້ມັນຊື່ ແລະ ຮາບພຽງດີ. ມີສອງສະຫາຍຊ້ວານດິນຢູ່ພື້ນແລ້ວສົ່ງໃຫ້ຫມູ່ທີ່ຄອຍຢູ່ຂອບເຫມືອງ, ພວກຢູ່ຂອບເຫມືອງກໍສົ່ງຕໍ່ໃຫ້ຜູ້ທີ່ຂົນເອົາໄປຖອກນອກ.

ຄາວຫນຶ່ງນາງໄພສອນ ຊຶ່ງເປັນຄູ່ຫາມແຕະກັບເອື້ອຍພຽງດີນັ້ນປະກາດວ່າ: " ຄົນຜູ້ທີ່ຂ້ອຍວ່າຕ້ອງຕາເປັນພິເສດນັ້ນ ບັດນີ້ແຈ້ງແລ້ວ... ".

" ແມ່ນໃຜ ? ແມ່ນໃຜ ? " ຫລາຍສຽງຖາມຂຶ້ນ.

" ກະແມ່ນເອື້ອຍພຽງດີນີ້ເດ ! " ນາງຕອບກ່ອນຈະ

ຫານດົນໄປຖອກເປັນຖ້ຽວສຸດທ້າຍ. ນີ້ສຽງໂອ້ ! ດິດຕາມດ້ວຍສຽງຫົວອື້ນໆຂອງພວກຜູ້ຊາຍເຮົາ.

" ຄັນຊັ້ນໃຜແນ່ຊິບໍ່ວ່າເອື້ອຍພຽງດີເດັ່ນພິເສດຫລືຝັງໃຈເປັນທີ່ເສດ " ນາງໄພສອນເວົ້າແບບມີຫລ່ຽມລາຍ.

ພວກເຮົາຜູ້ຊາຍ ຖືກແຫຍ້ຈົນປູ່ຈ້ອງພ້ອງກັນທີ ໄດ້ແຕ່ຫົວຢູ່ໃນຄໍ.

" ນ້ອງໄພສອນນີ້ເລິກຂະໜາດ ສ່ຳໃຫ້ເຮົາເຈົ້າຂ້ອຍນີ້ບໍ່ທັນລາວດອກ " ບ່າວລາຍຫນຶ່ງຈົ່ມອອກມາ. ຖືກເວົ້າແຫຍ້ໃສ່ແບບນີ້ ນາງກໍ່ອ່ອນສຽງລົງ.

" ກະບໍ່ວ່າດອກ... ນ້ອງບໍ່ເລິກບໍ່ແລບອີ່ຫຍັງດອກເວົ້າໄປຕາມຄວາມເປັນຈິງນີ້ແລ້ວ ".

" ເອົາຈັ້ງຊີສາ, ນ້ອງໄພສອນເປັນຜູ້ທີ່ຝັງເລິກເປັນພິເສດຢູ່ໃນຫົວໃຈຂອງພວກເຮົາ, ໂດຍສະເພາະພວກຜູ້ບ່າວໃນຫນ່ວຍເຮົາ ນີ້ຈະບໍ່ມີ ນີ້ລືມນ້ອງ ໄພສອນ ຈັກເທື່ອ " ເອື້ອຍພຽງດີເວົ້າແບບຕັດສິນ. ທຸກໆ ຄົນພໍໃຈແລ້ວສຽງຫົວກໍ່ຟົດສະຫນັ່ນຂຶ້ນ.

" ນ້ອງໄພສອນເວົ້າແບບນີ້ບໍ່ຖືກແຫລ້ວ ! ເຮັດໃຫ້ພວກຜູ້ຊາຍ, ໂດຍສະເພາະແມ່ນບັນດາອ້າຍບ່າວຢູ່ນີ້

ຜິດຫວັງຫມົດ " ເອື້ອຍພຽງດີວິພາກວິຈານຫລັງຈາກກັບມາແຕ່ຖອກດີບ.

ເປັນອັນວ່າໜ່ວຍ ພວກເຮົາ ຂຸດເໝືອງ ສຳເລັດລົງ, ເປັນການສຳເລັດກ່ອນເວລາກຳນົດໜຶ່ງມື້. ມື້ຕໍ່ມາອັນເປັນມື້ສຸດທ້າຍມີການອອກແຮງງານແຕ່ເຄິ່ງມື້ແມ່ນປະຊຸມສະຫລຸບຜົນງານ. ພວກເຮົາເອົາເວລາຕອນເຊົ້າໄປຊ່ວຍໜ່ວຍອື່ນທີ່ຍັງບໍ່ທັນແລ້ວ ແລະ ສ້າງໄດ້ຄວາມລຶ້ງແກ່ວນສາມັກຄີຕື່ມອີກ.

ພິທີສະຫລຸບຜົນງານ ມີທັງຄວາມຕື່ນເຕັ້ນ, ມີທັງຄວາມໃຈຫາຍສັບປົນກັນໄປ. ໃຈຫາຍກໍເພາະພວກເຮົາຊິໄດ້ຈາກກັນໄປ, ຫ່າງເຫີນກັນໄປຫລັງຈາກ ທີ່ໃຊ້ຊີວິດຮ່ວມກັນຊຶ່ງມີທັງຄວາມເມື່ອຍຄວາມມ່ວນ ຄວາມຮັກແພງຊຶ່ງກັນ ແລະ ກັນ.

ທຸກຄົນພໍໃຈທີ່ໄດ້ເຮັດວຽກເພື່ອສ່ວນລວມ ແລະ ພູມໃຈທີ່ໄດ້ຝາກນ້ຳເຫື່ອນ້ຳແຮງໄວ້ເປັນອະນຸສອນຢູ່ທີ່ນີ້ ເຖິງແມ່ນວ່າການຂຸດຮ່ອງເໝືອງ ຈະບໍ່ທັນສຳເລັດຢ່າງສົມບູນກໍຕາມ. ຊຸດຕໍ່ໄປຫາກຈະເຮັດໜ້າທີ່ສືບຕໍ່ຂຸດກັນ, ບາງທີພວກເຮົາໃນຊຸດນີ້ ອາດຈະມີຜູ້ໄດ້ກັບຄືນມາ ອີກກໍເປັນໄດ້

ແລະ ພວກເຮົາກໍຍິນດີທີ່ຈະເຮັດສຳເລັດໜ້າທີ່ຕາມຄວາມ ຮຽກຮ້ອງຕ້ອງການຂອງພັກ ແລະ ລັດ

ຕາມການເປີດເຜີຍຂອງຄະນະຊີ້ນຳ ໜ່ວຍພວກເຮົາ ຢູ່ໃນອັນດັບສາມ ໃນການຂຸດດິນ ທີ່ໄດ້ບໍລິມາດ ຫລາຍ. ໜ່ວຍທີ່ໜຶ່ງ ແລະ ທີ່ສອງສຳເລັດກ່ອນພວກເຮົາເຄິ່ງມື້ ແລ້ວໄປຂຸດຊ່ອຍໜ່ວຍອື່ນ ບໍລິມາດຈຶ່ງລື່ນການ ຂອງ ໜ່ວຍພວກເຮົາ. ຜ່ານການສະຫລຸບຜົນງານພວກເຮົາ ຕ່າງກໍ່ຈັບມືກັນ ສະແດງຄວາມຍິນດີ ທັງພາຍໃນໜ່ວຍ ແລະ ກັບໜ່ວຍອື່ນໆ. ເບິ່ງໃຜກໍມີໃບໜ້າຍິ້ມແຍ້ມແຈ່ມ ໃສ, ບັນຍາກາດສະໜິດສະໜົມເປັນກັນເອງ. ຄ່ຳມື້ນັ້ນ ພວກເຮົາລຳວົງສາມັກຄີຈົນເດິກດື່ນຈຶ່ງເລີກລາກັນ.

ເຊົ້າມື້ໃໝ່ພວກເຮົາແຕ່ງເອົາເຄື່ອງຂອງແລ້ວໄປນັ່ງຢູ່ ເດີ່ນຊຸມນຸມເພື່ອຄອຍຖ້າລົດ, ເອື້ອຍພຽງດີໄດ້ເຂົ້າຈີ່ປັ້ນບັກ ໃຫຍ່ມາບີປັນພວກເຮົາກິນຜູ້ລະຄຳສອງຄຳ. ລາວວ່າເຫັນ ເຂົ້າໜຽວເຫລືອແຕ່ແລງວານນີ້ ເລີຍຂໍນຳເອື້ອຍລ້ຽງມາ ຈັດການຈີ່ແຕ່ເຊົ້າ ໄວ້ກິນອຸ່ນທ້ອງເພາະມື້ນີ້ບໍ່ມີລາຍການ ກິນເຂົ້າປຽກຄືທຸກເຊົ້າທີ່ມີການອອກແຮງງານ.

" ພົບກັນອີກໃນຊຸດຕໍ່ໆໄປເນີ, ກ່ວາຮ່ອງເໝືອງຈະ

ແລ້ວກໍຄືຊິໄດ້ມາອີກຫລາຍຊຸດປູ່ດອກ " ເອື້ອຍພຽງດີເວົ້າ.

" ຕົກລົງ ຄັນຖ້າໄດ້ຢູ່ ໜ່ວຍດຽວກັນອີກແຮ່ງຊິຄັກຫລາຍ " ຂ້ອຍວ່າແລ້ວອ່ວາຍໄປຫາບາງໄພສອນແລ້ວຫັກຫາຍ " ວ່າຈັ້ງໃດ ?".

" ກະຈັ້ງຊັ້ນແຫລ້ວ... " ບາງຕອບພໍແລ້ວໄປເພາະຄາຫຍ້ຳເຂົ້າຈີ. " ຖ້າວ່າພວກອ້າຍເອື້ອຍມາອີກ ນ້ອງກໍຈະມາອີກ ".

ພວກເຮົານັ່ງລົມກັນໄປມາບໍ່ດົນລົດຂົນກຳມະກອນຊຸດທີສາມກໍມາຮອດ. ມີສຽງໂຮສຽງຮ້ອງຖາມກັນລະຫວ່າງຜູ້ມາໃໝ່ກັບຜູ້ຊິກັບບ້ານເປັນອຶກກະທຶກ. ເມື່ອພວກມາໃໝ່ລົງລົດໝົດພວກເຮົາກໍຂຶ້ນໄປແທນ ຫລັງຈາກໄດ້ຈັບມືສັ່ງລາກັນແລ້ວ, ລົດສີ່ຄັນອັ່ງແຫນ້ນໄປດ້ວຍກຳມະກອນພວກເຮົາ, ຕໍ່ມາຂະບວນລົດກໍເຄື່ອນອອກໄປເທື່ອລະຄັນ. ຂ້ອຍກັວກມືໃສ່ເອື້ອຍພຽງດີທີ່ ຂີ່ລົດຄັນບ່ຳຫລັງ, ລາວກັວກມືຕອບ, ທຸກໆຄົນພວກເຮົາກັວກມືໃສ່ກັນໃນຂະນະທີ່ລົດຂະບອກຄອກຄອນໄປຕາມທາງທີ່ດຸດໃໝ່, ບາງເທື່ອພວກເຮົາກໍເຊຕຳກັນເພາະຈັ້ງບໍ່ຢູ່, ເມື່ອຕັ້ງທ່າໄດ້ໃໝ່ບໍ່ດົນກໍເຊອີກ, ລົດຫງ່ຽງໄປເບື້ອງຊ້າຍແລ້ວກໍຫງ່ຽງໄປເບື້ອງຂວາ,

ບາງເທື່ອຜູ້ຂັບກໍ່ຢຽບຫ້າມ ຢ່າງກະທັນຫັນຈົນ ພວກເຮົາຫົວດອນໄປທາງໜ້າ ຕຳກັບເປັນອຶກກະທຶກ ແລ້ວສຽງໄຮສຽງຮ້ອງກໍ່ດັງຂື້ນພິດສະໜັ່ນ ກ່ວາລົດຈະຮອດທາງລ່ຽນດີກໍ່ເຈັບເສັ້ນເຈັບອັນເອັນຫລາຍເຕີບ,

ເມື່ອຮອດທາງດີ ລົດກໍ່ແລ່ນໄວ ພາພວກເຮົາໄປບໍລິເວນສ້າງຝາຍນ້ຳຫຸນໄປວັ່ງໆ, ຂ້ອຍຄຶດຢູ່ໃນໃຈວ່າ ຊຸດໜ້າຈະສະໝັກໄປຝາຍນ້ຳຫຸນອີກ ເພື່ອປະກອບສ່ວນຂຸດເໜືອງ, ເພື່ອພົບພໍ້ກັບໝູ່ເກົ່າ ໂດຍສະເພາະແມ່ນເອື້ອຍພຽງດີ./.

# ມູນມັນແພງ

* ນາງເພົາພົບກັບບັນຫາ ທີ່ຕັດສິນໃຈຍາກ, ໃຈໜຶ່ງປາກໃຫ້ລູກມີໂມງມັດແຂນ, ໃຈໜຶ່ງຊ້າພັດຄຶດເສັຽດາຍຂັນເງິນອັນເປັນມູນມໍລະດົກ ທີ່ຕົກທອດມາແຕ່ເຊັ້ນປູ່ຍ່າຕາຍາຍເພາະຈະຫາບໍ່ໄດ້ອີກແລ້ວ. ຮັກລູກກໍ່ປານຮັກໜ່ວຍຕາ, ຂັນເງິນກໍ່ເປັນສົມບັດຕ່ອນດຽວ ແລະ ຕ່ອນສຸດທ້າຍ, ນາງລັ້ງເລໃຈທີ່ຈະເອົາມັນໄປຂາຍເພື່ອເອົາເງິນມາຊື້ໂມງໃຫ້ລູກຊຶ່ງຈະເດີນທາງໄປສຶກສາ ໃນຕ່າງປະເທດ.

ນາງເອົາມືລູບໆ ຄຳໆ ຂັນເງິນໄປມາດ້ວຍຈິດໃຈເລື່ອນລອຍ ສາຍຕາຈັບຢູ່ຮູບຜົວທີ່ແຂວນຢູ່ຝາ. ຄຳພາ; ເຈົ້າຣຸນ, ໄດ້ເສັຽຊີວິດໄປແລ້ວເມື່ອແປດປີກ່ອນ ໂດຍປະຖິ້ມນາງກັບລູກສາມຄົນໃຫ້ປະເຊີນກັບໂລກຕາມລຳພັງ. ສົມບັດຄ່າສູງຄອບຄົວມີຢູ່ ໃນຂະນະນີ້ກໍ່ຄືຂັນເງິນໜ່ວຍນີ້ເອງ. ຄາວແຕ່ງດອງລູກສາວກົກ ກໍ່ແມ່ນຂັນເງິນ ໜ່ວຍນີ້ທີ່ໃຊ້

ເຮັດພາຂ້ວນ ແລະ ກ່ອນໜ້ານັ້ນ ຫລາຍສິບປີມັນຖືກໃຊ້ເຮັດພາຂ້ວນບາລີ ແລະ ພາຂ້ວນແຕ່ງດອງ ຂອງພໍ່ແມ່ ແລະ ຍາດພີ່ນ້ອງຫລາຍລາຍດ້ວຍກັນ.

ນາງແນມເບິ່ງໃບໜ້າຜົວໃນຮູບດົນໆ ແລະ ປະກົດຄືວ່າດວງຕາຄູ່ນັ້ນມີຊີວິດ ແລະ ພວມເວົ້າຄວາມໃນໃຈອອກມາຊື່ງຫູຂອງນາງປະກົດໄດ້ຍິນວ່າ: " ບໍ່ຈົນຕາແຈອີຫລີ ປ່າຂາຍມູນມໍ່ລະດົກກິນເບີ " ນາງຫລິບສາຍຕາແລ້ວເບິ່ງໄປອ້ອມຫ້ອງປ່າງບໍ່ມີຈຸດໝາຍ.

ນາງກັບເຂົາແຕ່ງດອງຮ່ວມຊີວິດນຳກັນໄດ້ສິບປີ ແລະ ມີລູກນຳກັນສາມຄົນ ເຂົາມີອາຊີບຂັບລົດບັນທຸກໃຫ້ບໍລິສັດແຫ່ງໜຶ່ງ, ເຖິງຈະເປັນກຳມະກອນມີລາຍໄດ້ໜ້ອຍ ແຕ່ເຂົາກໍ່ພະຍາຍາມໝູນໃຊ້ ຄວາມສາມາດຂອງຕົນເພື່ອຫາລ້ຽງຄອບຄົວໂດຍເອົາ ເວລາຍາມຫວ່າງ ໄປຮັບຈ້າງແປງລົດໃຫ້ຜູ້ອື່ນໆ. ເຂົາເປັນຄົນຂະຫຍັນໝັ່ນພຽນ, ເອົາວຽກເອົາການ, ມັກກິນເຫລົ້າແຕ່ກໍບໍ່ເຮັດໃຫ້ຄອບຄົວໄດ້ຮັບຄວາມເດືອດຮ້ອນໄປນ້ອນ. ເຂົາຮັກລູກຮັກເມຍ ແລະ ຍອມເສຽສະລະຄວາມສຸກ ຂອງຕົນເອງ ເພື່ອຄວາມສຸກຂອງຄອບຄົວ ເຊັ່ນວັນອາທິດພັກຈາກວຽກການ ປູ່ນຳບໍລິສັດ

ເຂົາກໍໄປເຊົ່າລົດຕັກຊີແລ່ນຮັບຄົນໂດຍສານ ເພື່ອຫາລາຍໄດ້ພິເສດມາໃຫ້ຄອບຄົວ.

ເຂົາເຄີຍເວົ້າກັບຜົມວ່າ ມູນມໍລະດົກນັ້ນເປັນຂອງມີຄ່າບໍ່ສະເພາະ ແຕ່ໃນຕົວຂອງມັນທໍ່ນັ້ນ ແຕ່ຍັງມີຄ່າທາງດ້ານຈິດໃຈຊຶ່ງຄ່າອັນຫລັງນີ້ ຈະບໍ່ມີອັນໃດມາທົດແທນໄດ້ ຖ້າແມ່ນມູນອັນນັ້ນຫາກສູນເສຍໄປ. ດັ່ງນັ້ນເຮົາຄວນຫວງແຫນໄວ້ຈົນເທົ່າພອງໃດ ໃຫ້ເປັນສົມບັດ ສືບຕໍ່ໄປຮອດຊົ່ວລູກຫລານເຫລັນຫລ້ອນ.

ໃນຊີວິດຂອງຄໍາພາ ສິ່ງທີ່ເຂົາຄຽດຊັງທີ່ສຸດກໍຄືການລັກເອົາວັດຖຸບູຮານ ເຊັ່ນພະພຸດທະຮູບ, ເຄື່ອງແກະສະຫລັກອັນເກົ່າແກ່ສົ່ງອອກໄປຂາຍຕ່າງປະເທດ. ເຂົາຈະຈົ່ມວ່າດ້ວຍຄວາມຂົມຂື່ນຢູ່ໃນໃຈ ເມື່ອໄດ້ຍິນຂ່າວມີການລັກຕັດເອົາສຽນຫລື ລັກເອົາໝົດ ອົງພະພຸດທະຮູບຈາກວັດຕ່າງໆ ຊຶ່ງເຄີຍໄດ້ຍິນເປັນຂ່າວເລື້ອຍໆ ໃນຄາວກ່ອນ. ເຂົາຈະຄຽດແຄ້ນແທນອົງການ ຫລືສໍານັກງານທີ່ຮັບຜິດຊອບໃນເລື່ອງບູຮານວັດຖຸ ເໝືອນກັບວ່າເຂົາເອງ ເປັນເຈົ້າຂອງໂດຍກົງໃນຊັບສົມບັດ ທີ່ສູນຫາຍໄປເຫລົ່ານັ້ນ. ແຕ່ຄົນທີ່ມີອຸດົມຄະຕິເໝືອນຄໍາພາກໍມີໜ້ອຍ, ຕົວເຂົາເອງ

ອາຍຸກໍຍັງຕ່ຳບໍ່ທັນຮອດ ໔໐ ປີກໍມາດ່ວນຕາຍ ພັດພາກຈາກລູກເມຽໄປຍ້ອນເປັນໄຂ້ມາລາເລຽ. ເຂົາໄດ້ຕິດພະຍາດນີ້ໃນເວລາ ທີ່ຂັບລົດເດີນທາງ ໄປຕ່າງແຂວງ ຊຶ່ງຫລາຍເທື່ອຫລາຍທີຕ້ອງໄດ້ນອນກາງດົງກາງປ່າ. ເຂົາລົ້ມປ່ວຍຢູ່ຫລາຍມື້ ແລະ ໄປຕາຍຢູ່ໃນໂຮງພະຍາບານ.

ນາງຄິດເຖິງຄາວຫລັງ, ຄິດອາໄລຫາຜົວຊຶ່ງບໍ່ມີວັນທີ່ຈະຫວນກັບມາຫາອີກ ແລ້ວກໍນ້ຳຕາລ່ເບົ້າ.

ຕອນຜົວຕາຍໃຫມ່ໆ ນັ້ນຄອບຄົວຂອງນາງກໍພົບກັບຄວາມຫຍຸ້ງຍາກທາງດ້ານການເງິນ. ທຶນກ້ອນຫນຶ່ງທີ່ທາງບໍລິສັດຊ່ວຍນັ້ນ ກໍໄດ້ພຽງ ແຕ່ມາເຮັດບຸນ ປົງສົບ, ຫວິດຈາກນັ້ນ ຄອບຄົວຂອງນາງ ກໍຢູ່ໃນ ສະພາບຂາດໆເຂີນໆ. ນາງຄິດຕໍ່ຂັບເງິນຫນ່ວຍດັ່ງກ່າວ, ຄິດຈະເອົາມັນໄປຂາຍແຕ່ເມື່ອມາຄິດເຫັນຜົວທີ່ນາງຮັກ ແລະ ນັບຖື, ຜົວຊຶ່ງເຄີຍບອກເຕືອນໃຫ້ຮັກສາມູນມໍລະດົກໄວ້, ນາງກໍຈຶ່ງຫັກຫ້າມໃຈແລ້ວກໍຕັດສິນໃຈຜ່ານຜ່າອຸປະສັກໂດຍສຸມສະຕິປັນຍາຫາລ້ຽງກຸ້ມຄອບຄົວດ້ວຍທຸກວິທີທີ່ນາງຈະພໍເຮັດໄດ້ ຄືເຮັດເຂົ້າເດືອນສົ່ງໃຫ້ຄອບຄົວ ຂ້າລາຊະການທີ່ບໍ່ມີຂໍ້ສະດວກໃນການຄົວກິນດ້ວຍຕົນເອງ.

ນາງປະກອບວຽກງານ ລ້ຽງເຂົ້າເດືອນ ຂ້າລາຊະການນີ້ຕິດຕໍ່ກັນເປັນເວລາຫລາຍປີ. ເອົາອາຊີບນີ້ລ້ຽງລູກທັງສາມຄົນຈົນໃຫຍ່ກ້າຫນ້າບານ ຈົນມາຮອດລະບອບໃໝ່ນາງຈຶ່ງໄດ້ປ່ຽນອາຊີບໂດຍ ຫັນມາລ້ຽງເປັດລ້ຽງໄກ່ ແລະລ້ຽງກະຕ່າຍ, ອາໄສເງິນຂາຍກະຕ່າຍ ແລະ ຂາຍໄຂ່ເປັດໄຂ່ໄກ່ ນາງກໍສາມາດຜ່ານຜ່າຄວາມຫຍຸ້ງຍາກທາງດ້ານເສດຖະກິດໄປໄດ້ ແລະ ມີເຄື່ອງຢູ່ຂອງກິນລ້ຽງລູກເປັນປະຈຳທຸກມື້ບໍ່ໄດ້ຂາດເຂີນ. ແຕ່ການຈະຊື້ໂມງຫນ່ວຍຫນຶ່ງໃຫ້ລູກນັ້ນ ມັນກໍເປັນເລື່ອງໃຫຍ່ ສຳລັບນາງເພາະລາຄາມັ່ນແພງເກີນກວ່າຄົນຖານະສ່ຳນາງຈະຊື້ໄດ້ ຖ້າບໍ່ໄປຢືມຫລືເອົາສິ່ງຂອງທີ່ມີຄ່າໄປຈຳສາກ່ອນ.

ພາຍໃນເຮືອນງຽບສະຫງັດ, ປ່ອງຢ້ຽມດ້ານເຫນືອໄຂອ້າໄວ້ປ່ອຍໃຫ້ແສງສະຫວ່າງຜ່ານເຂົ້າມາ. ຢູ່ຊື່ປ່ອງຢ້ຽມມີໂຕະຫນ່ວຍຫນຶ່ງ ຊຶ່ງເຮັດດ້ວຍໄມ້ ແປ້ນແກັດສິບຄ້າ. ເທິງໂຕະມີປຶ້ມ ຢອງກັນໄວ້ຢ່າງເປັນລະບຽບ ແລະ ອຸປະກອນການຂຽນອື່ນໆ. ນັ້ນແມ່ນໂຕະຂອງດວງສິນ ລູກຊາຍຂອງນາງ ຊຶ່ງຮຽນຈົບຊັ້ນອຸດົມປີນີ້ ແລະ ຈະໄດ້ໄປຮຽນຕໍ່ຂັ້ນມະຫາວິທະຍາໄລ ໃນປະເທດສັງຄົມນິຍົມອ້າຍນ້ອງທີ່

ທະວີບເອີຣົບຕາເວັນອອກ. ດວງສິນບໍ່ຢູ່ເຮືອນ ເຂົາໄປເຂົ້າ ສູນບຳລຸງເພື່ອກຽມຕົວເດີນທາງ ພ້ອມກັບໝູ່ຈາກຫລາຍ ໂຮງຮຽນດ້ວຍກັນ. ເຂົາເປັນລູກຊາຍດຽວຂອງນາງ ແລະ ເປັນລູກຜູ້ທີສອງ.

ດວງສິນມີຫລາຍຢ່າງທີ່ດີພໍ ເຊັ່ນໜ້າຕາ ແລະ ນິດໄສໃຈຄໍ ຊ່າງລົມ ແລະ ມັກເຮັດນັ້ນເຮັດນີ້ ທີ່ເປັນເຄື່ອງໃຊ້ພາຍໃນເຮືອນ. ເມື່ອຜົວຕາຍ ນາງເພົາກໍເພີ່ມຄວາມຮັກແພງຖະນຸຖະໜອມ ລູກຊາຍຂຶ້ນຫລາຍຕໍ່ ປານກັບວ່າ ຄວາມຮັກ ທີ່ນາງເຄີຍມອບໃຫ້ຜົວນັ້ນ ໄດ້ມາໂຮມໃສ່ດວງສິນທັງໝົດ. ນາງລ້ຽງລູກດ້ວຍຄວາມພາກພຽນ, ອົບຮົມສັ່ງສອນດ້ວຍຄວາມເອົາໃຈໃສ່, ລູກທຸກຄົນ ປະຕິບັດຕົນເປັນຄົນດີ. ຜູ້ທີ່ແຕ່ງດອງອອກເຮືອນໄປສ້າງເປັນຄອບຄົວໃຫມ່ກໍຫມັ່ນມາປານແມ່ເລື້ອຍໆ. ຊີວິດພາຍ ໃນຄອບຄົວມີຄວາມສະຫງົບສຸກ, ບໍ່ມີເລື່ອງເດືອດຮ້ອນອັນໃດ, ແຕ່ວັນເວລາທີ່ ລູກຊາຍຈະຈາກໄປຕ່າງປະເທດ ກໍຫາບັນໄກ້ເຂົ້າມາເລື້ອຍໆ. ນາງບໍ່ປາກຄືດເລີຍ ເພາະຫົວໃຈມັນຕົກຫວ່າງໆ. ຕົນມືກໍສັ່ນໆ.

ແມວໂຕຫນຶ່ງ ມາເພື່ອຢູ່ຂ້າງນາງ ນາງເທື່ອມັກທຳ

ລາຍຄວາມງຽບດ້ວຍການຮ້ອງສຽງ " ແມວໆ " ຄ່ອຍໆ ເບົາໆ. ບາງເທື່ອມັນເອົາເລັບຄູດຂັນເງິນທີ່ນາງຈັບຢູ່ໃນມື ຈົນນາງຕ້ອງໄດ້ໄລ່ມັນອອກໄປ, ບໍ່ດົນມັນກໍກັບມາອີກ, ມັນ ເປັນສັດຮູ້ຄວາມ, ສະຫລາດ ຊຶ່ງວາລີ ລູກສາວຫລ້າຮັກ ມັນເປັນພິເສດ. ມັນຄຸບຫນຸເກັ່ງ ແລະ ມັກປອກກັບວາລີ ສະເຫມີ. ບາງເທື່ອການປອກກັນກໍມ້ວນທ້າຍດ້ວຍການ ຜິດແຂກັນ ໂດຍແມວເປັນຝ່າຍຖືກຕີຈົນຮ້ອງສຽງດັງແສບ ຫູ.

ຂ້າງຝາໃກ້ໆປ່ອງປ້ຽມ ມີຂັນຫມາກວາງຢູ່ ແປະກັບ ຫັ້ນມີປາແຫ້ງ ຊຶ່ງລູກສາວກົກ ເອົາມາໃຫ້ຫວ່າງເຊົ້ານີ້. ແມວໂຕນັ້ນມັກໄປໃກ້ໆທີ່ປາແຫ້ງ ແຕ່ນາງເພິ່ງຮ້ອງໃສ່ ມັນກໍບໍ່ກ້າເຮັດຫຍັງ.

ນາງຈັບເອົາຂັນເງິນໄປມ້ຽນໄວ້ ແລ້ວຍ່າງໄປທີ່ປ່ອງ ປ້ຽມ, ແມວໂຕນັ້ນກໍຍ່າງເຟືອແຄ່ງເຟືອຂາໄປນຳ. ນາງຈັບ ເອົາແວ່ນນ້ອຍທີ່ວາງຢູ່ໂຕະລູກຊາຍມາແຍງເບິ່ງ. ດວງ ຕາຄູ່ນັ້ນມີຮ່ອງຮອຍຂອງນ້ຳຕາ. ນາງບໍ່ງາມແຕ່ກໍບໍ່ຂີ້ຮ້າຍ ເຖິງວ່າອາຍຸປ່າງເຂົ້າ ໔໐ ແລ້ວ, ທ່າທາງວ່ອງໄວສົມກັບ ເປັນຜູ້ທີ່ລ້ຽງລູກຈົນໃຫຍ່ ກ້າໜ້າບານທັງໆ ທີ່ບໍ່ມີຜົວຫາ

ຊ່ອຍ. ນາງເຄີຍຄຶດຫາການແຕ່ງດອງໃໝ່ຄືກັນ. ແຕ່ມາຣິນຕອງເບິ່ງເຖິງຊາຍຜູ້ເໝາະສົມ, ຜູ້ທີ່ຈະເຂົ້າໃຈກັນໄດ້, ຜູ້ທີ່ຈະຮັກລູກ ແລະ ບໍ່ເປັນໄພແກ່ລູກຂອງນາງຊຶ່ງມີແມ່ບິ່ງຕັ້ງສອງຄົນ ແຕ່ນາງກໍແນມບໍ່ເຫັນຜູ້ໃດ, ຫລືນາງທີອາດເປັນເພາະ ນາງບໍ່ໄດ້ ເສາະສະແຫວງຫາກໍເປັນໄດ້ຫາກພຽງແຕ່ຄຶດຊື່ໆ.

ນາງເອົາແພມົນມາຊັບງໍທີ່ຣິມຕາ. ວາງແອ່ນລົງໄວ້ແລ້ວເບິ່ງໄປທີ່ນອກປ່ອງປ້ຽມ. ຄອກກະຕ່າຍລຽນກັນເປັນແຖວຢູ່ແຄມຮົ້ວ, ມີກະຕ່າຍ ໒໐ ໂຕ ໂດຍບໍ່ນັບໂຕນ້ອຍທີ່ເກີດໃໝ່ຈາກສາມແມ່ ແມ່ລະ ໓ - ໗ ໂຕ. ໄກ້ງຫັ້ນມີຄອກເປັດຊຶ່ງມີເປັດທັງໝົດ ໕໒ ໂຕ. ຈຳນວນໜຶ່ງພວມລອຍຫລິ້ນຢູ່ສະນ້ຳຂ້າງເຮືອນ. ສາມແມ່ລູກ ຊ່ອຍກັນລ້ຽງກະຕ່າຍ ແລະ ເປັດເຫລົ່ານີ້. ຕື່ນເຊົ້າມານາງວາລີ ເກືອເປັດ, ດວງສົນເກັບຫຍ້າໃຫ້ກະຕ່າຍ ສ່ວນແມ່ນັ້ນເຮັດວຽກເຮືອນຊານ ແລະ ແຕ່ງຢູ່ຄົວກິນໄວ້ຖ້າລູກ ຕໍ່ຈາກນັ້ນກໍລົງໄປເບິ່ງແຍງສວນຜັກ.

ນາງແນມເບິ່ງໜານຜັກບົ້ງເຫັນຫຍ້າ ຂຶ້ນຮົກຫລາຍແລ້ວ. ຜັກບົ້ງເຫລົ່ານີ້ແມ່ນປູກໄວ້ເພື່ອລ້ຽງກະຕ່າຍເປັນ

ສ່ວນໃຫຍ່, ບາງເທື່ອບາງກໍເກັບເອົາມາກິນ. ນາງຖ່າຍເສື້ອແລ້ວລົງເຮືອນຍ່າງໄປເອົາສຽມຢູ່ກ້ອງລ່າງແລ້ວກໍເລີຍໄປຫາໜານຜັກບົ້ງ ຈັດການຫລົກຫຍ້າ ດ້ວຍຄວາມເອົາໃຈໃສ່, ຫຍ້າບາງຕົ້ນທີ່ຫລົກຍາກບາງກໍເອົາສຽມສັບແລ້ວກໍຖູນດິນໃສ່ບ່ອນ ທີ່ມັນເປ່ເພ. ທັງໝົດມີຜັກບົ້ງຢູ່ສິບໜານ ບໍ່ນັບສ່ວນທີ່ປູກໄວ້ແຄມສະຊຶ່ງເປັດແຫນກິນເປັນປະຈຳທຸກມື້.

ແສງແດດຮ້ອນຂຶ້ນ ເລື້ອຍໆ, ນາງເຮັດວຽກງານຢູ່ຜູ້ດຽວ ເຫື່ອຍ້ອຍຕາມໃບໜ້າ ແລະ ຄາງ, ທາງໃຈກໍຄຶດຫາເລື່ອງທີ່ລູກຊາຍຈະໄປຮຽນຕໍ່ທີ່ຕ່າງປະເທດ, ຄຶດຫາໂນງໃສ່ແຂນໃຫ້ລູກ, ຄຶດໃສ່ຂັນເງິນໜ່ວຍນັ້ນແລ້ວ ກໍຄຶດຮອດຄຳເວົ້າຂອງຜົວ ທີ່ໃຫ້ຮັກສາມູນມໍລະດົກໄວ້. ນາງເຫັນວ່າແນວຄິດຂອງຜົວມີສ່ວນຖືກ. ເພາະມີຫລາຍຄົນເອົາເຄື່ອງເກົ່າຂອງແກ່ທີ່ເປັນມູນມໍລະດົກ ໄປຂາຍຫລືເອົາໄປຈຳນຳແລ້ວກໍບໍ່ສາມາດໄປໄຖ່ຄືນຫລືຊື້ ໃໝ່ໄດ້. ມີແຕ່ເອົາອັນໃໝ່ໄປຂາຍ ຫລືເອົາໄປຈຳດ້ວຍລາຄາຖືກ ຕື່ມອີກແລ້ວ ເຄື່ອງມູນມໍລາດົກເຫລົ່ານັ້ນກໍໝົດໄປ ກາຍເປັນຄົນບໍ່ມີພື້ນຖານໝັ້ນຄົງ.

ການຫລິກຫຍ້າສຳເລັດໄປສາມໜາບ ບາງກໍ່ຂຶ້ນຈາກສວນຜັກ ແລະ ໄດ້ເກັບເອົາ ຜັກບົ້ງສ່ວນໜຶ່ງເພື່ອນຳເຜື່ອແຕ່ງອາຫານສູ່ລູກກິນ. ຕໍ່ມາບໍ່ດົນນາງວາລີກໍກັບມາແຕ່ໂຮງຮຽນ.

ມື້ລຸນມາ ເວລາ ໙ ໂມງເຊົ້າ ນາງເພົາໄປສຳນັກຕາແສງ ເພື່ອຂໍຊື້ ຫົວອາຫານ ມາໃຫ້ເປັດໄກ່. ມີຄົນຈຳນວນໜຶ່ງມາອັ່ງອໍ່ຢູ່ກ່ອນແລ້ວທີ່ໜ້າຫ້ອງ ຊຶ່ງຕິດກັບຫ້ອງສະຫະກອນ, ມີສຽງເວົ້າໂສ້ເຫລ້ກັນເປັນວົນໆ. ນາງເພົາເຂົ້າໄປໃກ້ໆ ກໍເຫັນພາບອັນຂັດເຄືອງຕາ ນັ້ນຄືເຄື່ອງເງິນເຊັ່ນຂັນເງິນໂອເງິນຢູ່ໃນສະພາບບູບບ້ຽວບິດ: ບໍ່ມີຮ່ອງຮອຍຂອງຄວາມງາມເຫລືອຢູ່. ນັ້ນຄືກັນກັບກະປອງນົມເປົ່າທີ່ຖືກທຸບຕີດ້ວຍໄມ້ຄ້ອນໜັກໆ ຫລາຍສິບບາດໂດຍບຸກຄົນທີ່ມີອາລົມແຄ້ນເຄືອງ

ປະຊາຊົນຜູ້ມາຊື້ເຄື່ອງສະຫະກອນ ເມື່ອໄດ້ມາເຫັນພາບດັ່ງກ່າວກໍ່ພາກັນສ້ຖາມພະນັກງານສຳນັກຕາ ແສງຈຶ່ງໄດ້ຮັບຄຳຊີ້ແຈງວ່າ ແມ່ນສິ່ງຂອງທີ່ຍຶດໄດ້ຈາກພໍ່ຄ້າທີ່ພວມຈະນຳຂ້າມຟາກໄປຂາຍຝັ່ງໄທ, ແຕ່ກອງຫລອນຕິດຕາມຈັບໄດ້ຂະນະຂົນລົງເຮືອຕອນຂ້ອນຊິແຈ້ງຄືນນີ້. ຜູ້

ຖືກຈັບເປັນພໍ່ຄ້າຈາກຝັ່ງໄທຄົນຫນຶ່ງ ກັບເຈົ້າຂອງເຮືອອີກຄົນຫນຶ່ງ. ທັງສອງເວົ້າວ່າການທີ່ທຸບຕີຂອງເຫລົ່ານີ້ກໍເພື່ອໃຫ້ຂົນໄປໄດ້ງ່າຍ ແລະ ໄດ້ຈຳນວນຫລາຍ.

ມີສຽງວິພາກວິຈານກັນໄປຕ່າງໆນາໆວ່າ:

" ບ້ານເມືອງເອີຍ, ອັນເປັນຈັ່ງຊີ້ມັນບໍ່ສົມຄວນເອົາໄອເອົາຂັນໄປຂາຍແທ້ໆໄດ! "

" ສະນິວນໍ້... ຂ້ອຍກໍຄິດວ່າຊິເອົາໄອເງິນໄປຂາຍປຸ່ "

" ພໍ່ຄ້າຫນ້າເລືອດມັນຊິດຽມມີຊັ້ນບໍ ມັນເອົາແຕ່ຜົນປະໂຫຍດສ່ວນຕົວເປັນໃຫຍ່ ".

ນາງເພົາເບິ່ງດ້ວຍອາການສະຫງົບ ເພາະພາບທີ່ເຫັນມັນແທງເຖິງໃຈດຳຂອງນາງ. ນາງນຶກເຫັນພາບຂັນເງິນແຕ່ລະຫນ່ວຍ ກ່ອນທີ່ມັນຈະຖືກທຸບຕີ, ມັນຕັ້ງສະຫງ່າຢູ່ໃນຕູ້ແກ້ວ ຫລືວາງຢ່າງຖະນຸຖະຫນອມຢູ່ໃນຫີບ, ຕັ້ງເດັ່ນຢູ່ເທິງພາຂັວນ, ແລ້ວຕໍ່ມາເຈົ້າຂອງໄດ້ຂາຍມັນໄປ. ມັນກໍເປັນເລື່ອງທຳມະດາທີ່ມັນປ່ຽນຈາກຜູ້ຫນຶ່ງໄປເປັນສົມບັດຂອງອີກຜູ້ຫນຶ່ງ, ແຕ່ເມື່ອມາຄິດວ່າເວລາປ່ຽນຈາກເຈົ້າຂອງເດີມແລ້ວມັນຖືກນຳໄປທຸບຈົນບູບບ້ຽວແລ້ວສົ່ງໄປຂາຍຝັ່ງໄທ ນາງກໍຮູ້ສຶກເສຍດາຍ ຄືຈັ່ງວ່າອັນບູບ

ບ້ຽວວາງອ້ອມລ້ອມຢູ່ຫັ້ນ ແມ່ນຂັນເງິນມໍລະດົກຂອງຕົນຫນ່ວຍນັ້ນ. ຍິ່ງຄຶດນາງກໍຍິ່ງໃຈຫາຍໃຈສັ່ນ ຄືຈັ່ງວ່າໄດ້ເຮັດເຄື່ອງແກ້ວຂອງສູນຫລຸດມືແຕກທະລາຍ.

ນາງຕິດຕໍ່ກັບພະນັກງານສະຫະກອນ ຖ້າຢູ່ເຫິງເຕີບຕໍ່ມາກໍຖືກຮ້ອງໄປເສັຽເງິນ ແລະ ໄປຮັບເອົາຫົວອາຫານຢູ່ອີກບ່ອນຫນຶ່ງແລ້ວກໍກັບຄືນບ້ານ ພາບຂອງຂັນເງິນທີ່ຖືກທຸບຈົນບູບບ້ຽວ ໄດ້ຕິດແຫນ້ນຢູ່ໃນຫ່ວງນຶກຂອງນາງບໍ່ເລື່ອນລາງຈາງຫາຍໄປງ່າຍ.

ຕອນແລງຂອງມື້ດຽວກັນນັ້ນ ດວງສິນອອກຈາກສູນບໍາລຸງມາຢາມບ້ານ. ຜູ້ເປັນແມ່ໄດ້ເລົ່າເຫດການທີ່ໄດ້ໄປເຫັນຢູ່ສຳນັກງານຕາແສງນັ້ນສູ່ລູກຟັງ. ດວງ ສິນ ຟັງ ດ້ວຍຄວາມສົນໃຈ ແລະ ສະແດງຄວາມເສັຽໃຈຕໍ່ການເສັຽຫາຍອັນເກີດຈາກນ້ຳມືຂອງພໍ່ຄ້າເຖື່ອນທີ່ສ້າງຄວາມຈິບຫາຍໃຫ້ແກ່ສິນລະປະ, ວັດທະນະທຳ ແລະ ເສດຖະກິດຂອງຊາດ.

ຜູ້ເປັນແມ່ເວົ້າຕອບຫນຶ່ງວ່າ :

" ແມ່ຮັກລູກ ຢາກໃຫ້ລູກມີໂມງໃສ່ແຂນ ເພາະລູກກໍໃຫຍ່ເປັນບ່າວແລ້ວ, ທັງລູກເອງກໍຊິໄດ້ໄປຮຽນ ຕ່າງ ປະ

ເຫດ  ຢ່າງຫນ້ອຍແມ່ກໍປາກໃຫ້ລູກມີໂມງໃສ່ແຂນຄືຫມູ່, ແມ່ຄຶດເລື່ອງນີ້ມາໄດ້ຫລາຍມື້ແລ້ວ  ແຕ່ກໍຈົນໃຈເລີຍຄຶດວ່າຈະເອົາຂັນເງິນເຮົາໄປຂາຍ..."

" ບໍ່ແຫລ້ວແມ່ ! ບໍ່ຂາຍຂັນເງິນຂອງເຮົາເດັດຂາດ. ບໍ່ມີໂມງໃສ່ລູກກໍບໍ່ເປັນຫຍັງດອກ.  ເວລາໄປຢູ່ຕ່າງປະເທດແລ້ວລູກຊິພະຍາຍາມທ້ອນເງິນໄວ້ ບໍ່ພໍທໍ່ໃດເດືອນກໍຄົງຊິໄດ້ພໍຊື້ໂມງເປັນແນ່, ແມ່ບໍ່ຕ້ອງຄຶດຫລາຍ, ເວລາໃດທີ່ລູກຍັງມີສອງມືສອງຕີນຢູ່ ບໍ່ຈຳເປັນຊິໃຫ້ແມ່ເດືອດຮ້ອນຍ້ອນ ເຊື່ອຫມັ້ນຕໍ່ລູກເທາະແມ່...".

ສອງແມ່ລູກຈ້ອງເບິ່ງຫນ້າກັນ, ນິດໄປຊົ່ວຂະນະຫນຶ່ງ, ນ້ຳຕາຂອງຜູ້ເປັນແມ່ກໍຊຶມອອກມາຫລໍ່ເບົ້າ,  ມັນເປັນນ້ຳຕາແຫ່ງຄວາມຕື້ນຕັນໃຈ.

# ຈຳປາໜ້າບ້ານ

* ຄັ້ງຫນຶ່ງ ຢູ່ແຄມຖະຫນົນຕໍ່ຫນ້າບ້ານຂ້ອຍມີຕົ້ນຂາມຫວານ, ມັນແຜ່ກິ່ງກ້ານເປັນຮົ່ມເປັນສະບາຍ. ໃຜກາຍໄປກາຍມາກໍ່ແວ່ເຊົາ ຍາມແດດຮ້ອນອົບເອົ້າ. ຂ້ອຍເອງເປັນຜູ້ປູກເນື່ອຫລາຍປີມາແລ້ວ, ທຳອິດມັນຢູ່ໃນຮົ້ວ ແຕ່ຕໍ່ມາທາງການໂຍທາໄດ້ມາຕັດແປງ ແລະຂະຫຍາຍທາງອອກ, ຂ້ອຍໄດ້ຫຍັບຮົ້ວບ້ານເຂົ້າ ຕົ້ນຂາມເລີຍຕົກໄປຢູ່ນອກຮົ້ວບ່ອນທາງຄົນຍ່າງ.

ຂ້ອຍຊື່ນຊົມບຳໝາກຂາມຕົ້ນນີ້ ເພາະຫນ່ວຍ ມັນແຊບດີ, ທັງໃບກໍ່ເປັນພຸ່ມຂຽວງາມ ເປັນຕົ້ນໄມ້ປະດັບເພີ່ມຄວາມມີຊີວິດຊີວາໃຫ້ແກ່ບໍລິເວນຫນ້າບ້ານ. ຢ່າງເຂົ້າຫນ້າຝົນ ມັນເປັນດອກສີແສດບານເຮື່ອງເຮື່ອ ແລະຫລົ່ນລົງເປັນເດຽລະດາດຕາມພື້ນດິນ, ຕໍ່ມາບໍ່ດົນກໍ່ເປັນຫນ່ວຍນ້ອຍໆ ຊ້ອງຊາບລາບຢູ່ຕາມຍອດສູງ, ຕາມກິ່ງຕາມງ່າ, ໃຜກາຍໄປກາຍມາກໍ່ແຫງນເບິ່ງ ດ້ວຍຄວາມ

ອອນຊອນ.

ນອກຈາກຄົນກາຍຫາງ ທີ່ແວ່ຊົ້ມຣິມຕົ້ນ ຂາມ ແລ້ວຍັງມີນ້ອງນ້ອຍນັກຮຽນຈຳນວນໜຶ່ງ ພາກັນມາແວ່ເຊົາຄອງຖ້າພໍ່ແມ່ ຫລື ຜູ້ປົກຄອງມາຮັບເອົາຫລັງຈາກເລີກໂຮງຮຽນຊຶ່ງຢູ່ບໍລິເວນໃກ້ໆນີ້. ນັບດາເຊົາວະຊົນເຫລົ່ານີ້ຢູ່ໃນເຄື່ອງແບບນັກຮຽນ ໜ້າຕາສົດໃສ ພວມເປັນຕາຮັກເປັນຕາເພງ, ບາງພ່ອງນັ່ງບາງພ່ອງຢືນຫລືແລ່ນໄລ່ປອກກັນ. ມັນເປັນພາບທີ່ປະທັບໃຈຍາມທີ່ໄດ້ເຫັນເຍົາວະຊົນພວມກຳລັງສົດຊື່ນຍິ້ມແຍ້ມແຈ່ມໃສ ເວົ້າປອກເວົ້າຫົວກັນໄປມາ. ບາງມື້ຂ້ອຍເສຍເວລາຢ້ອນຕັ້ງຫລາຍນາທີຫລື ບາງເທື່ອກໍເປັນເຄິ່ງຊົ່ວໂມງໃນການເຝົ້າສັງເກດເບິ່ງເຂົາ. ເບິ່ງຜົມດຳ ແກ້ມແດງ ແລະ ບາງຄົນກໍແກ້ມໂດ້ນ, ເບິ່ງການເຄື່ອນໄຫວຂອງເຂົາ ທີ່ເປັນໄປຕາມທຳມະຊາດປາສະຈາກເລ່ຽມມານຍາ. ມີຜູ້ເວົ້າວ່າບໍ່ມີຮູບໃດຈະໜ້າເບິ່ງ ໜ້າຖະໜອມໄປກວ່າຮູບຖ່າຍເດັກນ້ອຍ ທີ່ພວມຫລິ້ນຢູ່ຕາມລຳພັງ. ຂ້ອຍເຫັນພ້ອມກັບຄວາມຄິດຄວາມເຫັນແນວນັ້ນແລະຖ້າວ່າມີກ້ອງຖ່າຍຮູບຂ້ອຍກໍຄົງຈະເສຍເວລາຕື່ມອີກ ໃນການຈອບລັກຖ່າຍຮູບໂດຍບໍ່ໃຫ້ເຂົາຮູ້ສຶກ

ຕົວ.

ສຽງເພງ, ສຽງຫົວ, ສຽງຮ້ອງປອກກັນຂອງພວກເດັກນ້ອຍ ຕະຫລອດທັງສຽງດ່າວ່າເວົ້າສຽດສີກັນ ບ່ອນບາດໝາກຂາມ ເຮັດໃຫ້ເຮົາຄຶດເຖິງອະດີດຄວາມຫລັງ ຄັ້ງທີ່ເຮົາຍັງເປັນເດັກນ້ອຍໄລ່ຫລິ້ນປອກກັນ ຢູ່ຕາມເດີ່ນບ້ານ, ຂ້ອຍຮູ້ສຶກເປັນສຸກບານໃດທີ່ຄຶດຫາອະດີດ ຂອງຊີວິດໃນໄວເດັກອັນເຕັມໄປດ້ວຍຄວາມອົບອຸ່ນ, ຄວາມສົດຊື່ນ ແລະຄິດຢາກໃຫ້ວັນເວລາແຫ່ງຄວາມຫລັງເຫລົ່ານັ້ນ ກັບຄືນມາອີກ. ຂ້ອຍບໍ່ຮູ້ສຶກເສຍດາຍທີ່ເດັກນ້ອຍພາກັນແຫມ້ນເອົາໝາກຂາມມາກິນ, ແຕ່ທີ່ເປັນຫ່ວງກໍຄືບາງຄົນປີນຂຶ້ນເທິງກົກແລະບາງຄົນກໍເອົາໄມ້ຄ້ອນຄ່ວາງໃສ່.ຫລາຍໆເທື່ອຂ້ອຍຕ້ອງໄດ້ຮ້ອງບອກວ່າ: " ລະວັງຕົກເນີ້! ໄມ້ຄ້ອນຊິຕົກຖືກຫົວກັນໃດ!".

ຫວິດຈາກສຽງຮ້ອງບອກ ຄວາມງຽບກໍປະກົດຂຶ້ນຊົ່ວຂະນະໜຶ່ງ. ຜູ້ທີ່ຂຶ້ນຢູ່ເທິງກໍຄ່ອຍໆລົງມາ, ຜູ້ທີ່ຈັບໄມ້ຄ້ອນກໍວາງຖິ້ມ, ແຕ່ພໍລັບຕາຂ້ອຍບໍ່ດົນ ສຽງແຊວໆກໍດັງຂຶ້ນອີກ, ຂ້ອຍເຄີຍບອກເຂົາວ່າ: " ກົກຂາມນີ້ຢູ່ແຄມຖະໜົນ ມັນເປັນສົມບັດຂອງທຸກຄົນ, ສະນັ້ນຕ້ອງແບ່ງປັນ

ກັນກິນ ແລະ ຢ່າທຳລາຍມັນຖິ້ມ, ມັນເປັນສິ່ງປະດັບບ້ານ ເມືອງໃຫ້ມີຊີວິດຊີວາ. ນົກກົກໄມ້ຢູ່ບ່ອນໃດກໍມີຄວາມສົດ ຊື່ນຢູ່ບ່ອນນັ້ນ".

ຊີວິດຂ້ອຍຜູກພັນກັບໝາກຂາມຕົ້ນນີ້ ມາເປັນເວລາ ດົນນານ, ຂ້ອຍຮູ້ສຶກສົດຊື່ນຍາມດອກມັນບານ, ຮູ້ສຶກຫ່ຽວ ແຫ້ງແລ້ງໃນຍາມໃບມັນຫລົ່ນ. ຂ້ອຍຮັກຕົ້ນໄມ້ໃບຫຍ້າ ແລະ ປາຖະໜາໃຫ້ຖະໜົນທຸກເສັ້ນໃນນະຄອນວຽງຈັນ ມີຕົ້ນໄມ້ປາຍໄປຕະຫລອດສອງຟາກທາງ, ຫລຽວໄປທາງ ໃດກໍໃຫ້ເຫັນແຕ່ຄວາມຮົ່ມເຢັນ, ເປັນນະຄອນແຫ່ງຄວາມ ສົດຊື່ນ ແລະ ສົດໃສທຸກຮ່ອມທຸກແຈ.

ແຕ່ແລ້ວມານັ້ນໜຶ່ງ ຂ້ອຍກັບຄືນບ້ານຫລັງຈາກເລີກ ການກໍພົບກັບຄວາມເສົ້າໂສກລະຫລົດໃຈ.ກົກຂາມຖືກຕັດ ເຫລືອແຕ່ຕໍ່ເປັນກຸດດຸດສູງພຽງຫົວເຂົ່າ, ໃບແລະງ່າຂອງ ມັນກໍກອງໂອະໂບະຕາມພື້ນດິນ, ບໍລິເວນໜ້າບ້ານແຈ້ງ ຈ່າງປ່າງ ລົມລ່ວງດີເປັນທີ່ສະຫວາດຕາ ແຕ່ໃນຫົວໃຈ ຂອງຂ້ອຍມັນວາບຫວາມສັ່ນສະເທືອນດັ່ງມີສ່ວນໃດສ່ວນ ໜຶ່ງຂອງຮ່າງກາຍໄດ້ຂາດເສຍໄປ. ຂ້ອຍຢືນຊື່ງຢູ່ບ້ານ ເວົ້າຫຍັງບໍ່ອອກ. ຫລຽວໄປທີ່ປາກຮ່ອມບ່ອນຖະໜົນນີ້

ດິກໃສ່ຖະໜົນໃຫຍ່ເຫັນຕົ້ນໄມ້ຍັງເຫລືອຢູ່ສອງຕົ້ນ ແຕ່ປາຍກຸດ. ນອກນັ້ນກໍເຫັນລົ້ມລະເນດລະນ່າວໄປຕະຫລອດທາງ. ຂ້ອຍເຂົ້າໄປໃນບ້ານແລ້ວສອບຖາມຄົນໃນເຮືອນ.

" ພວກໃດມາຕັດຕົ້ນໄມ້ຢູ່ແຄມທາງນີ້ຣື ! ".

ເມຍຂ້ອຍຕອບວ່າ:

" ພວກບໍລິສັດຮັບເໝົານ່າ! ເຂົາວ່າມັນກີດສາຍໄຟຟ້າ "

" ອັນນີ້ມັນເປັນການທຳລາຍ ມຸ້ນອັບບັບຈັ້ງຊີ້".

" ຂ້ອຍເວົ້າແລ້ວເວົ້າອີກວ່າ: ບໍ່ປາກໃຫ້ຕັດ ຂໍໃຫ້ຮານແຕ່ງ່າທີ່ມັນເດ່ໄປຫາສາຍໄຟຫລືວ່າຕັດແຕ່ງ່າສູງ ຈຶ່ງວ່າຕ່ານັ້ນໄວ້ຈັກສອງສາມງ່າເພື່ອບໍ່ໃຫ້ມັນຕາຍ ແຕ່ເຂົາບໍ່ຍອມຟັງ ບໍ່ແມ່ນພວກກິນໄຟຟ້ານ່າ, ມັນແມ່ນພວກຮັບເໝົາຈຶ່ງເວົ້າຍາກ ".

" ໝົດແລ້ວ!... ບໍ່ມີຮົ່ມໃຫ້ຄົນຊົ້ນອີກແລ້ວ! ປູກຕົ້ນໄມ້ຕົ້ນໜຶ່ງກ່ວາຊິໃຫຍ່ປານນີ້ກໍຕ້ອງຫລາຍປີ " ຂ້ອຍຈົ່ມຢ່າງນ້ອຍໃຈ.

" ຜູ້ໃດກໍຮ້ອງຂໍບໍ່ປາກໃຫ້ຕັດຈຳດົນ ລຸງໜຶ່ງຢູ່ປາກຮ່ອມແລ່ນໄປບອກທາງກຳແພງນະຄອນ ໃຫ້ມາເບິ່ງແຍງ

ຊ່ອຍ. ເມື່ອເຈົ້າຫນ້າທີ່ມາຮອດ ການຕັດກໍ່ປຸດສະງັກໄປ ຊົ່ວຄາວ. ເຈົ້າຫນ້າທີ່ກຳແພງແນະນຳໃຫ້ຕັດແບບຈິງງ່າ ຕ່ຳໄວ້ເພາະຕົ້ນໄມ້ແຄມຖະຫນົນເສັ້ນນີ້ໄກສາຍໄຟ ຫລາຍ ສົມຄວນ, ດັ່ງນັ້ນ ຕົ້ນຝາງສອງຕົ້ນຢູ່ປາກຮ່ອມຈຶ່ງຍັງ ເຫລືອຢູ່, ພຽງແຕ່ປາຍກຸດກໍບໍ່ເປັນຫຍັງ ຄົງບໍ່ຕາຍ".

ຫລັງຈາກນັ້ນມາ ຕໍ່ຫນ້າບ້ານບໍ່ມີເດັກນ້ອຍສົ່ງສຽງ ແຈ້ວຈ້າວ ບໍ່ມີສຽງຫົວຍອກລໍ້ກັນອີກ, ມັນມິດງຽບເປົ່າ ປ່ຽວ ມີແຕ່ແສງແດດອັນຮ້ອນຈັດເຈືອຈານໄປທົ່ວບໍລິເວນ ນັ້ນ, ຂ້ອຍຮູ້ສຶກແຫ້ງແລ້ງໃນຫົວໃຈແລະເສຽດາຍຢູ່ບໍ່ເລີກ ບໍ່ແລ້ວ.

ຂ້ອຍຄຶດຢູ່ຫລາຍມື້ ຄຶດຫາແນວຕົ້ນໄມ້ທີ່ຈະເອົາມາ ປູກໃຫມ່ແທນ, ວ່າຈະເອົາຕົ້ນຫມາກນ້ຳນົມມາປູກເພາະ ວ່າເຫັນມັນເປັນຮົ່ມດີ ແຕ່ຄົງບໍ່ພົ້ນຖືກຕັດຢູ່ເລື້ອຍໆເພາະ ງ່າມັນສູງຊັນເປັນໂຊກໂລກ ອາດເດ່ໄປຕິດກັບສາຍໄຟຟ້າ, ຄຶດຈະເອົາຕົ້ນມ່ວງຕົ້ນລຳໄຍມາປູກ ແຕ່ພິຈາລະນາເບິງ ຄັກໆແລ້ວກໍຈະຖືກຕັດຄືກັບຕົ້ນຂາມ. ອີກປະການຫນຶ່ງ ຕົ້ນໄມ້ທີ່ກິນຫມາກນັ້ນ ມັນດຶງດູດໃຈເດັກນ້ອຍໃຫ້ປີນຂຶ້ນ ແລະອາດຈະຕົກລົງມາເປັນອັນຕະລາຍແກ່ຊີວິດກໍເປັນໄດ້,

ຂ້ອຍບໍ່ປາຖະໜາເຫັນເດັກນ້ອຍ ຫລືໃຜກໍ່ຕາມຕົກຕົ້ນໄມ້ ເພາະມັນເປັນພາບທີ່ສະເທືອນໃຈ, ດີບໍ່ດີຕົນເອງອາດຈະເປັນຫົວໃຈວາຍຕາຍກ່ອນຜູ້ປະສົບອຸບັດເຫດນັ້ນຊ້ຳ, ຂ້ອຍຄິດຈະເອົາຕົ້ນໄມ້ທີ່ມີດອກງາມໆນັ້ນມາປູກ ແຕ່ບໍ່ມີເວລາທີ່ຈະໄປຂົນຂວາຍເອົາມາ ຈຶ່ງໄດ້ແຕ່ແນມໄປທາງຫລັງບ້ານຕົນເອງ ເຫັນຕົ້ນຈຳປາພວມບານດອກສີຂາວ ສະອາດງາມຕາ ສົ່ງກິ່ນຫອມຫວນບໍ່ວ່າຍາມເຊົ້າຍາມສວາຍ ແລະ ຍາມແລງ, ຕົ້ນໜຶ່ງຢູ່ແຈຮົ້ວອີກຕົ້ນໜຶ່ງຢູ່ຂ້າງເຮືອນຄົວ.

ຂ້ອຍລົງມືປູກຕົ້ນດອກຈຳປາສາມຕົ້ນໃສ່ແຄມທາງ ຕໍ່ໜ້າບ້ານໂດຍເຮັດລະຍະຫ່າງກັນພໍສົມຄວນ ຄວາມຈິງຂ້ອຍປາກປູກຫລາຍກວ່ານັ້ນແຕ່ຢ້ານມັນຖີ່ກັນໂພດເພາະບ້ານ ຂ້ອຍບໍ່ກວ້າງປານໃດ. ຕົ້ນດອກຈຳປາມັນປູກງ່າຍພຽງແຕ່ຕັດເອົາງ່າຍາວປະມານຄ່າແຂນຫລືຄ່າວາມາຝັງໄວ້ກໍ່ໄດ້ແລ້ວ. ນອກຈາກປູກໃສ່ຕໍ່ໜ້າບ້ານຕົນເອງແລ້ວຂ້ອຍຍັງເອົາງ່າດອກຈຳປາໄປຢາຍໃຫ້ຫລາຍໆຄົນ ທີ່ຢູ່ທາງຮ່ອມດຽວກັນປູກອີກ. ແຕ່ລະຄົນກໍ່ປູກດ້ວຍຄວາມເອົາໃຈໃສ່ ແລະ ວາງໄລຍະໃຫ້ສະໝ່ຳສະເໝີກັນ. ອັນນີ້

ມັນເຮັດໃຫ້ຂ້ອຍມີຄວາມຊົມຊື່ນດີໃຈ ແລະ ເຊື່ອວ່າທາງການບ້ານເມືອງກໍຈະຮູ້ສຶກເຊັ່ນດຽວກັນ.

ຕົ້ນດອກຈຳປາທີ່ປູກໃຫມ່ນີ້ ຂ້ອຍໄດ້ອ້ອມຮົ້ວໄວ້ເພື່ອບໍ່ໃຫ້ຄົນ ຫລືສັດໄປຕ້ອງໄປຊູນອັນຈະເຮັດໃຫ້ມັນຫັກໂຄ່ນເສັຽຫາຍຕາຍໄປ. ຂ້ອຍຫົດນ້ຳບຳລຸງເປັນຢ່າງດີ. ເຊົ້າ, ສວາຍ, ບ່າຍ, ແລງຂ້ອຍແຍງແຕ່ຕົ້ນດອກຈຳປາເຫລົ່ານີ້. ເວລາຜ່ານໄປຫລາຍມື້ຫລາຍເດືອນມັນກໍປົ່ງໃບອ່ອນ, ຕໍ່ມາກໍເປັນໃບຂຽວສົດຊື່ນຊູງ່າສູງຂຶ້ນເທື່ອລະເລັກລະນ້ອຍ.

ຫລາຍປີຕໍ່ມາປູ່ຕໍ່ຫນ້າບ້ານຂອງຂ້ອຍ ແລະຕະຫລອດສາຍທາງຮ່ອມນີ້ກໍມີຮົ່ມເປັນສະບາຍ, ເປັນຮົ່ມຕົ້ນດອກຈຳປາທີ່ມີໃບດົກຫນາ, ຕົ້ນດອກຈຳປາບໍ່ຕ່ຳ, ບໍ່ສູງພໍປະມານ, ມັນເປັນຕົ້ນດອກໄມ້ທີ່ບານປູ່ທຸກລະດູການ, ບານຕ້ອນຮັບສາຍຝົນ, ສາຍລົມ ແລະ ແສງແດດ, ມັນເປັນດອກໄມ້ນຶ່ງຂວັນຂອງດິນແດນລາວ.

ປູ່ຕໍ່ຫນ້າບ້ານຂ້ອຍໄດ້ກັບຄືນມາມີຊີວິດຊີວາອີກ, ມີຄົນມາແວ່ເຊົາຊົ້ນຮົ່ມ, ມີເດັກນ້ອຍມານັ່ງຫລິ້ນປອກກັນສິ່ງສຽງນັນນອງດັງແຈ້ວຈ້າວ. ເຂົາພາກັນເກັບດອກຈຳປາມາກອງໄວ້ ບາງຄົນກໍຮ້ອຍເປັນພວງມະໄລແລ້ວກໍເອົາ

ມາຄ້ອງໃສ່ຄໍໃສ່ແຂນ, ມັນເປັນພາບທີ່ຝັງແໜ້ນໃນຫົວໃຈຂອງຜູ້ທີ່ໄດ້ພົບເຫັນທຸກຄົນ.

# ຊຸກຍູ້

* ພວກຂ້ອຍ ພວມຊີ່ລົງມືຊຸກລົດຄັນໜຶ່ງ ຊຶ່ງເຈົ້າຂອງໆມັນຕິດຈັກບໍ່ໄດ້, ມັນເປັນລົດໂຟກສີແສດ ສະພາບກາງເກົ່າກາງໃໝ່.

ເວົ້າເລື່ອງການຊຸກລົດ ຂ້ອຍນຶກເຫັນຫລາຍກໍລະນີທີ່ເກີດຂຶ້ນແລ້ວກໍອົດນໍາເອົາມາຄຶດບໍ່ໄດ້. ຕົວຂ້ອຍເອງກໍເຄີຍປະສົບມາ ຄືເຄີຍຍູ້ລົດໃຫ້ຜູ້ອື່ນ, ຍູ້ໄປໄກໆ ອອກແຮງສຸດຂີດຈົນເຫື່ອຊຶມຈຶ່ງຕິດຈັກໄດ້ແລ້ວຜູ້ຂັບກໍຈະສົ່ງເລັ່ງບ້ານັ້ນເພື່ອໃຫ້ເຄື່ອງຈັກແລ່ນສະດວກຂຶ້ນ ບັງຄັບລົດແລ່ນລິ້ວໄປປະພວກຂ້ອຍຜູ້ຊຸກຍູ້ໄວ້ເບື້ອງຫລັງທັ້ງໆ ທີ່ຜູ້ຂັບຍັງບໍ່ທັນໄດ້ກ່າວ " ຂອບໃຈ " ຊໍ້າ. ມີໜ້ອຍໜັກໜ້ອຍໜາທີ່ຜູ້ຂັບລົດຈະໄຄ້ງຕ່າວຄືນມາ ເພື່ອບອກຂອບໃຈ ພວກທີ່ໄດ້ຊຸກຍູ້, ສ່ວນຫລາຍແມ່ນແລ່ນໄປເລີຍ ເພາະຈະເວົ້າອັນໃດຫລືເຮັດອັນໃດອັນໜຶ່ງກໍພໍກະເທີນ. ຜູ້ທີ່ຍູ້ລົດຈຶ່ງໄດ້ແຕ່

" ກັ້ງໂກບ " ເບິ່ງລົດແລ່ນໄປຈົນລັບສາຍຕາ.

ເຖິງຈະຄຶດເຫັນ ເລື່ອງທຳນອງດັ່ງກ່າວນີ້ ແຕ່ຂ້ອຍກໍຈະນຳພາໝູ່ ຊຸກບູ້ລົດໂຟກຄັນນີ້ ເຖິງວ່າເຈົ້າຂອງຈະບໍ່ວາງກໍຕາມ. ຊຸກບູ້ເພື່ອສະແດງນ້ຳໃຈ, ເພື່ອຄວາມສາມັກຄີ.

" ຊຸກບູ້ຊ່ອຍຫົວມັນເຮັດຫຍັງ ! " ຜູ້ໜຶ່ງໃນຄະນະພວກເຮົາອອກສຽງຂັດຂືນ.

" ປະໃຫ້ມັນຕາຍຢູ່ຫັ້ນ ! " ອີກຜູ້ໜຶ່ງເວົ້າ.

" ສົມນ້ຳໜ້າມັນແດ່ " ຫລາຍສຽງຈົ່ມບໍ່ພໍໃຈເພາະເຈົ້າຂອງລົດຄັນນີ້ບໍ່ມັກອອກແຮງງານລວມໝູ່, ບໍ່ມັກໄປປະຊຸມນຳໝູ່, ບໍ່ມັກເປັນເຈົ້າກີ້ເຈົ້າການໃນທຸກວຽກງານທີ່ທາງຄຸ້ມບ້ານຈັດຂຶ້ນ ໃນໂອກາດໃດໜຶ່ງ. ແຕ່ຂ້ອຍວ່າ: " ຕ້ອງຊຸກບູ້! ".

ຂ້ອຍເປັນຫົວໜ້າໜ່ວຍ ຊຶ່ງຄອບຄົວ ເຈົ້າຂອງລົດໂຟກຄັນນີ້ສັງກັດຢູ່. ມື້ໃດມີປະຊຸມ, ມີການຮ່ຳຮຽນການເມືອງ, ມີການອອກແຮງງານຫລືເຮັດອະນາໄມຕາມຄຸ້ມບ້ານ ຂ້ອຍກໍຕ້ອງແລ່ນຂຶ້ນເຮືອນນັ້ນເຮືອນນີ້ເພື່ອບອກໃຫ້ລູກໜ່ວຍໄປຮ່ວມ. ເມື່ອຮອດເວລາ ກໍຈະເຫັນໜ້າລູກ

ໜ່ວຍທຸກຄົນ ນອກຈາກເຈົ້າຂອງ ລົດໄຟກສີແສດຄັນນີ້, ລາວມັກມີແນວອ້າງແນວນັ້ນແນວນີ້, ບໍ່ຍອມເສັຽສະລະເພື່ອໝູ່, ມີແຕ່ຫາທາງຫລີກຫ່າງຈາກມະຫາຊົນ.

ອາທິດກ່ອນນັ້ນຂ້ອຍບອກລາວວ່າ ຂໍໃຫ້ໄປຮ່ວມຂຸດຮ່ອງນ້ຳ ແຕ່ລາວກໍອ້າງວ່າຈະໄປຮ່ວມພິທີແຕ່ງດອງຂອງລູກເອື້ອຍ. ອາທິດນີ້ຂ້ອຍກໍບອກວ່າໃຫ້ລາວໄປຮ່ວມເຮັດອະນາໄມຕາມແຄມທາງ ໃນຄຸ້ມບ້ານພວກເຮົາ ແຕ່ລາວກໍບອກລ່ວງໜ້າໄວ້ກ່ອນວ່າ:

" ປ້ານບໍ່ໄດ້ໄປຮ່ວມ ເພາະຈະໄດ້ອອກ ໄປບ້ານນອກຊອກປາພື້ນເມືອງມາກິນເພາະເຮົາບໍ່ສະບາຍ".

ຄົນຜູ້ທີ່ມີແນວຄິດເຫັນແກ່ໂຕ ບໍ່ເພື່ອເຫລືອຜູ້ອື່ນນັ້ນມັນຫາກມີແນວອ້າງບໍ່ໝົດບໍ່ສ້ຽງເປັນຈັກເທື່ອ. ສ່ວນຄົນທີ່ມີຄຸນສົມບັດ. ມີສິນທຳປະຕິວັດປະຈຳໃຈນັ້ນ ເຖິງຈະມີຂໍ້ຂັດຂ້ອງໃນຄອບຄົວສ່ວນຕົວ, ເຂົາກໍຈະບໍ່ຂັດຂືນ ໃນການເຮັດວຽກອັນໃດອັນໜຶ່ງຊຶ່ງເປັນວຽກເພື່ອສ່ວນລວມ.

ພວກຂ້ອຍເລີ່ມເຮັດອະນາໄມແຕ່ ໗ ໂມງເຊົ້າໂດຍແບ່ງເປັນຈຸເປັນໜ່ວຍ. ທັງໝົດພວກຂ້ອຍມີ ໑໙ ຄົນນຳກັນຮັບຜິດຊອບສອງຟາກທາງທີ່ມີຄວາມຍາວ ໓໐໐ ແມັດ.

໒ ຄົນຢູ່ຟາກທາງເບື້ອງຊ້າຍ.  ອີກ ໒ ຄົນຢູ່ຟາກທາງເບື້ອງຂວາ ພາກັນຖາງຫຍ້າທີ່ຂຶ້ນຣົກເຮື້ອ, ເກັບຂີ້ເຫຍື້ອໃບຕອງຢູ່ຕາມແຄມທາງໄປກອງໄວ້ແລ້ວເອົາໄຟຈູດ.  ເວລາ ໗ ໂມງ ພວກຂ້ອຍເຮັດວຽກ ໄປຮອດຕໍ່ໜ້າບ້ານເຈົ້າຂອງລົດໂຟກ.  ເຮືອນລາວເປັນເຮືອນໄມ້ສອງຊັ້ນ ມີເຄື່ອງສິນຄ້າມະບິກມະບ່ອບວາງຂາຍຢູ່,  ລາວມີເມຽ ແລະ ລູກສາມຄົນ ຊຶ່ງສອງຄົນ ໄປໂຮງຮຽນປະຖົມ ແລະ ຜູ້ນ້ອຍໄປໂຮງຮຽນອະນຸບານ.

ເຈົ້າຂອງລົດພວມເອົາຜ້າເຊັດບາບພາຫະນະຂອງຕົນຢູ່ງຽບໆ ບໍ່ຍອມຫລຽວມາເບິ່ງພວກຂ້ອຍເລີຍ,  ຄົງບໍ່ກ້າປະເຊີນສາຍຕາຂອງຄົນຄຸ້ມດຽວກັນ  ທີ່ພວມສະລະເວລາ ແລະ ເຫື່ອແຮງເຮັດອະນາໄມ. ໃຜທີ່ໄດ້ຫລຽວເບິ່ງລາວກໍຈະສັງເກດໄດ້ໂລດວ່າ  ລາວມີອາການບໍ່ສະບາຍໃຈວາດໃດວາດໜຶ່ງຈຶ່ງທຳທ່າກົ້ມຈັບຫັ້ນບາຍໜີ້ພໍແກ້ເກີ້.

ພວກຂ້ອຍເຮັດວຽກໄປດ້ວຍຄວາມຟົດຟື້ນ, ມີສຽງເວົ້າສຽງຫົວ, ສຽງປອກໄຍກັນທັງເຫື່ອໄຫລຍ້ອຍຕາມໃບໜ້າແຕ່ກໍມ່ວນຊື່ນ ແລະ ພໍໃຈທີ່ໄດ້ເຮັດວຽກເພື່ອສັງຄົມ. ຕໍ່ມາລາວກໍໄຂປະຕູລົດເຂົ້າໄປນັ່ງແລ້ວຕິດຈັກ ແຕ່ຈັກບໍ່ຕິດ,

ລາວພະຍາຍາມຫລາຍເທື່ອ ແຕ່ກໍບໍ່ມີວີແວວວ່າລົດຈະຕິດ ແລະ ແລ່ນໄປໄດ້. ສັງເກດຈາກສຽງກໍພໍຮູ້ໄດ້ວ່າໝໍ້ໄຟອ່ອນບໍ່ມີກຳລັງພຽງພໍ. ຖ້າໃຊ້ແຮງຄົນຊຸກບູ້ຊ່ອຍບໍ່ດົນກໍຈະຕິດໄດ້

ລາວຫລຽວໜ້າ ຫລຽວຫລັງ ແຕ່ບໍ່ຍອມຫລຽວເບິ່ງພວກຂ້ອຍ. ຕໍ່ມາເມຍຂອງລາວກໍໄປໄລອອກມາຈາກປະຕູ ລາວເລີຍບອກໃຫ້ຊຸກລົດ ເມຍຂອງລາວ ໄດ້ປະຕິບັດຕາມ ສ່ວນລາວນັ້ນຍັງນັ່ງຈັບພວງມະໄລປູ່ຄືເກົ່າ.

ເມຍບູ້ - ລົດບໍ່ຕິງຈັກເມັດ.

ບູ້ອີກ - ລົດພໍເໜັງໜ້ອຍໜຶ່ງ.

ບາງບູ້ ! ບູ້ ! ບູ້ ! ເຊົາໜ້ອຍໜຶ່ງແລ້ວກໍບູ້. ລົດເຄື່ອນໄປບໍ່ພໍຄືບ.

ຂ້ອຍບໍ່ອາດເບິ່ງສະພາບເຊັ່ນນີ້ຕໍ່ໄປໄດ້ອີກ. ພາບທີ່ມີແມ່ຍິງຊຸກລົດບໍ່ເຄື່ອນໄຫວ. ມັນເຄືອງຕາ ແລະ ເຮັດໃຫ້ຫົວໃຈອ່ອນ, ຂ້ອຍໄບ່ຍຄວາມຫງ່າເງືອດອອກຈາກຫົວໃຈແລ້ວຊັກຊວນໝູ່:

" ໄປ ! ໄປຊຸກບູ້ ! ".

ຫລັງຈາກລັ່ງເລປູ່ຄາວໜຶ່ງ ໝູ່ກໍວາງພ້າ ວາງຈົກ

ແລະ ອຸປະກອນອື່ນໆແລ້ວຫຸ້ນໄປຫາລົດໄຟກ. ພວກຂ້ອຍສີ່ຄົນຊຸກລົດໄປໄກເຕີບປະມານ ຮ້ອຍແມັດລົດຈຶ່ງຕິດຈັກໄດ້ ສຽງດັງຕື້ດໆຂຶ້ນ ! ເຈົ້າຂອງລົດຫັນມາຍິ້ມສີຈາງໆໃສ່ພວກຂ້ອຍ ທັງເຮັດສິບເຫນັງບຸບບິບ ຄິງຈະແມ່ນກ່າວຂອບໃຈຊຶ່ງພວກຂ້ອຍຟັງບໍ່ໄດ້ຍິນ ແລະ ຖ້າວ່າໄດ້ຍິນສຽງນັ້ນກໍຄິງບໍ່ປອດໃສ ຄືມີແນວໃດແນວຫກຶ່ງ ມາດັດໃຫ້ຜິດຈາກສຽງທຳມະຊາດ, ມັນເປັນຄຳຂອບໃຈທີ່ອອກມາຈາກຄວາມຄືດລະອາຍຕົວເອງ ! .

ລົດໄຟກະແລ່ນໄປເລີຍ. ມັນກໍເປັນດັ່ງຂ້ອຍຄຶດໄວ້ນັ້ນລະ ຄືໄດ້ເອົາມືກັ້ງໂກບເບິ່ງ. ເມຍຂອງລາວຍ່າງເປັດຫນ້າເຂົ້າມາກ່າວຂອບອີກຂອບໃຈ ດ້ວຍສຳນຽງອັນນອບນ້ອມ ແລະ ເພື່ອສະແດງນ້ຳໃຈ ໄມຕີຈິດນັ້ນ ນາງນຳເອົານ້ຳຊາມາສູ່ພວກເຮົາດື່ມ.

ຫລັງຈາກດື່ມນ້ຳຊາ ເຊົາເມື່ອຍເອົາແຮງແລ້ວ ພວກຂ້ອຍກໍສືບຕໍ່ເຮັດວຽກ ດ້ວຍຄວາມເອົາໃຈໃສ່ທັງຮູ້ສຶກພູມໃຈຕື່ມຂຶ້ນທີ່ໄດ້ຊ່ອຍຄົນຜູ້ຫນຶ່ງ ໃຫ້ພົ້ນຈາກ ຂໍ້ຫຍຸ້ງຍາກ ເຖິງວ່າບຸກຄົນຜູ້ ທີ່ພວກຂ້ອຍ ໄດ້ຊ່ອຍນັ້ນ ຈະມີແນວຄິດຫລ້າຫລັງເຫັນແກ່ສ່ວນຕົວຢູ່ກໍຕາມ.

ຕົກມາຮອດຕອນບ່າຍ ພວກຂ້ອຍລົງມືເຮັດວຽກຕໍ່ອີກ, ຄາວຫນຶ່ງກໍເຫັນເຈົ້າຂອງລົດໄຟກໍ ຄັນນັ້ນແບກຄາດບ່າງ ມາຫາບ່ອນພວກຂ້ອຍເຮັດວຽກປູ່ແລ້ວເວົ້າຂຶ້ນວ່າ:

" ຂໍປະກອບສ່ວນເຮັດອະນາໄມນຳໝູ່, ຕອນເຊົ້ານັ້ນມີວຽກຫລາຍຈຶ່ງບໍ່ໄດ້ມາຮ່ວມ ".

" ລົດແລ່ນໄດ້ດີແລ້ວບໍ ? " ຂ້ອຍຖາມພໍເປັນພິທີ.

" ແລ່ນໄດ້ດີແລ້ວ " ລາວຕອບ.

" ດີໄດ້ຍິນວ່າສະຫາຍບໍ່ສະບາຍ ".

" ເຈັບເລັກໆນ້ອຍໆດອກ, ບໍ່ເປັນຫຍັງ ".

" ຄັນເຈັບກໍບໍ່ຕ້ອງເຮັດແຫລ້ວ! ພວກເຮົາບໍ່ບັງຄັບຢ້ານເສັຽສຸຂະພາບ ເທື່ອນີ້ໝູ່ເຮັດເພື່ອເຮົາ! ເທື່ອຫນ້າເຮົາຈຶ່ງເຮັດເພື່ອໝູ່ກໍໄດ້" ຂ້ອຍແນະນຳ.

" ບໍ່ເປັນຫຍັງ! ບໍ່ເປັນຫຍັງ ! ເຮົາຍັງພໍເຮັດໄດ້ປູ່ວຽກສ່ຳນີ້ " ລາວເວົ້າເຮັດສຽງເອົາຈິງເອົາຈັງ.

ແລ້ວພວກຂ້ອຍ ກໍເຮັດວຽກຕໍ່ໄປ ດ້ວຍຄວາມເຕັມອົກເຕັມໃຈ, ບໍ່ມີຄວາມຫງຸ່ງຫງິດ, ມີແຕ່ຄວາມສາມັກຄີຮັກແພງມ່ວນຊື່ນຕະຫລອດຈົນສຳເລັດຫນ້າທີ່.

ເມື່ອເລີກຈາກວຽກເຮັດອະນາໄມແລ້ວ ຂ້ອຍເວົ້ານຳໝູ່

ສອງສາມຄົນຂະບະທີ່ຍ່າງກັບບ້ານວ່າ :

" ພວກເຮົາບໍ່ພຽງແຕ່ຊຸກບູ້ລົດໃດໜື່ງ ! ເລີກລົງໄປກ່ວານັ້ນແມ່ນພວກເຮົາ ໄດ້ຊຸກບູ້ໃຫ້ຄົນຜູ້ທນຶ່ງ ເຫັນດີເຫັນພ້ອມນຳການເຮັດວຽກລວມໝູ່, ເຮັດວຽກເພື່ອສັງຄົມ ".

ພິມທີ່ໂຮງພິມແຫ່ງຊາດ
ພິມຄັ້ງທີ່ ໜຶ່ງ
ພິມຈຳນວນ 10.000 ຫົວ ຂະໜາດ 13 x 18,4
ພິມແລ້ວ ວັນທີ 15-3-1980

ລາຄາ 4,50 ກີບ